# ການປະເມີນຂອບເຂດຂອງການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນສປປລາວແລະການຄ້າໄມ້ທ່ອນຂ້າມແດນທີ່ກ່ຽວຂ້ອງ





**(ເພື່ອເປັນຖານຂໍ້ມູນສຳລັບການຄາດຄະເນຂອງການຮົ່ວໄຫຼລະຫວ່າງປະເທດ)**

ໂດຍ ທ່ານເດັນນິສ ສະເໜີພອບ

ເດືອນມິຖຸນາປີ2015

# ຄໍານິຍົມ

ຂ້າພະເຈົ້າທ່ານ ເດັນນິສ ສະເໝີໜອບ (Denis Smirnov) ຂໍສະແດງຄວາມຮູ້ບຸນຄຸນມາຍັງ ພະແນກກວດກາປ່າໄມ້(DOFI)ຂື້ນກັບກະຊວງກະສິກໍາແລະປ່າໄມ້ ແຫ່ງສປປລາວ ແລະ ຫ້ອງການກະສິກໍາແລະປ່າໄມ້ແຂວງເຊກອງ ແລະສາລະວັນທີ່ອະນຸຍາດແລະສະໜັບສະໜູນການສຶກສາຄັ້ງນີ້, ບັນດາພະນັກງານລັດ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍທຸກຂັ້ນ, ຜູ້ຕາງໜ້າໂຮງງານອຸດສາຫະກໍາໄມ້ທີ່ເສຍສະຫຼະເວລາເຂົ້າຮ່ວມກອງປະຊຸມຢູ່ແຂວງສາລະວັນ, ເຊກອງ, ຈໍາປາສັກ, ອັດຕະປື, ຫົວຖຽນເຮ້ ແລະກວງນາມເພື່ອຕອບຄໍາຖາມ ແລະສະໜອງຂໍ້ມູນຕ່າງໆໃຫ້ພວກຂ້າພະເຈົ້າ ໃນຂະນະທີ່ກໍາລັງດໍາເນີນການຄົ້ນຄວ້ານີ້. ຂ້າພະເຈົ້າຂໍຂອບໃຈເປັນພິເສດຕໍ່ ທ່ານຟານີ ເບັກເກີ້ ຜູ້ອໍານວນການໂຄງການລະຫວ່າງປະເທດCarBi(ອົງການສາກົນWWFລຸ່ມແມ່ນ້ໍາຂອງ) ທີ່ອໍານວຍຄວາມສະດວກໃຫ້ແກ່ການຄົ້ນຄວ້າ, ທ່ານ ຖັງຫງຽນຫງອກ(ອົງການສາກົນWWFຫວຽດນາມ) ແລະທ່ານສຸກສາທິດ ແກ້ວພັນສີ (ອົງການສາກົນWWFລາວ) ທີ່ຊ່ວຍເກັບກໍາຂໍ້ມູນ, ທ່ານໄບຣອັນ ມີລາໂກບສະກີ(ອົງການສາກົນWWFລັດເຊຍ)ໃນການດັດແກ້ຂັ້ນສຸດທ້າຍ, ວິກໂທເຣຍ ທີໂກໂນວາ ດັດແກ້ສໍາເນົາແລະອ່ານກວດຄືນ, ໄມເຄີລ ສະຕູວີ (ອົງການສາກົນWWFສະຫະລັດ)ແລະອ່ຽນ ເລັດຊີ(ອົງການສາກົນWWFລາວ)ຊ່ວຍເຫຼືອດ້ານບັນນາທິການ, ຈູເລຍ ເຊນກີວີກ (ອົງການທຣັນປາເຣນ ເວີດ(Transparent World)ສໍາລັບວິເຄາະພາບຖ່າຍທາງດາວທຽມ, ແລະໂຕ ຊວນ ຟຸກ (ອົງການຟໍເຣດ ເທຣັນ(Forest Trends)ໄດ້ປະກອບຄໍາຄິດເຫັນທີ່ເປັນປະໂຫຍດແລະສໍາຄັນຕໍ່ການຄົ້ນຄວ້າໃນຄັ້ງນີ້ດ້ວຍ.

ຂ້າພະເຈົ້າຂໍຮັບຜິດຊອບຕໍ່ການວິເຄາະຂໍ້ມູນ ແລະ ຂໍ້ຜິດພາດໃດໆທີ່ອາດເກີດຂຶ້ນໃນບົດລາຍງານສະບັບນີ້.

ຮູບທັງໝົດຖ່າຍໂດຍ ຂ້າພະເຈົ້າທ່ານເດັນນິສ ສະເໝີໜອບ ບໍ່ດັ່ງນັ້ນ ຈະລະບຸຊື່ຜູ້ຖ່າຍ.

# ຄຳຫຍໍ້

CarBi ໂຄງການຂອງອົງການWWF ສາກົນ"ການຫຼີກລ້ຽງການທຳລາຍ ແລະການເຊື່ອມໂຊມຂອງປ່າໄມ້ໃນເຂດຊາຍແດນພາກໃຕ້ຂອງສປປລາວແລະພາກກາງຂອງປະເທດຫວຽດນາມສຳລັບການປົກປັກຮັກສາກັກເກັບກາກບອນ ແລະຊີວະນາໆພັນໃນໄລຍະຍາວ

DAFO ຫ້ອງການກະສິກຳ ແລະປ່າໄມ້ເມືອງ

DOF ພະແນກປ່າໄມ້ເມືອງ

DOFI ພະແນກກວດກາປ່າໄມ້ເມືອງ

DONRE ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ

DPWT ພະແນກໂຍທາທິການ ແລະການຂົນສົ່ງ

EIA ໜ່ວຍງານສືບສວນສິ່ງແວດລ້ອມ

FPD ພະແນກອານຸລັກປ່າໄມ້ປະເທດຫວຽດນາມ

FIPD ກອງສຳຫຼວດ ແລະວາງແຜນປ່າໄມ້

FDI ການລົງທຶນໂດຍກົງຕ່າງປະເທດ

MAF ກະຊວງກະຊິກຳ ແລະປ່າໄມ້

MOF ກະຊວງການເງິນ

MOIC ກະຊວງອຸດສາຫະກຳ ແລະການຄ້າ

NPA ເຂດປ່າສະຫງວນແຫ່ງຊາດ

PAFO ຫ້ອງການກະສິກຳ ແລະປ່າໄມ້ແຂວງ

PFA ເຂດປ່າຜະລິດ

PFS ຂະແໜງປ່າໄມ້ແຂວງ

POFI ຫ້ອງການກວດກາປ່າໄມ້ແຂວງ

POIC ຫ້ອງການອຸດສາຫະກຳ ແລະການຄ້າແຂວງ

PONRE ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ

RWE ສົມມູນຂອງໄມ້ໂດຍລວມ

**ສາລະບັນ**

ຂໍ້ມູນຫຼັກ........................................................................................................ 1

ພາກສະເໜີ ........................................................................................................ 7

ຄວາມເປັນມາຂອງບັນຫາ ແລະ ຈຸດປະສົງ........................................................................ 9

ການປະເມີນການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍໃນລະດັບຊາດ ........................................... 15

ການປະເມີນບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍພາຍໃນແຂວງເຊກອງ............................ 28

ການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍຢູ່ໃນກຸ່ມສີ່ແຂວງພາກໃຕ້.................... 35

ແຫຼ່ງໄມ້ທ່ອນທີ່ບໍ່ມີເອກະສານຄົບຖ້ວນ ............................................................................ 41

ກໍລະນີສຶກສາທີ1: ການບຸກເບີກປ່າໄມ້ສໍາລັບໂຄງການຂຸດຄົ້ນຫີນປູນ (ແຂວງສາລະວັນ) ................ 47

ກໍລະນີສຶກສາທີ2: ການບຸກເບີກເສັ້ນທາງບ້ານຜານອນ-ບ້ານທົ່ງສາ (ແຂວງເຊກອງ) ...................... 56

ສະຫຼຸບກໍລະນີສຶກສາ.............................................................................................. 94

ຮ່ອງຮອຍຂອງບັນດາໂຮງງານປຸງແຕ່ງໄມ້ໃນການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍ .......................... 103

ປະສິດທິພາບຂອງການບັງຄັບໃຊ້ກົດໝາຍ ........................................................................ 119

ສະຫຼຸບ ............................................................................................................. 135

ຂໍ້ສະເໜີ.............................................................................................................. 140

ເອກະສານອ້າງອີງ .................................................................................................. 144

## ຂໍ້ມູນຫຼັກ

- ລັດຖະບານ ສປປລາວ ຍັງຂາດຂໍ້ມູນທີ່ຊັດເຈນກ່ຽວກັບການອະນຸຍາດຂຸດຄົ້ນໄມ້ທີ່ອອກ(ໂຄຕ້າ), ບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນແລະການສົ່ງອອກຜະລິດຕະພັນໄມ້ທີ່ຈົດທະບຽນຢ່າງເປັນທາງການ.ຕົວຢ່າງ, ການສົ່ງອອກໄມ້ລາວໄປປະເທດຈີນແລະຫວຽດນາມຈາກປີ2012-2014 ຕາມລາຍງານໂດຍບັນດາປະເທດນຳເຂົ້າເກີນໂຄຕ້າການຂຸດຄົ້ນໄມ້ປະຈຳປີໂດຍລວມແລະບໍລິມາດຂອງໄມ້ທ່ອນຕາມການສັ່ງຊື້ທີ່ຈົດທະບຽນຢ່າງເປັນທາງການຫຼາຍເທົ່າຕົວ. ອີງຕາມການລາຍງານດັ່ງກ່າວຍັງໃຫ້ຮູ້ອີກວ່າ ມູນຄ່າໂດຍລວມຂອງຜະລິດຕະພັນໄມ້ລາວເກີນມູນຄ່າຂອງຜະລິດຕະພັນໄມ້ທີ່ສົ່ງອອກຫຼາຍເທົ່າຕົວໂດຍວິເຄາະຂໍ້ມູນຈາກສະຖິຕິພາສີແຫ່ງຊາດລາວແລະຄວາມແຕກຕ່າງກັນລະຫວ່າງຊຸດຂໍ້ມູນທັງສອງນີ້ໄດ້ເພີ່ມຂຶ້ນເລື້ອຍໆ. ໃນປີ2013 ມູນຄ່າການສົ່ງອອກຢ່າງເປັນທາງການມີພຽງແຕ່8% ຂອງມູນຄ່າໂດຍລວມຂອງໄມ້ທ່ອນລາວທີ່ນຳເຂົ້າ ຕາມການລາຍງານຂອງບັນດາປະເທດປາຍທາງ.
- ອີງຕາມຂໍ້ມູນຈາກບັນດາປະເທດນຳເຂົ້າ ມູນຄ່າການສົ່ງອອກຂອງຜະລິດຕະພັນໄມ້ລາວມີການຂະຫຍາຍຕົວຢ່າງທະວີຄູນໃນຊ່ວງທ້າຍປີ2000. ຈາກປີ2009 ຫາ 2014 ໄດ້ເພີ່ມຂຶ້ນຫຼາຍກວ່າ 8 ເທົ່າຕົວ (ໂດຍເພີ່ມຂຶ້ນ 70% ໃນລະຫວ່າງປີ2013 ແລະ2014) ແລະບັນລຸເຖິງ 1.7 ຕື້ໂດລາສາຫະລັດ. ໃນປີ2014, ປະເທດຈີນແລະຫວຽດນາມໄດ້ຮັບຊື້ເຖິງ96% ຂອງການສົ່ງອອກໄມ້ລາວໃນດ້ານມູນຄ່າ (63 ແລະ33%, ຕາມລຳດັບ). ຍິ່ງໄປກວ່ານັ້ນ ການສົ່ງອອກໄປປະເທດຈີນເພີ່ມຂຶ້ນໂດຍ140% ໃນປີ2013. ການຂະຫຍາຍຕົວດັ່ງກ່າວໃນດ້ານມູນຄ່າຂອງການສົ່ງອອກໄມ້ທ່ອນລາວໄປຈີນແລະຫວຽດນາມມີສາເຫດໂດຍການເພີ່ມຂຶ້ນຢ່າງຕໍ່ເນື່ອງໃນບໍລິມາດຂອງໄມ້ທ່ອນທີ່ສົ່ງອອກແລະການເພີ່ມຂຶ້ນໃນດ້ານມູນຄ່າຂອງຈຳນວນຄືຜະລິດຕະພັນໄມ້ທີ່ສົ່ງອອກຍ້ອນມີອັດຕາສ່ວນຂອງຊະນິດໄມ້ມູນຄ່າສູງເປັນຈຳນວນຫຼາຍໃນການສົ່ງອອກຂອງລາວ.
- ການສັ່ງຫ້າມສົ່ງອອກໄມ້ທ່ອນແລະໄມ້ແປຮູບໂດຍລັດຖະບານສປປລາວ ຈາກປີ1999-2002 ທີ່ມີຈຸດປະສົງເພື່ອສົ່ງເສີມພັດທະນາການປຸງແຕ່ງໄມ້ທ່ອນຄົບວົງຈອນພາຍໃນປະເທດ ບໍ່ແມ່ນເພື່ອບັງຄັບໃຊ້ຫຼືຫຼີກລ້ຽງເນື່ອງຈາກການອະນຸຍາດຫຼາຍເທື່ອເປັນການອອກໃນ "ກໍລະນີຍົກເວັ້ນ". ອັດຕາສ່ວນໄມ້ທ່ອນແລະໄມ້ແປຮູບໃນການສົ່ງອອກໂດຍລວມຈາກລາວ ຄິດເປັນມູນຄ່າເງິນເກືອບເກີນ90%ມາໂດຍຕະຫຼອດໃນຊ່ວງປີ2000 ຫາ2014, ເຖິງ95% ໃນປີ2011-2013 ແລະເກືອບເຖິງ 98% ໃນປີ2014.ຈາກກາງປີ2000, ອັດຕາສ່ວນຂອງໄມ້ທ່ອນໃນການສົ່ງອອກໂດຍລວມເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະບັນລຸເຖິງ 56%

ໃນປີ2014 ແຕ່ໃນປີ2002 ກວມເອົາພຽງແຕ່ 14% ເທົ່ານັ້ນ (ນອກຈາກນັ້ນ ມູນຄ່າການສົ່ງອອກໄມ້ທ່ອນເພີ່ມຂຶ້ນເທົ່າຕົວໃນປີ2014 ເມື່ອທຽບກັບປີ2013).

- ສົມທຽບຂໍ້ມູນທາງການກ່ຽວກັບບໍລິມາດຂອງບັນດາໂຄຕ້າທີ່ອອກ ແລະບໍລິມາດຂອງໄມ້ທ່ອນທີ່ຈົດທະບຽນຢ່າງເປັນທາງການໄດ້ຂຸດຄົ້ນຢູ່ໃນ4ແຂວງພາກໃຕ້ຂອງສປປລາວ ຄື: ແຂວງເຊກອງ, ສາລະວັນ, ຈຳປາສັກ ແລະແຂວງອັດຕະປື ("ພື້ນທີ່ຕິດຕາມຂອງໂຄງການCarBi") ໃນລະດູການຂຸດຄົ້ນໄມ້2011-2012, ທີ່ມີຂໍ້ມູນກ່ຽວກັບການສົ່ງອອກຜະລິດຕະພັນໄມ້ຈາກເຂດນີ້, ພົບວ່າມີໜ້ອຍກວ່າ 50% ຂອງຜະລິດຕະພັນໄມ້ທີ່ສົ່ງອອກຈາກແຫຼ່ງທີ່ບໍ່ມີເອກະສານຄົບຖ້ວນ.ສົມມູນຂອງເງິນໂດຍລວມ ມູນຄ່າຂອງໄມ້ທ່ອນທີ່ຫຼາຍເກີນໄປ ອາດເກີນງົບປະມານລາຍໄດ້ຂອງລາວຈາກການຂາຍໄມ້ທ່ອນທີ່ວາງແຜນໄວ້ສຳລັບງົບປະມານແຫ່ງປີ2013-2014 ສາມເທົ່າຕົວ.
- ຢ່າງໜ້ອຍ50% (ຄົງຫຼາຍກວ່າ 60%) ຂອງຜະລິດຕະພັນໄມ້ທີ່ສົ່ງອອກໃນລະດູການຂຸດຄົ້ນໄມ້2010-2011 ຈາກແຂວງເຊກອງແມ່ນມາຈາກແຫຼ່ງທີ່ບໍ່ມີເອກະສານຄົບຖ້ວນ.
- ບໍລິມາດຂອງໄມ້ທ່ອນທີ່ບໍ່ມີເອກະສານຄົບຖ້ວນທັງໝົດຊີ້ໃຫ້ເຫັນວ່າການຂຸດຄົ້ນແລະການຂົນສົ່ງໄມ້ດັ່ງກ່າວດຳເນີນການໂດຍບັນດາບໍລິສັດຂະໜາດໃຫຍ່ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍເພື່ອປະກອບການ ແລະດຳເນີນງານໂດຍໃຊ້ກົນຈັກໜັກໃນພື້ນທີ່ຂຸດຄົ້ນໄມ້. ໂດຍປົກກະຕິການນຳໃຊ້ກົນຈັກໜັກດັ່ງກ່າວເປັນການປະກອບການເພື່ອຫັນປ່ຽນທີ່ດິນປ່າໄມ້ສຳລັບເຮັດສວນໄມ້ປູກ, ສ້າງເສັ້ນທາງ, ສາຍສົ່ງ, ອ່າງເກັບນ້ຳ, ຂຸດຄົ້ນບໍ່ແຮ່ ຫຼືກວດຫາແຮ່ທາດທາງທໍລະນີວິທະຍາເທົ່ານັ້ນ.
- ອີງຕາມການສັນນິຖານຂ້າງເທິງນີ້ ພວກເຮົາພົບວ່າຊ່ວງເວລາຂອງບໍລິມາດໄມ້ທ່ອນທີ່ບໍ່ມີເອກະສານຄົບຖ້ວນຈຳນວນຫຼວງຫຼາຍເຫຼົ່ານີ້ ເກີດຂຶ້ນຫຼັງຈາກການເພີ່ມຂຶ້ນຢ່າງໄວວາໃນການລົງທຶນຂອງຈີນ ແລະຫວຽດນາມໃນຂະແໜງຂຸດຄົ້ນບໍ່ແຮ່, ກະສິກຳ, ກິດຈະການດ້ານປ່າໄມ້ແລະເຂື່ອນໄຟຟ້າໃນລາວ. ສ່ວນຫຼາຍການສຳປະທານຂອງໂຄງການທີ່ກ່ຽວຂ້ອງແມ່ນຕັ້ງຢູ່ໃນພື້ນທີ່ປ່າໄມ້ ດັ່ງນັ້ນ ຈຶ່ງຄຳນຶງເຖິງຄວາມເປັນໄປໄດ້ໃນໂຄຕ້າຂຸດຄົ້ນໄມ້ລ່ວງໜ້າ.
- ພວກເຮົາສຶກສາຄວາມກ່ຽວພັນກັນຂ້າງເທິງນັ້ນໂດຍການສົມທຽບໂຄຕ້າຂຸດຄົ້ນໄມ້ທີ່ອອກສຳລັບການບຸກເບີກທີ່ດິນໃຫ້ແກ່ໂຄງການບໍ່ແຮ່ ແລະໂຄງການກໍ່ສ້າງເສັ້ນທາງໃນແຂວງສາລະວັນແລະເຊກອງທີ່ມີການຂຸດຄົ້ນໄມ້ທ່ອນຕົວຈິງ. ວິເຄາະເອກະສານທາງການທີ່ກ່ຽວຂ້ອງ, ສຳຫຼວດພາກສະໜາມສະຖານທີ່ຕັ້ງຂອງການຂຸດຄົ້ນແລະສະໜາມພັກໄມ້, ແລະຕີຄວາມໝາຍພາບຖ່າຍທາງດາວທຽມທີ່ມີຄວາມລະອຽດສູງກໍຖືກນຳໃຊ້. ພວກເຮົາພົບ100% ຂອງໄມ້ທ່ອນທີ່ຂຸດຄົ້ນພາຍໃຕ້

ໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ ແລະ 99% ຂອງໄມ້ທ່ອນຈາກໂຄງການບໍ່ແຮ່ບໍ່ຖືກຕ້ອງຕາມກົດໝາຍ.ການລະເມີດກົດໝາຍມີດັ່ງລຸ່ມນີ້:

ກ.ຂຸດຄົ້ນຢູ່ນອກຂອບເຂດສຳປະທານ. ໃນກໍລະນີຂອງໂຄງການບໍ່ແຮ່ມີເຖິງ 76 %ຂອງສະຖານທີ່ຕັ້ງການຂຸດຄົ້ນໃໝ່ທີ່ຖືກກວດພົບແມ່ນຕັ້ງຢູ່ນອກເຂດແດນສຳປະທານ ໃນຂະນະທີ່ກໍລະນີຂອງໂຄງການກໍ່ສ້າງເສັ້ນທາງ ການຂຸດຄົ້ນໄມ້ທ່ອນທັງໝົດແມ່ນຢູ່ນອກເຂດຈັດສັນສຳລັບການກໍ່ສ້າງ(ກໍລະນີໜຶ່ງ ການຂຸດຄົ້ນໄມ້ຢູ່ຫ່າງຈາກເສັ້ນທາງເຖິງ 40 ກິໂລແມັດ).

ຂ. ການຂຸດຄົ້ນໄມ້ມາໃນຮູບແບບຂອງການຂຸດຄົ້ນແບບຄັດເລືອກເອົາຕົ້ນໄມ້ຄຸນນະພາບດີທີ່ສຸດຕາມຊະນິດເປົ້າໝາຍໃຫ້ໄດ້ບໍລິມາດສູງສຸດ. ສ່ວນປະກອບຂອງຊະນິດແລະຄຸນນະພາບຂອງໄມ້ທ່ອນທີ່ຂຸດຄົ້ນຕົວຈິງແມ່ນແຕກຕ່າງຢ່າງຫຼວງຫຼາຍຈາກບັນດາໄມ້ທ່ອນທີ່ອະນຸຍາດພາຍໃຕ້ໂຄຕ້າ. ສະນັ້ນ ສ່ວນປະກອບແລະບໍລິມາດໄມ້ທ່ອນທີ່ຂຸດຄົ້ນນັ້ນບໍ່ກ່ຽວຂ້ອງກັບຜົນຂອງການສຳຫຼວດຂຶ້ນບັນຊີໄມ້ເລີຍ.

ຄ. ການສຳຫຼວດຂຶ້ນບັນຊີໄມ້ບໍ່ໄດ້ດຳເນີນຫຼືເຮັດຄົບຕາມຫຼັກວິຊາການພາກສະໜາມຕົວຈິງ. ໃນກໍລະນີຂອງໂຄງການບໍ່ແຮ່ໄດ້ສຳເລັດການສຳຫຼວດພຽງແຕ່ 40%ຂອງການສຳປະທານຫຼັງຈາກເລີ່ມການຂຸດຄົ້ນໄມ້ແລ້ວ ແລະບໍ່ໄດ້ນຳໃຊ້ເຂົ້າໃນວຽກຕົວຈິງ. ມີຕົວບົ່ງຊີ້ຫຼາຍຢ່າງວ່າການສຳຫຼວດຂຶ້ນບັນຊີໄມ້ສຳລັບການສຳປະທານຂອງໂຄງການກໍ່ສ້າງເສັ້ນທາງບໍ່ໄດ້ມີການດຳເນີນຢູ່ໃນພາກສະໜາມແລະຂໍ້ມູນປະກອບເອກະສານກໍ່ຍັງເປັນຂໍ້ມູນທີ່ສ້າງຂຶ້ນມາເອງ.

ງ.ຂຸດຄົ້ນຊະນິດໄມ້ທີ່ບໍ່ອະນຸຍາດໃຫ້ຂຸດຄົ້ນ(ຫ້າມຂຸດຄົ້ນ) ແລະມີການສົ່ງອອກເຊິ່ງການຂຸດຄົ້ນບໍ່ມີເອກະສານ (ລວມທັງ ໄມ້ດູ່ຊະນິດຕ່າງໆ).

ຈ. ຂຸດຄົ້ນບໍລິມາດສູງກວ່າທີ່ອະນຸຍາດ. ໃນກໍລະນີຂອງໂຄງການກໍ່ສ້າງເສັ້ນທາງ, ບໍລິມາດຂອງໄມ້ທ່ອນທີ່ສົ່ງອອກ (ດັ່ງທີ່ໄດ້ລາຍງານຕໍ່ດ່ານພາສີຫວຽດນາມ) ເກີນການຂຸດຄົ້ນທີ່ມີເອກະສານຢ່າງເປັນທາງການທັງໝົດຫຼາຍກວ່າສາມເທົ່າ.

ສ.ການລາຍງານຕ່ຳເກີນຄວາມເປັນຈິງກ່ຽວກັບຄຸນນະພາບຂອງໄມ້ທ່ອນທີ່ຂຸດຄົ້ນໂດຍເຈົ້າໜ້າທີ່ຝ່າຍຂາຍຂອງລາວ ແລະໃຫ້ມູນຄ່າທີ່ຕ່ຳໂດຍຜູ້ສົ່ງອອກໄມ້ທ່ອນລາວເພື່ອຈ່າຍຄ່າທຳນຽມ ແລະພາສີອາກອນໃຫ້ລັດໜ້ອຍກວ່າ. ໃນກໍລະນີຂອງໂຄງການກໍ່ສ້າງເສັ້ນທາງ, ບໍລິມາດໄມ້ທ່ອນໂດຍສະເລ່ຍດັ່ງການລາຍງານໂດຍຜູ້ນຳເຂົ້າທີ່ດ່ານພາສີຫວຽດນາມແມ່ນ 1.7-2.6 ເທົ່າສູງກວ່າໃນລາຍການໄມ້ ແລະສັນຍາຊື້ຂາຍໄມ້ທ່ອນສຳລັບຊະນິດດຽວກັນຢູ່ໃນລາວ. ຕາມການລາຍງານດັ່ງກ່າວຍັງໃຫ້ຮູ້ອີກວ່າ ລາຄາຂອງໄມ້ທ່ອນທີ່ສົ່ງອອກແມ່ນ2.9-4.2ສູງກວ່າລາຄາສັນຍາທີ່ລະບຸໄວ້ໃນເອກະສານໂດຍຜູ້ສົ່ງອອກລາວສຳລັບຊະນິດດຽວກັນຢູ່ໃນລາວ.

- ຂໍ້ມູນທີ່ໄດ້ຈາກກໍລະນີສຶກສາ ແລະການສັງເກດໂຄຕ້າຂຸດຄົ້ນໄມ້ທ່ອນອື່ນໆເຮັດໃຫ້ພວກເຮົາສາມາດແນະນໍາວ່າ ໃນຕົວຈິງການນໍາໃຊ້ອະນຸຍາດສໍາລັບການຂຸດຄົ້ນເພື່ອຫັນປ່ຽນທີ່ດິນປ່າໄມ້ລະຫວ່າງມີໂຄງການພັດທະນາຕ່າງໆ ການປະຕິບັດແບບດັ່ງກ່າວກາຍເປັນວິທີການໜຶ່ງເພື່ອເຮັດໃຫ້ການຂຸດຄົ້ນໄມ້ຄຸນນະພາບດີຈໍານວນຫຼວງຫຼາຍຖືກຕ້ອງຕາມກົດໝາຍຈາກປ່າໄມ້ທຸກປະເພດ (ລວມທັງປ່າປ້ອງກັນແລະປ່າສະຫງວນ).
- ຄວາມແຕກຕ່າງກັນ ລະຫວ່າງການສະໜອງວັດຖຸດິບທີ່ຈົດທະບຽນຢ່າງເປັນທາງການໃຫ້ແກ່ໂຮງງານປຸງແຕ່ງ ແລະຄວາມອາດສາມາດໃນການປຸງແຕ່ງໄມ້ຂອງໂຮງງານນັ້ນແມ່ນມີຄວາມຊັດເຈນແລະຈະແຈ້ງ. ໂຄຕ້າຂຸດຄົ້ນໄມ້ທ່ອນຢ່າງເປັນທາງການໃນແຂວງສາລະວັນແລະເຊກອງ ສາມາດສະໜອງໄມ້ເຂົ້າໂຮງງານໄດ້ພຽງແຕ່25%ຂອງຄວາມອາດສາມາດທີ່ຕິດຕັ້ງໄວ້. ຄວາມອາດສາມາດທີ່ເຫຼືອຄົງສະໜອງການປຸງແຕ່ງໂດຍໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍ.
- ການກວດກາປ່າໄມ້ຂອງລັດ (ແລະຄົງເກືອບທຸກໜ່ວຍງານທີ່ບັງຄັບໃຊ້ກົດໝາຍຂອງລັດທີ່ຮັບຜິດຊອບຕໍ່ສູ້ກັບການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍ)ບໍ່ສ້າງຜົນກະທົບທີ່ສໍາຄັນໃດຕໍ່ການປ່ຽນແປງແລະຂອບເຂດຂອງການຂຸດຄົ້ນໄມ້ຢ່າງຜິດກົດໝາຍ ເນື່ອງຈາກວ່າບໍ່ກວດກາການດໍາເນີນງານຂຸດຄົ້ນໄມ້ພາຍໃຕ້ໂຄຕ້າຂຸດຄົ້ນໄມ້ເພື່ອຫັນປ່ຽນທີ່ດິນປ່າໄມ້(ສະຖານທີ່ຕັ້ງຂອງການຂຸດຄົ້ນ ຫຼືບໍລິມາດຂອງການຂຸດຄົ້ນ) ແລະການປ່ຽນແປງຂັ້ນຖັດໄປຂອງໄມ້ທ່ອນຈໍານວນນີ້ (ການຂົນສົ່ງ, ການແປຮູບ ແລະ ການສົ່ງອອກ). ໃນ 4ແຂວງພາກໃຕ້ຂອງລາວໄດ້ຍຶດພຽງແຕ່ປະມານ 3-5% ຂອງບໍລິມາດໄມ້ທ່ອນທີ່ຜິດກົດໝາຍທີ່ຄາດຄະເນໃນປີ2011-2012ເທົ່ານັ້ນ. ແມ້ແຕ່ວ່າໄມ້ທ່ອນທີ່ຖືກຍຶດມາຈາກການດໍາເນີນງານຂະໜາດນ້ອຍ ແລະການດໍາເນີນງານເພື່ອການຄ້າຂະໜາດໃຫຍ່ໂດຍບັນດາບໍລິສັດໃຫຍ່ຕ່າງໆ ກໍ່ຍັງບໍ່ຖືກແຕະຕ້ອງເລີຍ.
- ການອາໃສຂອງປະເທດຈີນແລະຫວຽດນາມກັບການສະໜອງໄມ້ທ່ອນຈາກລາວຢ່າງໜັກໜ່ວງຄົງຈະບໍ່ມີແນວໂນ້ມວ່າ ລັດຖະບານທັງສອງປະເທດນີ້ພ້ອມຍົກລະດັບຂອງຕົນເພື່ອຄວບຄຸມການນໍາເຂົ້າໃຫ້ຖືກຕ້ອງຕາມກົດໝາຍ. ເຫັນຢ່າງຊັດເຈນວ່າການຄວບຄຸມແບບດັ່ງກ່າວນັ້ນຈະຊ່ວຍຫຼຸດຜ່ອນບໍລິມາດແລະຄຸນນະພາບໄມ້ທ່ອນທີ່ສົ່ງອອກແບບຜິດກົດໝາຍຈາກປະເທດລາວຢ່າງໄວວາ ພ້ອມກັນກັບຈະຊ່ວຍຫຼຸດຜ່ອນຜົນປະໂຫຍດທີ່ບັນດາພໍ່ຄ້າໄມ້ທ່ອນແລະບໍລິສັດປຸງແຕ່ງໄມ້ໄດ້ຮັບເຊິ່ງມັກຫາຜົນກໍາໄລເປັນຈໍານວນມະຫາສານຈາກການສັ່ງຊື້ໄມ້ວັດຖຸດິບໃນລາຄາທີ່ຕໍ່າ .ຕົວຊີ້ວັດເປັນພຽງຄໍາເວົ້າທີ່ງົດງາມເທົ່ານັ້ນສະເໜີໂດຍລັດຖະບານຫວຽດນາມໃນຮ່າງນິຍາມກົດໝາຍສໍາລັບການເຈລະຈາຂອງຕົນຕໍ່ສັນຍາການຮ່ວມມືແບບສະໝັກໃຈໃນການບັງຄັບໃຊ້ກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງແລະການຄ້າ(FLEGT)ກັບສະຫະພາບເອີຣົບ (ອີຢູ).

ຮ່າງນິຍາມກົດໝາຍດັ່ງກ່າວບໍ່ຮຽກຮ້ອງໃຫ້ຜູ້ນໍາເຂົ້າຮັບປະກັນວ່າໄມ້ທ່ອນທີ່ນໍາເຂົ້ານັ້ນຖືກຂຸດຄົ້ນຢ່າງຖືກຕ້ອງໃນປະເທດຕົ້ນທາງ, ແຕ່ໃນທາງກົງກັນຂ້າມຕ້ອງນໍາເຂົ້າປະເທດຫວຽດນາມຢ່າງຕ້ອງຖືກຕາມກົດໝາຍອີງຕາມກົດໝາຍຫວຽດນາມ.

- ສະຖານະການຂຸດຄົ້ນໄມ້ໃນສປປລາວແມ່ນກໍາລັງປ່ຽນແປງໄປໃນສະຖານະການຂ້ອນຂ້າງຂີ້ຮ້າຍທີ່ສຸດເຊິ່ງກົງກັນຂ້າມຢ່າງຊັດເຈນກັບການຄາດຄະເນໂດຍແຜນຍຸດທະສາດປ່າໄມ້ຮອດປີ2020 ຂອງສປປລາວ (ຮັບຮອງໂດຍດໍາລັດສະບັບເລກທີ229/ນຍ ວັນທີ9 ເດືອນສິງຫາ ປີ2005)ເພື່ອຜັນປ່ຽນເປັນແຫຼ່ງໄມ້ທ່ອນຈາກບັນດາສວນໄມ້ປູກແລະເຂດປ່າຜະລິດບົນພື້ນຖານການຂຸດຄົ້ນປະຈໍາປີທີ່ຄາດຄະເນທາງວິທະຍາສາດ, ປຸງແຕ່ງໄມ້ໃນໂຮງງານລາວເອງເພື່ອເປັນຜະລິດຕະພັນສໍາເລັດຮູບແລະເຄິ່ງສໍາເລັດຮູບ. ກົງກັນຂ້າມກັບການພັດທະນາເຈດຕະນາທີ່ດີຂອງລັດຖະບານພາຍໃຕ້ສະພາບເຫດການຕົວຈິງນີ້ຈະນໍາໄປສູ່ການສູນເສຍໄມ້ພານິດທີ່ມີຢູ່ໃນປ່າທໍາມະຊາດຂອງປະເທດຢ່າງບໍ່ຕ້ອງສົງໄສ- ເຊິ່ງເປັນສະພາບເຫດການດຽວກັນທີ່ເກີດຂຶ້ນແລ້ວຢູ່ປະເທດໄທ, ຫວຽດນາມແລະກໍາປູເຈ້ຍແລ້ວ.
- ຖ້າຫາກລັດຖະບານລາວເອົາຈິງກັບການປ່ຽນແປງສະຖານະການໃນປັດຈຸບັນແລະຫຼີກລ້ຽງສະຖານນະການທີ່ຂີ້ຮ້າຍທີ່ສຸດນັ້ນ ຈໍາເປັນຕ້ອງມີມາດຕະການຮີບດ່ວນເພື່ອຮັບປະກັນວ່າໂຄຕ້າຂຸດຄົ້ນສໍາລັບຫັນປ່ຽນທີ່ດິນປ່າໄມ້ປະຕິບັດຕາມຂໍ້ກໍານົດພື້ນຖານຂອງກົດໝາຍ. ສຸມຄວາມພະຍາຍາມໃສ່ຈຸດໜັກທີ່ສຸດທີ່ຈໍາເປັນຕ້ອງແກ້ໄຂໂດຍດ່ວນ ແລະຕ້ອງສາມາດວັດແທກຄວາມຄືບໜ້າໄດ້:

ກ) ຂຸດຄົ້ນໄມ້ພາຍໃນເຂດແດນທີ່ອະນຸຍາດເທົ່ານັ້ນ.

ຂ

)ສະໜອງແຜນທີ່ທີ່ແຈ່ມແຈ້ງທີ່ມີເຂດແດນຂອງການສໍາປະທານທັງໝົດບ່ອນທີ່ການຂຸດຄົ້ນໄມ້ທ່ອນຖືກອະນຸຍາດ.

ຄ) ຄວນມີການປັກຫຼັກເຂດແດນທັງໝົດກ່ອນເລີ່ມຕົ້ນຂຸດຄົ້ນໄມ້.

ງ) ຄວນມີການສໍາຫຼວດຂຶ້ນບັນຊີໄມ້ຢ່າງເຄັ່ງຄັດ.

ຈ)ຄວນສ້າງຖານຂໍ້ມູນຂ່າວສານແລະເປີດໃຫ້ທຸກພາກສ່ວນທີ່ສົນໃຈສາມາດເຂົ້າເຖິງຂໍ້ມູນກ່ຽວກັບການຂຸດຄົ້ນໄມ້ທັງໝົດທີ່ອະນຸຍາດ ກ່ອນມີການເລີ່ມດໍາເນີນວຽກ.

ສ)ຕ້ອງມີການຄວບຄຸມພາກສະໜາມໃນໄລຍະດໍາເນີນການຂຸດຄົ້ນໄມ້ພາຍໃຕ້ໂຄ

ຕ້າການຂຸດຄົ້ນສໍາລັບຫັນປ່ຽນທີ່ດິນປ່າໄມ້ເປັນວຽກບຸລິມະສິດສໍາລັບພະນັກງານກວດກາປ່າໄມ້.

ຊ) ຄວນນໍາໃຊ້ພາບຖ່າຍທາງດາວທຽມທີ່ມີຄວາມລະອຽດສູງແລະສູງສຸດເປັນແຫຼ່ງຂໍ້ມູນອິດສະຫຼະເພີ່ມຕື່ມ

ຍ) ສ້າງຄະນະກວດກາອິດສະຫຼະທີ່ປະກອບດ້ວຍຜູ້ຕາງໜ້າຈາກອົງກອນລັດທີ່ກ່ຽວຂ້ອງ, ອົງການພາກປະຊາສັງຄົມແລະອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດທະບານ ສາມາດເຂົ້າເຖິງເຂດພື້ນທີ່ມີການຂຸດຄົ້ນໄມ້ທັງໝົດ.

ດ) ດຳເນີນຈຸດກວດກາໃນທຸກມື້ຕະຫຼອດ24ຊົ່ວໂມງ ແລະກວດສອບການຂົນສົ່ງໄມ້ທ່ອນຕາມເສັ້ນທາງຕ່າງໆ. ບໍ່ພຽງແຕ່ຄົ້ນຫາແລະກັກຕົວຜູ້ຂົນສົ່ງໄມ້ທ່ອນມີມູນຄ່າສູງຂະໜາດນ້ອຍ ແຕ່ການຂົນສົ່ງໄມ້ທ່ອນທັງໝົດຄວນມີການຈົດທະບຽນຢ່າງເປັນລະບົບພ້ອມທັງມີຂໍ້ມູນກ່ຽວກັບປະເພດຂອງຜະລິດຕະພັນ ,ບໍລິມາດແລະສ່ວນປະກອບຂອງຊະນິດໄມ້ໂດຍບໍ່ຄຳນຶງເຖິງວ່າມີ "ໃບອະນຸຍາດທີ່ຖືກຕ້ອງຕາມກົດໝາຍ".

ຕ) ຈົດທະບຽນການປ່ຽນແປ່ງໄມ້ທຸກຈຸດສຳຄັນຂອງລະບົບຕ່ອງໂສ້ເພື່ອໃຫ້ກົງກັບວັດຖຸດິບທີ່ເຂົ້າມາ ແລະຜົນໄດ້ຮັບຂອງຜະລິດຕະພັນໄມ້. ຄວນມີການສືບສວນໄມ້ທີ່ມີຂໍ້ມູນບໍ່ກົງກັນຢ່າງລະອຽດ.

ຖ) ເກັບຮັກສາບັນຊີໄມ້ທີ່ສົ່ງໄປສະໜາມພັກໄມ້ທັງໝົດຕະຫຼອດລະດູການຂຸດຄົ້ນໄມ້ແລະກວດກາຄວາມຖືກຕ້ອງຂອງການຮັກສາລາຍການໄມ້ເປັນປົກກະຕິ.

ທ)ກວດກາໂຮງງານປຸງແຕ່ງໄມ້ຢ່າງເປັນປົກກະຕິເພື່ອຢືນຢັນຜະລິດຕະພັນໄມ້
ທີ່ມີຢູ່ໂຮງງານສອດຄ່ອງກັບວັດຖຸດິບຈາກແຫຼ່ງທີ່ມີເອກະສານ.ທົດສອບຂະບວນການຫັນປ່ຽນຈາກວັດຖຸດິບເປັນໄມ້ແປຮູບ.

ນ) ຫ້າມອອກອະນຸຍາດຂຸດຄົ້ນໄມ້ເພື່ອແລກປ່ຽນກັບໂຄງການລົງທຶນຂອງລັດຢ່າງເດັດຂາດ.

## ພາກສະເໜີ

ການປະເມີນຂອບເຂດຂອງການຂຸດຄົ້ນໄມ້ຢ່າງຜິດກົດໝາຍໃນສປປລາວແລະການຄ້າໄມ້ທ່ອນຂ້າມແດນທີ່ກ່ຽວຂ້ອງໄດ້ດຳເນີນການຈາກເດືອນພະຈິກ ປີ2012 ຫາ ເດືອນພຶດສະພາ ປີ2015 ໃນເຄົ້າໂຄງຂອງໂຄງການWWF"ການຫຼີກລ້ຽງການທຳລາຍ ແລະ ການເຊື່ອມໂຊມຂອງປ່າໄມ້ໃນເຂດຊາຍແດນພາກໃຕ້ຂອງ ສປປລາວ ແລະພາກກາງຂອງປະເທດຫວຽດນາມສຳລັບການປົກປັກຮັກສາກັກເກັບກາກບອນ ແລະຊີວະນາໆພັນໃນໄລຍະຍາວ ("ໂຄງການCarBi"), ໂດຍສະເພາະເປັນສ່ວນໜຶ່ງຂອງ "ມາດຕະການຫຼຸດຜ່ອນການຮົ່ວໄຫຼ ລະຫວ່າງປະເທດ ໂດຍການຕິດຕາມ ແລະຄວບຄຸມໄມ້". ໂຄງການCarBiໄດ້ຮັບທຶນສະໜັບສະໜູນຈາກໂຄງການສະພາບອາກາດສາກົນ(ICI) ຂອງສາທະພັນສາທາລະນະລັດ ເຢຍລະມັນທີ່ຂຶ້ນກັບກະຊວງສິ່ງແວດລ້ອມ, ອະນຸລັກທຳມະຊາດແລະຄວາມປອດໄພຈາກນິວເຄຍ (BMU) ໂດຍຜ່ານກຸ່ມທະນາຄານ KfWແລະທຶນອີກສ່ວນໜຶ່ງແມ່ນໄດ້ມາຈາກອົງການສາກົນWWF ເຢຍລະມັນ. ອີງຕາມບົດບັນທຶກຄວາມເຂົ້າໃຈ(MoU) ລະຫວ່າງ ກະຊວງກະສິກຳແລະປ່າໄມ້ (MAF) ແລະອົງການສາກົນWWFລາວ (ວັນທີ19 ເດືອນກໍລະກົດປີ2011) ການສຶກສາຄັ້ງນີ້ເພື່ອເປັນການປະເມີນໃຫ້ຮູ້ມາດຕາສ່ວນຂອງການຮົ່ວໄຫຼລະຫວ່າງປະເທດເພື່ອເພີ່ມຂີດຄວາມໝັ້ນໃຈ ແລະລະບຸພື້ນທີ່ທີ່ອາດຈະມີການຮົ່ວໄຫຼຕື່ມອີກ. ການສຶກສານີ້ເພື່ອແນ່ໃສ່:

- ເພື່ອລະບຸປັດໃຈຂັບເຄື່ອນສຳລັບການຂຸດຄົ້ນໄມ້ ແລະການຮົ່ວໄຫຼທີ່ຜິດກົດໝາຍໃນເຂດພື້ນທີ່ຂອງໂຄງການ (ແຂວງເຊກອງແລະສາລະວັນ)
- ເພື່ອສ້າງຖານຂໍ້ມູນກ່ຽວກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍ ໃນເຂດພື້ນທີ່ຂອງໂຄງການ
- ລະບຸພື້ນທີ່ທີ່ອາດມີທ່າແຮງຮົ່ວໄຫຼ
- ເພື່ອປັບປຸງຈຳນວນພາບເຫດການໃນການຮົ່ວໄຫຼລະຫວ່າງປະເທດໃນເຂດທີ່ຄັດເລືອກ.

ຄວາມໝາຍຂອງການຮົ່ວໄຫຼໃນການສຶກສາຄັ້ງນີ້ຖືກລະບຸໄວ້ຄື: ການເຄື່ອນຍ້າຍໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍໄປຍັງເຂດພື້ນທີ່ຂອງໂຄງການໃນປະເທດລາວ ເນື່ອງຈາກມີການພັດທະນາຢ່າງໄວວາ ແລະແຜ່ຫຼາຍໃນດ້ານອຸດສາຫະກຳປຸງແຕ່ງໄມ້ເພື່ອສົ່ງອອກແລະນະໂຍບາຍດ້ານສິ່ງແວດລ້ອມ (ການອະນຸລັກຊີວະນາໆພັນ ແລະປ່າໄມ້ເພື່ອກັກເກັບກາກບອນ) ຢູ່ໃນບັນດາປະເທດເພື່ອນບ້ານ (ຫວຽດນາມ, ຈີນແລະໄທ).

ການຄົ້ນຄວ້ານີ້ແມ່ນອີງໃສ່ການວິເຄາະເອກະສານທີ່ຮວບຮວມ, ສິ່ງຈັດພິມ, ການສໍາພາດ, ການສັງເກດພາກສະໜາມແລະການຕິດຕາມກວດກາການຂຸດຄົ້ນໄມ້ທ່ອນໂດຍນໍາໃຊ້ພາບຖ່າຍທາງດາວທຽມ[a].

[a]ການຕີຄວາມໝາຍພາບຖ່າຍທາງດາວທຽມໄດ້ດໍາເນີນການໂດຍອົງກອນທຣັນປາເຣນ ເວີດ(Transparent World)ທີ່ເປັນອົງການຮ່ວມມື ບໍ່ຫວັງຜົນກໍາໄລ ແລະບໍ່ຂື້ນກັບລັດຖະບານ ໃນຂອບສັນຍາກ່ຽວກັບ "ການພັດທະນາລະບົບຕິດຕາມກວດກາສໍາຫຼວດທາງໄກ ການຂຸດຄົ້ນໄມ້ຢູ່ໃນເຂດພື້ນທີ່ຕິດຕາມຂອງໂຄງການCarBi" (2014-2015).

## ຄວາມເປັນມາຂອງບັນຫາ ແລະ ຈຸດປະສົງ

ການປົກຄຸມຂອງປ່າໄມ້ໃນສປປລາວໄດ້ຫຼຸດລົງຢ່າງຕໍ່ເນື່ອງ. ອີງຕາມພະແນກປ່າໄມ້(DOF)ຂື້ນກັບກະຊວງກະສິກຳ ແລະປ່າໄມ້, ການປົກຄຸມຂອງປ່າໄມ້ຕົວຈິງ (ປ່າໄມ້ທີ່ມີຄວາມໜາແໜ້ນທີ່ເປັນຮົ່ມໜ້ອຍກວ່າ20%) ໃນສປປລາວຫຼຸດລົງຈາກ 49% ຂອງເນື້ອທີ່ປະເທດໃນປີ1982 ເຖິງ 45% ໃນປີ 1992 ແລະ 41.5% ໃນປີ 2002. ອັດຕາການທຳລາຍປ່າປະຈຳປີໃນສປປລາວມີຈຳນວນເຖິງ0.4% (46,000ເຮັກຕາ) ໃນລະຫວ່າງປີ 1982 ແລະປີ 1992 ແລະເພີ່ມຂຶ້ນ1.2% (134,000 ເຮັກຕາ) ໃນລະຫວ່າງປີ 1992 ແລະປີ 2002. ລັດຖະບານສປປລາວໄດ້ໃຫ້ຄຳໝັ້ນສັນຍາຈະເພີ່ມຈຳນວນການປົກຄຸມຂອງປ່າໄມ້ໃຫ້ໄດ້ເຖິງ65% ສ່ວນຮ້ອຍຂອງເນື້ອທີ່ທັງໝົດໃນປີ 2015 ແລະ 70% ສ່ວນຮ້ອຍໃນປີ 2020. ຢ່າງໃດກໍຕາມ, ຜົນຂອງການປະເມີນການປົກຄຸມຂອງປ່າໄມ້ແຫ່ງຊາດຫຼ້າສຸດສະແດງໃຫ້ເຫັນວ່າການປົກຄຸມຂອງປ່າໄມ້ໄດ້ຫຼຸດລົງຕື່ມອີກເຖິງ40.3 %ເນື່ອງຈາກວ່າອີກ325 ພັນເຮັກຕາໄດ້ສູນເສຍໃນລະຫວ່າງປີ 2002 ແລະ 2010 (ຕາຕະລາງ1). ທ່າມກາງການຫຼຸດລົງຂ້ອນຂ້າງຊ້າຂອງການປົກຄຸມຂອງປ່າໄມ້ແຫ່ງຊາດແຕ່ບາງແຂວງໄດ້ສືບຕໍ່ສູນເສຍປ່າໄມ້ຂອງຕົນຢູ່ໃນລະດັບທີ່ໜ້າຕົກໃຈ. ອີງຕາມການປະເມີນບັນດາແຂວງເປົ້າໝາຍຂອງໂຄງການCarBi ແຂວງສາລະວັນແລະເຊກອງໄດ້ສູນເສຍໄປ 27%ແລະ28% ຂອງປ່າໄມ້ຈາກປີ2002ຫາປີ2010.

**ຕາຕະລາງ1. ການປ່ຽນແປງການປົກຄຸມຂອງປ່າໄມ້ລາວ ອີງຕາມການປະເມີນການປົກຄຸມຂອງປ່າໄມ້**

| | 1982 | 1992 | 2002 | 2010 |
|---|---|---|---|---|
| ການປົກຄຸມຂອງປ່າໄມ້ຕົວຈິງ, ເຮັກຕ້າແລະເປີເຊັນເນື້ອທີ່ທັງໝົດຂອງປະເທດ | 11,637,000<br>49.1 | 11,168,000<br>47.2 | 9,825,000<br>41.5 | 9,500,000<br>40.3 |
| ແຂວງສາລະວັນ,% | 55.6 | 54.4 | 54.8 | 39.2 |
| ແຂວງເຊກອງ,% | 55.5 | 54.3 | 53.0 | 38.8 |
| ແຂວງຈຳປາສັກ,% | 62.7 | 61.5 | 54.0 | 40.6 |
| ແຂວງອັດຕະປື,% | 68.1 | 66.9 | 49.2 | 63.9 |

ແຫຼ່ງຂໍ້ມູນ:ກະຊວງກະສິກຳແລະປ່າໄມ້/ພະແນກປ່າໄມ້(ໂດຍມູນນິທິ FSPI, 2014),Lestrelin G. et al. (2013)[1].

ຜົນການຄົ້ນຄວ້າໂດຍກຸ່ມມະຫາວິທະຍາໄລແມຣີແລນກ່ຽວກັບຂອບເຂດປ່າໄມ້ທົ່ວໂລກໂດຍອີງຕາມການວິເຄາະລຳດັບໄລຍະເວລາຂອງພາບຖ່າຍທາງດາວທຽມສະແດງໃຫ້ເຫັນມີອັດຕາການທຳລາຍປ່າໃນປະເທດ

ລາວໄວກວ່າ6.1% (1,170ພັນເຮັກຕາ) ຂອງປ່າໄມ້ທີ່ມີຈຳນວນໜ້ອຍກວ່າ25%ຂອງປ່າໄມ້ປົກຄຸມໄດ້ສູນເສຍຈາກປີ2000 ຫາປີ2012[2].

ອີງຕາມທັດສະນະທາງການ[3], ປັດໃຈຕົ້ນຕໍທີ່ນຳໄປສູ່ການຫຼຸດລົງຂອງການປົກຄຸມຂອງປ່າໄມ້ມີດັ່ງຕໍ່ໄປນີ້:

- ການຖາງປ່າເຮັດໄຮ່ແລະໄຟໄໝ້ປ່າ, ໂດຍສະເພາະໃນເຂດພາກເໜືອ;
- ການເກັບກ່ຽວຂອງປ່າຂອງດົງແບບບໍ່ຍືນຍົງຈາກບັນດາປ່າຜະລິດສ່ວນໃຫຍ່ເກີດຂຶ້ນຢູ່ເຂດພາກກາງແລະພາກໃຕ້, ແລະການຄຸ້ມຄອງຈັດສັນປ່າໄມ້ແບບບໍ່ຍືນຍົງເພື່ອການນຳໃຊ້ໂດຍບັນດາບ້ານຕ່າງໆ;
- ຄວາມຈຳເປັນໃນການຫັນປ່ຽນທີ່ດິນປ່າໄມ້ເພື່ອເຮັດກະສິກຳແລະພັດທະນາພື້ນຖານໂຄງລ່າງ.

ການເຊື່ອມໂຊມຂອງປ່າໄມ້, ໄລຍະກາງທີ່ນຳໄປສູ່ການຫຼຸດລົງຂອງຂອບເຂດປ່າ, ໄດ້ເລັ່ງຢ່າງໄວວາ. ອີງຕາມບົດສະເໜີຄວາມພ້ອມຂອງການກະກຽມ(R-PP)(2010) ສະແດງວ່າວັດຖຸດິບທີ່ກຳລັງເຕີບໂຕໃນປ່າຂອງສປປລາວໄດ້ຫຼຸດລົງໃນອັດຕາ 2-3% ຕໍ່ປີໃນໄລຍະສອງທົດສະວັດທີ່ຜ່ານມາ[4]. ກອງສຳຫຼວດແລະວາງແຜນປ່າໄມ້(FIPD) ຂໍ້ມູນຕົວຢ່າງສະແດງໃຫ້ເຫັນເຖິງການຫຼຸດລົງຢ່າງວ່ອງໄວຂອງປ່າໄມ້ທີ່ມີວັດຖຸດິບອຸດົມສົມບູນ (ມີການປົກຄຸມຫຼາຍກວ່າ 70%) ຈາກ 3.2 ລ້ານເຮັກຕາໃນປີ 2002ເຖິງ840,000 ເຮັກຕາໃນປີ 2012 (ໂດຍ Lestrelin et al, 2013).

ການຫັນປ່ຽນປ່າໄມ້ເພື່ອເຮັດສວນປູກ"ຖືກກົດໝາຍ" ທັນທີທີ່ປ່າຖືກຈັດເປັນປະເພດປ່າເຊື່ອມໂຊມ (ຫຼືປ່າເປີດ). ໃນທາງປະຕິບັດ,ຂະບວນການນີ້ໄດ້ນຳໄປສູ່ການເຝົ້າຕິດຕາມເບິ່ງຄ້າຍຄືກັນໃນບັນດາປະເທດອື່ນໆຂອງອາຊີຕາເວັນອອກສ່ຽງໃຕ້. ຕົວຢ່າງ, ໃນປະເທດກຳປູເຈຍແລະອິນໂດເນເຊຍໄດ້ຫັນປ່ຽນປ່າຂະໜາດໃຫຍ່ເປັນປ່າເຊື່ອມໂຊມ ເຊິ່ງເຮັດໃຫ້ສູນເສຍມູນຄ່າທາງດ້ານການຄ້າຂອງຕົນໃຫ້ແກ່ຜູ້ຂຸດຄົ້ນໄມ້.

ພາລະບົດບາດຂອງການຂຸດຄົ້ນໄມ້ທີ່ຜິດກົດໝາຍ ໃນຂະບວນການເຊື່ອມໂຊມຂອງປ່າໄມ້ແມ່ນຫຍັງ? ພໍເປັນໄປໄດ້ບໍ່ ຢ່າງໜ້ອຍເປັນການຄາດຄະເນຂອບເຂດຂອງການເຊື່ອມໂຊມຂອງປ່າໂດຍປະມານແລະກຳນົດເປັນປັດໃຈຕົ້ນຕໍແລະໂຕຂັບເຄື່ອນຫຼັກທີ່ຢູ່ເບື້ອງຫຼັງ?

ໜ້າແປກໃຈ,ເຖິງວ່າຈະມີການເອົາໃຈໃສ່ຕໍ່ບັນຫາການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນສປປລາວຢ່າງໃຫຍ່ຫຼວງແຕ່ເກືອບບໍ່ມີຄວາມພະຍາຍາມດຳເນີນການປະເມີນແບບດັ່ງກ່າວນັ້ນເລີຍ. ອີງຕາມໜ່ວຍງານສືບສວນດ້ານສິ່ງແວດລ້ອມ (EIA) ແລະບົດລາຍງານຂອງອົງການຕີລາພັກ(Telapak)(2008), ໄມ້ທ່ອນ 600ພັນແມັດກ້ອນໄດ້ຖືກຂຸດຄົ້ນຢ່າງຜິດກົດໝາຍໃນປີ 2006 ມີມູນຄ່າດ້ານການຄ້າເຖິງ250ລ້ານໂດລາສະຫະລັດ[5] (ຕາຕະລາງ2). ນອກເໜືອຈາກຂໍ້ມູນເຫຼົ່ານີ້EIA/Telapakເຊື່ອວ່າການສົ່ງອອກໄມ້ທ່ອນຈຳນວນ500 ພັນແມັດກ້ອນໄປຫວຽດນາມບໍ່ຖືກຕ້ອງຕາມກົດໝາຍເຊັ່ນດຽວກັນລະເມີດກົດໝາຍທີ່ມີຜົນບັງຄັບໃຊ້ໃນປີ 1999-2002ວ່າໂດຍການຫ້າມສົ່ງອອກໄມ້ທີ່ຍັງບໍ່ປຸງແຕ່ງ. ເຫັນໄດ້ຢ່າງຊັດເຈນການຄາດຄະເນນີ້ຂ້ອນຂ້າງບໍ່ຖືກຕ້ອງ ເພາະວ່າບໍ່ໄດ້ຄຳນຶງເຖິງກໍລະນີຍົກເວັ້ນ

ຫຼາຍໆເທື່ອສຳລັບການສົ່ງອອກໄມ້ກົມໂດຍລັດຖະບານໃນການຂຸດຄົ້ນໄມ້ທ່ອນພາຍໃຕ້ໂຄຕ້າສຳລັບການພັດທະນາພື້ນຖານໂຄງລ່າງຫຼືການສ້າງເຂື່ອນໄຟຟ້ານ້ຳຕົກ.
ອີງຕາມບົດລາຍງານກ່ຽວກັບ "ການຂຸດຄົ້ນໄມ້ຢ່າງຜິດກົດໝາຍແລະຕະຫຼາດການຄ້າໄມ້ໂລກ» (Seneca , WRI,2004) ທີ່ຮວບຮວມຜົນການຄາດຄະເນຂອງການຂຸດຄົ້ນໄມ້ຢ່າງຜິດກົດໝາຍໃນບັນດາປະເທດຕ່າງໆ, ອັດຕາສ່ວນໄມ້ທ່ອນທີ່ຜິດກົດໝາຍໃນປະເທດລາວຄາດຄະເນຢູ່ທີ່45%[6]. ຕົວເລກນີ້ບໍ່ກົງກັບຄວາມເປັນຈິງທໍ່ໃດເມື່ອສົມທຽບກັບການຄາດຄະເນຂອງບັນດາປະເທດອື່ນໆທີ່ນຳສະເໜີຢູ່ໃນບົດລາຍງານດຽວກັນນີ້: 70%ຂອງໄມ້ທ່ອນທີ່ຜິດກົດໝາຍຢູ່ໃນປະເທດປາປົວນິວກີນີ, 80% ໃນໂບລີເວຍ, 80-90% ໃນປະເທດເປຣູ, 90% ໃນກຳປູເຈຍແລະແມ້ແຕ່ວ່າປະເທດເອສໂຕເນຍມີສູງເຖິງ50%(ໜ້າຕັ້ງຄຳຖາມ ຍ້ອນຫຍັງອັດຕາການຂຸດຄົ້ນໄມ້ຢ່າງຜິດກົດໝາຍໃນປະເທດລາວຈຶ່ງຕໍ່າກວ່າໃນປະເທດເອສໂຕເນຍ).

ອີງຕາມບົດລາຍງານຢາເສບຕິດໂລກປີ2012, ຫ້ອງການສະຫະປະຊາຊາດວ່າດ້ວຍການຕໍ່ຕ້ານຢາເສບຕິດແລະອາຊະຍາກຳ, ອັດຕາສ່ວນໄມ້ທ່ອນທີ່ຜິດກົດໝາຍໃນການຄ້າໄມ້ທ່ອນລາວສາກົນຖືກຄາດຄະເນຢູ່ທີ່65% (ສົມທຽບກັບ 10% ໃນປະເທດໄທ, 85% ໃນກຳປູເຈຍແລະ 90% ໃນປະເທດປາປົວນິວກີນີ). ອີງຕາມບົດລາຍງານຫຼ້າສຸດຂອງສະຖາບັນຈາທຳ ເຮົາສ໌(Chatham House)(2014)[7]ເຊິ່ງໄດ້ຄາດຄະເນການນຳເຂົ້າຜະລິດຕະພັນໄມ້ທີ່ມີຄວາມສ່ຽງສູງຂອງຫວຽດນາມຈຳນວນທັງໝົດໃນປີ 2013 ຢູ່ທີ່ 2.3 ລ້ານແມັດກ້ອນໃນສົມມູນຂອງໄມ້ໂດຍລວມ(RWE)[a],ການນຳເຂົ້າໄມ້ທ່ອນທີ່ຜິດກົດໝາຍຈາກລາວມີຈຳນວນປະມານ 500 ພັນແມັດກ້ອນ.
ການຄາດຄະເນເຫຼົ່ານີ້ຄົງບໍ່ພຽງພໍໃນການອ້າງອີງ ເນື່ອງຈາກວ່າສື່ສິ່ງພິມດັ່ງກ່າວບໍ່ໄດ້ລະບຸລາຍລະອຽດຂອງວິທີການນຳໃຊ້ແລະຂໍ້ມູນທີ່ພວກເຂົາໄດ້ອ້າງອີງ.
ພວກເຮົາສາມາດເຂົ້າໃຈບາງສ່ວນກ່ຽວກັບມາດຕາສ່ວນຂອງການຄ້າໄມ້ທ່ອນທີ່ຜິດກົດໝາຍໃນສປປລາວຈາກບໍລິມາດໄມ້ທ່ອນທີ່ຍຶດໄດ້ໂດຍອຳນາດການປົກຫ້ອງຖິ່ນ. ໃນປີທີ່ສາມາດຍຶດໄດ້ຫຼາຍທີ່ສຸດແມ່ນປີ 2011, ພະແນກກວດກາປ່າໄມ້(DOFI)ໄດ້ຈຳແນກແລະຍຶດໄມ້ທ່ອນໄດ້180 ພັນແມັດກ້ອນ.[8], ເທົ່າກັບ 79% ຂອງໄມ້ທ່ອນປະຈຳປີທີ່ຈົດທະບຽນໃນລະດູການຂຸດຄົ້ນໄມ້2010-2011[b].

---

[a]ບໍລິມາດສົມມູນຂອງໄມ້ໂດຍລວມ(RWE)ແມ່ນຫົວໜ່ວຍວັດແທກປະລິມານໄມ້ທ່ອນທີ່ນຳໃຊ້ ເຮັດເປັນບໍລິມາດສິນຄ້າທີ່ໃຫ້ມາ.
[b]ຄວາມໜ້າເຊື່ອຖືຂອງສະຖິຕິແຫ່ງລັດລາວ
ກ່ຽວກັບຜົນຂອງການຕ້ານການຂຸດຄົ້ນໄມ້ທີ່ຜິດກົດໝາຍຈະມີການຫາລືກັນຢູ່ໃນພາກ
"ປະສິດທິພາບຂອງການບັງຄັບໃຊ້ກົດໝາຍ".

ການເຮັດວຽກຢູ່ໃນເຄົ້າໂຄງຂອງໂຄງການCarBi ພວກເຮົາພະຍາຍາມຄາດຄະເນມາດຕາສ່ວນຂອງການຂຸດຄົ້ນໄມ້ແລະການຄ້າໄມ້ລະຫວ່າງປະເທດທີ່ຜິດກົດໝາຍມີສາມລະດັບຄື: ລະດັບປະເທດ, ໃນກຸ່ມ 4 ແຂວງພາກໃຕ້ (ລວມທັງແຂວງຕ່າງໆທີ່ໂຄງການດຳເນີນຢູ່ຄື ແຂວງເຊກອງ,ສາລະວັນແລະບັນດາແຂວງໃກ້ຄຽງຄື ແຂວງຈຳປາສັກແລະອັດຕະປືທີ່ມີເງື່ອນໄຂດ້ານສິ່ງແວດລ້ອມແລະເສດຖະກິດສັງຄົມຄ້າຍຄືກັນ) ແລະແຂວງທີ່ແຕກຕ່າງ (ແຂວງເຊກອງ). ຈຸດປະສົງນີ້ໄດ້ກຳນົດຂຶ້ນເນື່ອງຈາກຄວາມຈຳເປັນໃນການຄຳນວນທີ່ເອີ້ນວ່າການຮົ່ວໄຫຼ -ການເຄື່ອນຍ້າຍໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍໄປເຂດພື້ນທີ່ຂອງໂຄງການ ເນື່ອງຈາກການຂະຫຍາຍຕົວຢ່າງວ່ອງໄວດ້ານອຸດສາຫະກຳແປຮູບແລະການອະນຸລັກປ່າໄມ້ໃນສປປລາວແລະບັນດາປະເທດນຳເຂົ້າ.

**ຕາຕະລາງ2. ການຄາດຄະເນຂອງໄມ້ທ່ອນທີ່ຜິດກົດໝາຍໃນການຄ້າເປັນທາງການຂອງຜະລິດຕະພັນໄມ້**

| ການສຶກສາ | ປີ | ສັດສ່ວນ/ຈຳນວນ |
|---|---|---|
| ການຂຸດຄົ້ນໄມ້ຢ່າງຜິດກົດໝາຍແລະຕະຫຼາດຄ້າໄມ້ໂລກ (Seneca, WRI) | 2004 | **ລາວ - 45%** (ຕ່ຳກວ່າປະເທດເອສໂຕເນຍ– 50% (!)<br>ປາປົວນິວກີນີ – 70%<br>ໂບລິເວຍ – 80%<br>ເປຣູ – 80-90%<br>ກຳປູເຈຍ – 90% |
| ຕາມແນວສາຍແດນ:<br>ອຸດສາຫະກຳຂອງຫວຽດນາມດ້ານເຟີນີເຈີ້ແລະການລັກລອບຄ້າໄມ້ທ່ອນຂະຫຍາຍຕົວ (EIA) | 2008 | 600 ພັນແມັດກ້ອນ (ມີມູນຄ່າ250 ລ້ານໂດລາສະຫະລັດ) ໃນປີ 2006<br>500<br>ພັນແມັດກ້ອນໄມ້ສົ່ງໄປຫວຽດນາມຕໍ່ປີແມ່ນບໍ່ຜິດກົດໝາຍ |
| ຕະຫຼາດໄມ້ທ່ອນແລະການຄ້າລະຫວ່າງລາວແລະຫວຽດນາມ:<br>ວິເຄາະລະບົບຕ່ອງໂສ້ສິນຄ້າໄມ້ໄຫຼວຽນທີ່ຂັບເຄື່ອນໂດຍຫວຽດນາມ (ອົງກອນຟໍເຣດ ເທຣັນ)[9] | 2010 | ບໍ່ມີ |
| ທາງແຍກ:<br>ການຄ້າໄມ້ເຖື່ອນລະຫວ່າງລາວແລະຫວຽດນາມ (EIA)[10] | 2011 | ບໍ່ມີ |
| ການອຳນວຍຄວາມສະດວກແຜນການFLEGTຂອງສະຫະພາບເອີຣົບ (EU), ການສຶກສາພື້ນຖານ2, ສປປລາວ: ສະພາບລວມຂອງການຄຸ້ມຄອງປ່າໄມ້, ຕະຫຼາດ | 2011 | ບໍ່ມີ |

| | | |
|---|---|---|
| ແລະການຄ້າ (ອີງກອນຟໍເຣດ ເທຣັນ)[11] | | |
| ຈຸດກວດກາ:<br>ວິທີການຂອງກຸ່ມຜົນປະໂຫຍດສືບຕໍ່ທຳລາຍການຄຸ້ມຄອງປ່າໄມ້ ໃນປະເທດລາວ (EIA)[12] | 20<br>12 | ບໍ່ມີ |
| ແຜນການFLEGTຂອງສະຫະພາບເອີຣົບ (EU), ການສຶກສາເພື່ອເຂົ້າໃຈການໄຫຼວຽນຂອງໄມ້ທ່ອນ.[13] | 20<br>12 | ບໍ່ມີ |
| ບົດລາຍງານຢາເສບຕິດໂລກ2012, ຫ້ອງການສະຫະປະຊາຊາດວ່າດ້ວຍການຕ້ານຢາເສບຕິດແລະອາຊະຍາກຳ.[14] | 20<br>12 | ປະເທດໄທ – 10%<br>**ລາວ - 75%**<br>ກຳປູເຈຍ – 85%<br>ປາປົວນິວກີນີ – 90% |
| ສະຖາບັນຈາທຳເຮົາສ໌(Chatham House): ການຄ້າໄມ້ທ່ອນທີ່ຜິດກົດໝາຍ: ການຕອບສະໜອງໃນປະເທດຫວຽດນາມ | 20<br>14 | 500 ພັນແມັດກ້ອນໃນສົມມູນຂອງໄມ້ໂດຍລວມ(RWE) (ມູນຄ່າ 300ລ້ານໂດລາສະຫະລັດ) ຂອງຜະລິດຕະພັນໄມ້ທີ່ນຳເຂົ້າຈາກລາວ |

ກ່ອນອື່ນຕ້ອງກຳນົດນິຍາມຄວາມໝາຍ"ການຂຸດຄົ້ນໄມ້ຢ່າງຜິດກົດໝາຍ". ທາງວິຊາການ, ໃນຄວາມຄິດເຫັນຂອງພວກເຮົາສ່ວນໃຫຍ່ໄມ້ທ່ອນລາວສາມາດອ້າງໄດ້ວ່າເປັນໄມ້ທ່ອນທີ່ຜິດກົດໝາຍຍ້ອນຊ່ອງວ່າງຂອງກົດໝາຍວ່າດ້ວຍການຂຸດຄົ້ນໄມ້ແລະການປະຕິບັດຕົວຈິງມີຄວາມແຕກຕ່າງກັນຢ່າງສິ້ນເຊີງ. ມີການອາດມີການລະເມີດຫຼາຍຢ່າງຂອງຂໍ້ກຳນົດເຫຼົ່ານີ້ ເຊັ່ນວ່າ:

- ບໍ່ມີການປັກຫຼັກໝາຍເຂດແດນແລະຂາດການວາງແຜນການຂຸດຄົ້ນໄມ້;
- ບໍ່ສາມາດເຮັດຕາມຂໍ້ກຳນົດການປະເມີນຜົນກະທົບສິ່ງແວດລ້ອມສຳລັບໂຄງການພັດທະນາທີ່ຄວນດຳເນີນການກ່ອນຈະເລີ່ມກິດຈະກຳຂອງໂຄງການ;
- ບໍ່ກຳນົດເຂດແດນລະຫວ່າງປ່າເຊື່ອມໂຊມແລະປ່າຜະລິດ ຈົນນຳໄປສູ່ການລະເມີດທັບປ່ຽນປ່າສົມບູນເພື່ອເຮັດສວນປູກ;
- ສືບຕໍ່ຊຳລະໜີ້ທີ່ຖືກສັ່ງຫ້າມຊ້ຳແລ້ວຊ້ຳອີກແລະມີການແລກປ່ຽນໄມ້ທ່ອນເພື່ອເອົາໂຄງການພັດທະນາ;
- ຂຸດຄົ້ນໄມ້ໃນເຂດປ່າສະຫງວນແຫ່ງຊາດ (NPAs).

ສຳລັບຈຸດປະສົງອັນງ່າຍນີ້ (ແລະການລະບຸລາຍລະອຽດວັດຖຸປະສົງ) **ພວກເຮົາກຳນົດໄມ້ທ່ອນທີ່ຜິດກົດໝາຍ (ຫຼືໄມ້ຈາກແຫຼ່ງທີ່ບໍ່ອະນຸຍາດ) ເປັນໄມ້ທ່ອນທີ່ຂຸດຄົ້ນເກີນໂຄຕ້າ (ຫຼືເກີນບໍລິມາດໄມ້ທ່ອນທີ່ຈົດທະບຽນໃນສະໜາມII) ແລະໄມ້ທ່ອນຂຸດຄົ້ນຢູ່ນອກເຂດທີ່ບໍ່ມີອະນຸຍາດຢ່າງເປັນທາງການ.**

## ການປະເມີນການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍໃນລະດັບຊາດ

ວິທີງ່າຍທີ່ສຸດ (ແລະຖືກນຳໃຊ້ຢ່າງກວ້າງຂວາງ) ໃນການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍແມ່ນອີງໃສ່ການສົມທຽບບໍລິມາດຂອງຈຳນວນຂອງໄມ້ທ່ອນ(ໄມ້ທ່ອນທີ່ໄດ້ຂາຍໃຫ້ກັບປະເທດອື່ນແລະທີ່ວາງຂາຍໃນຕະຫຼາດທ້ອງຖິ່ນ) ແລະບໍລິມາດໂດຍລວມທີ່ອອກອະນຸຍາດສຳລັບການຂຸດຄົ້ນໄມ້ທ່ອນ(ໂຄຕ້າ). ໃນການສົມທຽບນີ້ບໍລິມາດຂອງຜະລິດຕະພັນໄມ້ຖືກຫັນປ່ຽນເປັນສົມມູນຂອງໄມ້ໂດຍລວມ(RWE)ໂດຍນຳໃຊ້ຄ່າສຳປະສິດ (ຄ່າສຳປະສິດທີ່ຖືກຍອມຮັບເປັນທາງການຫຼືບັນດາຜູ້ຊ່ຽວຊານດ້ານສຳປະສິດ). ຢ່າງໃດກໍຕາມ, ຍັງມີຄວາມຫຍຸ້ງຍາກຫຼາຍຢ່າງໃນການປະຕິບັດວິທີ "ງ່າຍດາຍ"ນີ້ໃນປະເທດລາວ.
ຢ່າງທີໜຶ່ງຄື ບໍ່ມີຂໍ້ມູນທີ່ຊັດເຈນກ່ຽວກັບການອະນຸຍາດຂຸດຄົ້ນໄມ້ທີ່ອອກ(ໂຄຕ້າ) ແລະບໍລິມາດທີ່ຈົດທະບຽນຢ່າງເປັນທາງການຂອງໄມ້ທ່ອນທີ່ຂຸດຄົ້ນໃນປະເທດລາວ. ຂໍ້ມູນທີ່ສະແດງຢູ່ໃນບັນດາບົດລາຍງານຕ່າງໆທີ່ອ້າງອີງເຖິງພະແນກປ່າໄມ້(DOF) ທີ່ຂື້ນກັບກະຊວງກະສິກຳແລະປ່າໄມ້ ຂ້ອນຂ້າງບໍ່ກົງກັນ; ຄວາມຈິງຂໍ້ມູນໃນປີດຽວກັນອາດມີຄວາມແຕກຕ່າງກັນຫຼາຍເທົ່າຕົວ. ເຫັນໄດ້ຢ່າງຊັດເຈນວ່າບໍ່ມີຂໍ້ມູນຄົບຖ້ວນກ່ຽວກັບໂຄຕ້າທີ່ອອກແລະບໍລິມາດການຂຸດຄົ້ນໄມ້ທີ່ຈົດທະບຽນຢູ່ໃນຂັ້ນເມືອງແລະແຂວງຖືກຖືກສະໜອງໃຫ້ແກ່ພະແນກປ່າໄມ້(DOF).[15].

ດັ່ງນັ້ນ, ອີງຕາມຂໍ້ມູນທີ່ໄດ້ຮັບຈາກຫ້ອງການກະສິກຳແລະປ່າໄມ້(PAFO)ແຂວງອັດຕະປື, ສາລະວັນແລະແຂວງເຊກອງ, ບໍລິມາດໂດຍລວມຂອງໂຄຕ້າໃນລະດູການ 2011-2012ແມ່ນ 273.9 ພັນແມັດກ້ອນ. ໂຄຕ້ານີ້ບັນຈຸ 91.7% ຂອງໂຄຕ້າແຫ່ງຊາດໂດຍລວມ. ບໍລິມາດຂອງການຂຸດຄົ້ນໄມ້ໂດຍລວມທີ່ຈົດທະບຽນໂດຍບັນດາເຈົ້າໜ້າທີ່ໃນ 4 ແຂວງພາກໃຕ້ (ແຂວງອັດຕະປື, ຈຳປາສັກ, ສາລະວັນແລະແຂວງເຊກອງ) ໃນຊ່ວງລະດູການດຽວກັນນີ້ແມ່ນ222.3 ພັນແມັດກ້ອນ ເຊິ່ງເກີນບໍລິມາດຂອງການຂຸດຄົ້ນໄມ້ໂດຍລວມທີ່ຈົດທະບຽນແຫ່ງຊາດ (71.8 ພັນແມັດກ້ອນ) ສາມເທົ່າ (ເປັນເລື່ອງໄຮ້ສາລະ).
ອີງຕາມລັດຖະມົນຕີກະຊວງກະສິກຳແລະປ່າໄມ້, ທ່ານວິໄລວັນ ພົມເຂ.[16], ໂຄຕ້າການຂຸດຄົ້ນໄມ້ທ່ອນປະຈຳປີໂດຍລວມສຳລັບລະດູການຂຸດຄົ້ນໄມ້2013-2014ແມ່ນພຽງແຕ່ 580.072 ພັນແມັດກ້ອນ. ຕົວເລກນີ້ບໍ່ສອດຄ່ອງກັບຂໍ້ມູນກ່ຽວກັບໂຄຕ້າທີ່ອອກແລະບໍລິມາດຂອງການຂຸດຄົ້ນໄມ້ທ່ອນ
ທີ່ຈົດທະບຽນຢ່າງເປັນທາງການໃນບາງແຂວງ. ອີງຕາມທ່ານດວງດີ ອຸດທະຈັກ, ສະມາຊິກສະພາແຫ່ງຊາດ, ເຊິ່ງໄດ້ກ່າວຢູ່ໃນກອງປະຊຸມສະໄໝສາມັນຄັ້ງທີ VII ຂອງສະພາແຫ່ງຊາດໃນເດືອນກໍລະກົດປີ2014, "ປີທີ່ຜ່ານມາລັດຖະບານໄດ້ອອກອະນຸຍາດໃຫ້ບໍລິສັດໜຶ່ງຂຸດຄົ້ນໄມ້ຢູ່ແຂວງບໍລິຄຳໄຊມີຈຳນວນ600,000ແມັດກ້ອນ" (ເຊັ່ນ:ໂຄຕ້າພຽງແຂວງດຽວກໍເກີນໂຄຕ້າໃນທົ່ວປະເທດແລ້ວ).[17].

ອີງຕາມບົດລາຍງານຈາກຫ້ອງການກວດກາປ່າໄມ້ແຂວງ(POFI) ອັດຕະປື, ທີ່ຈັດພິມໃນຕົ້ນເດືອນກັນຍາ ປີ2014, 173,925 ແມັດກ້ອນຂອງໄມ້ທ່ອນໂດຍລວມຖືກຂຸດຄົ້ນໃນງົບປະມານແຫ່ງປີ 2013-14ລວມ ທັງ 21 ພັນແມັດກ້ອນ ຈາກໂຄງການກໍ່ສ້າງເສັ້ນທາງແລະລະບົບສາຍສົ່ງກະແສໄຟຟ້າ, 66 ພັນແມັດກ້ອນຈາກໂຄງການເຂື່ອນໄຟຟ້ານ້ຳຕົກເຊກະໝານ, 7 ພັນແມັດກ້ອນ ຈາກ ການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍອື່ນໆແລະສ່ວນທີ່ເຫຼືອມາຈາກບັນດາໂຄງການພັດທະນາຕ່າງໆ.[18] .ເພາະສະນັ້ນບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງເປັນທາງການພຽງແຕ່ໃນໜຶ່ງແຂວງເທົ່ານັ້ນມີເຖິງ30% ຂອງໂຄຕ້າແຫ່ງຊາດໂດຍລວມ.

ຍ້ອນຄວາມແຕກຕ່າງເຫຼົ່ານີ້ຂໍ້ມູນທາງການກ່ຽວກັບໂຄຕ້າການຂຸດຄົ້ນໄມ້ທ່ອນແຫ່ງຊາດສາມາດນຳໃຊ້ພຽງ ເພື່ອເຂົ້າໃຈມາດຕາສ່ວນຂອງບໍລິມາດການຂຸດຄົ້ນໄມ້ທ່ອນທີ່ອະນຸຍາດຢ່າງເປັນທາງການພາຍໃນປະເທດ (ຫຼືເພື່ອເຂົ້າໃຈການອະນຸຍາດດັ່ງກ່າວ) ແລະໃນບາງຂອບເຂດເພື່ອເຂົ້າໃຈການປ່ຽນແປງຂອງຂະບວນ ການອອກໃບອະນຸຍາດເທົ່ານັ້ນ.

ອີງຕາມຂໍ້ມູນເປັນທາງການບໍລິມາດໄມ້ທ່ອນທີ່ຂຸດຄົ້ນປະຈຳປີຕົວຈິງ(ທີ່ຈົດທະບຽນຢ່າງເປັນທາງການ)ໃນ ລາວໄດ້ຂະຫຍາຍຕົວນັບຕັ້ງແຕ່ຕົ້ນປີ 1980ຈົນເຖິງປີ1994-95ໃນເມື່ອໄດ້ບັນລຸເຖິງຈຸດສູງ ສຸດມີໄມ້ທ່ອນ874 ພັນແມັດກ້ອນ ແຕ່ຫຼັງຈາກນັ້ນມີແນວໂນ້ມຫຼຸດລົງຢ່າງຕໍ່ເນື່ອງເຖິງປະຈຸບັນ. ການຫຼຸດ ລົງໄດ້ຢຸດຕິຍ້ອນການເພີ່ມຂຶ້ນຂອງໄມ້ທ່ອນສອງຄັ້ງໃນປີ 1999 ແລະປີ 2007-2008 (734ພັນແມັດກ້ອນແລະສູງເຖິງ 580 ພັນແມັດກ້ອນ, ຕາມລຳດັບ) (ຮູບ1). ອັນຫຼັງແມ່ນການສະໜອງ ໄມ້ເພີ່ມຕື່ມຈາກເຂດໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳເທີນ2. ໃນເຄິ່ງທຳອິດຂອງປີ 2000 ການຂຸດຄົ້ນປະຈຳປີທີ່ຈົດທະບຽນໄດ້ຂຶ້ນໆລົງໆລະຫວ່າງ 300-450 ພັນແມັດກ້ອນ, ແລະໃນຕົ້ນປີ 2009 ສະແດງໃຫ້ເຫັນມີແນວໂນ້ມອ່ຽງໄປທາງຫຼຸດລົງ.




**ຮູບ1.ການປ່ຽນແປງຂອງການອະນຸຍາດຢ່າງເປັນທາງການ (ໂຄຕ້າ) ແລະບໍລິມາດຂອງການຂຸດຄົ້ນໄມ້ທີ່ຈົດທະບຽນໃນລາວ (ຂໍ້ມູນງົບປະມານແຕ່ງປີ ເລີ່ມແຕ່ເດືອນຕຸລາ).**

ແຫຼ່ງຂໍ້ມູນ: ພະແນກປ່າໄມ້, ກະຊວງກະສິກໍາແລະປ່າໄມ້

ໂຄຕ້າ1 ແລະ ການຂຸດຄົ້ນ1–ຈາກນະໂຍບາຍດ້ານປ່າຜະລິດ ແຫ່ງສປປລາວ(2001);

ໂຄຕ້າ2 ແລະ ການຂຸດຄົ້ນ2–ຈາກການສຶກສາທິດທາງດ້ານປ່າໄມ້ ແຫ່ງສປປລາວ(2009);

ໂຄຕ້າ3 ແລະ ການຂຸດຄົ້ນ3–ຈາກຕົວຊີ້ວັດພາກປະຕິບັດຂະແໜງປ່າໄມ້(2014), 2014;

ໂຄຕ້າ4 ແລະ ການຂຸດຄົ້ນ4–ຈາກການສຶກສາເພື່ອເຂົ້າໃຈການໄຫຼວຽນ&ຄວບຄຸມໄມ້ທ່ອນໃນສປປ ລາວ(2012);

ໂຄຕ້າ5–ຈາກໜັງສືພິມວຽງຈັນທາມ, ວັນທີ5 ເດືອນພຶດສະພາ ປີ2014.

ການຂາດຂໍ້ມູນທາງການກ່ຽວກັບບໍລິມາດ ຫຼື ຈໍານວນໂຕນຂອງການສົ່ງອອກໄມ້ທ່ອນເປັນອຸປະສັກໜຶ່ງໃນການຄໍານວນຄວາມດຸ່ນດ່ຽງ ລະຫວ່າງ ການຂຸດຄົ້ນ ແລະການສົ່ງອອກໄມ້ທ່ອນຢ່າງເປັນທາງການ.

ຂໍ້ມູນກ່ຽວກັບມູນຄ່າການສົ່ງອອກໄມ້ທ່ອນຈາກກົມພາສີລາວຂອງກະຊວງການເງິນ (MOF)ທີ່ສາມາດໃຊ້ເພື່ອຄຳນວນບໍລິມາດທີ່ສົ່ງອອກ (ຂຶ້ນກັບເງື່ອນໄຂທີ່ເຮົາຮູ້ລາຄາສະເລ່ຍຕໍ່ໜຶ່ງແມັດກ້ອນຂອງຜະລິດຕະພັນທີ່ໃຫ້) ເບິ່ງບໍ່ໜ້າເຊື່ອຖື. ໃນປີ 2013 ມູນຄ່າການສົ່ງອອກເປັນທາງການມີພຽງແຕ່ 8% ຂອງມູນຄ່າໂດຍລວມຂອງການນຳເຂົ້າໄມ້ທ່ອນຈາກລາວ ດັ່ງການລາຍງານຂອງບັນດາປະເທດປາຍທາງ (ຮູບ2). ຈາກປີ2004 ຫາ2013 ມູນຄ່າການນຳເຂົ້າໄມ້ຂອງລາວເພີ່ມຂຶ້ນໂດຍ 6(!)ເທົ່າ, ແຕ່ມູນຄ່າການສົ່ງອອກເພີ່ມຂຶ້ນພຽງແຕ່ 26% ເທົ່ານັ້ນ.ສະແດງໃຫ້ເຫັນວ່າເລີ່ມຈາກກາງປີ 2000 ຊ່ອງວ່າງລະຫວ່າງມູນຄ່າການສົ່ງອອກແລະມູນຄ່າການນຳເຂົ້າໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.




**ຮູບ2. ການສົມທຽບການສົ່ງອອກຜະລິດຕະພັນໄມ້ລາວ ແລະມູນຄ່າການນຳເຂົ້າ(ລະຫັດປະເພດໄມ້ 44).**

ແຫຼ່ງຂໍ້ມູນ: ມູນຄ່າການສົ່ງອອກສຳລັບງົບປະມານແຫ່ງປີ (ເລີ່ມຕົ້ນໃນເດືອນຕຸລາ) - ກົມພາສີ, ກະຊວງການເງິນ(MOF) (ຕົວຊີ້ວັດພາກປະຕິບັດຂະແໜງປ່າໄມ້, 2014); ມູນຄ່າການນຳເຂົ້າຕໍ່ປີ - ຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ.

ຂໍ້ມູນທີ່ໜ້າເຊື່ອຖືທີ່ສຸດຂອງການນຳເຂົ້າໄມ້ຈາກລາວທີ່ເປີດເຜີຍຕໍ່ສາທາລະນະ ມີຢູ່ໃນຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ. ແຕ່ໜ້າເສຍດາຍຂໍ້ມູນນີ້ບໍ່ເອກະພາບ. ຕົວຢ່າງ, ຫວຽດນາມ, ຜູ້ນຳເຂົ້າ

ໄມ້ທ່ອນລາວລາຍໃຫຍ່ທີ່ສຸດ, ໃນເກືອບທຸກກໍລະນີໄດ້ສະໜອງຂໍ້ມູນພຽງແຕ່ດ້ານມູນຄ່າແຕ່ວ່າບໍ່ໄດ້ສະໜອງຂໍ້ມູນດ້ານບໍລິມາດຂອງຜະລິດຕະພັນໄມ້ທີ່ນໍາເຂົ້າ. ແລະຜູ້ບໍລິໂພກດັ້ງເດີມໄມ້ລາວອີກປະເທດໜຶ່ງຄື ປະເທດໄທ - ສະໜອງຂໍ້ມູນການນໍາເຂົ້າເປັນຄິວ ເຊິ່ງເຮັດໃຫ້ການຕີຄວາມໝາຍຫຍຸ້ງຍາກ. ປະເທດຈີນບໍ່ໄດ້ລາຍງານບໍລິມາດໃນປີ 2014. ຢ່າງໃດກໍຕາມ, ການວິເຄາະຂໍ້ມູນການນໍາເຂົ້າສາມາດເຮັດໃຫ້ພວກເຮົາສະຫຼຸບໄດ້ບາງຢ່າງກ່ຽວກັບການປ່ຽນແປງຂອງການຂຸດຄົ້ນໄມ້ຢູ່ໃນປະເທດລາວ.

ມູນຄ່າຜະລິດຕະພັນໄມ້ທີ່ນໍາເຂົ້າຈາກລາວເພີ່ມຂຶ້ນເປັນ 14.4(!)ເທົ່າຈາກຕົ້ນປີ 2000 ເຖິງ 2014, ເປັນຈໍານວນເງິນເຖິງ1,671.3 ລ້ານໂດລາສະຫະລັດ (ຮູບ3). ຈາກປີ 2009 ຫາ 2014ໄດ້ເພີ່ມຂຶ້ນຫຼາຍກວ່າ 8ເທົ່າ. ການໄຫຼອອກຂອງໄມ້ທ່ອນຈາກສປປລາວເກືອບເພີ່ມຂຶ້ນເທົ່າຕົວ (89%) ໃນປີ 2011 ເມື່ອທຽບກັບປີ 2010ແລະຫຼັງຈາກນັ້ນພຸ່ງຂຶ້ນຢ່າງໄວວາອີກເທື່ອໜຶ່ງໃນປີ 2013 ເພີ່ມຂຶ້ນໂດຍ 62% ເມື່ອທຽບກັບປີ 2012 ແລະປີ 2014 ໂດຍ 70% ເມື່ອທຽບກັບປີ 2013.

ການພຸ່ງຂຶ້ນທີ່ໜ້າປະທັບໃຈແມ່ນການນໍາເຂົ້າໄມ້ທ່ອນລາວໄປຈີນເຊິ່ງເພີ່ມຂຶ້ນ 24(!)ເທົ່າຈາກປີ2008ຫາ2014 (44.7 ແລະ1,045ລ້ານໂດລາສະຫະລັດ,ຕາມລໍາດັບ). ໃນປີ 2014ໄດ້ເພີ່ມຂຶ້ນ 140% ເມື່ອທຽບກັບປີ 2013 ແລະໃນທີ່ສຸດ ປະເທດຈີນໄດ້ລໍ້າໜ້າຫວຽດນາມແລະກາຍເປັນຜູ້ນໍາເຂົ້າໄມ້ລາວລາຍໃຫຍ່ທີ່ສຸດ. ການນໍາເຂົ້າຂອງຫວຽດນາມໃນຊ່ວງເວລາດຽວກັນເພີ່ມຂຶ້ນ 4.2 ເທົ່າຈາກ 131.7ລ້ານໂດລາສະຫະລັດເຖິງ559.5ລ້ານໂດລາສະຫະລັດ.

ໃນປີ 2014 ຈີນ ແລະຫວຽດນາມມີສ່ວນຮັບຊື້ເຖິງ96% ຂອງການສົ່ງອອກໄມ້ລາວໃນດ້ານມູນຄ່າ(63 ແລະ 33% ຕາມລໍາດັບ). ມູນຄ່າການນໍາເຂົ້າເກືອບທັງໝົດນີ້ເກີດຂຶ້ນໂດຍໄມ້ທໍາມະຊາດເນື່ອງຈາກວ່າໄມ້ຈາກສວນປູກລາວສາມາດຜະລິດບໍລິມາດໄມ້ເນື້ອແຂງມູນຄ່າສູງມີຈໍານວນຈໍາກັດຫຼາຍ.



**ຮູບ3. ການປ່ຽນແປງຂອງມູນຄ່າຜະລິດຕະພັນໄມ້ທ່ອນທີ່ສົ່ງອອກຈາກລາວໂດຍບັນດາປະເທດນຳເຂົ້າ.**

ແຫຼ່ງຂໍ້ມູນ: ຮວບຮວມຈາກຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ[a]; ຂໍ້ມູນກ່ຽວກັບການນຳເຂົ້າໂດຍຫວຽດນາມໃນປີ 2014ມາຈາກ ໂຕ ຊວນ ຟຸກ(2015)[19].

ການເພີ່ມຂຶ້ນຂອງມູນຄ່າການນຳເຂົ້າທີ່ໜ້າປະທັບໃຈສາມາດອະທິບາຍໄດ້ດັ່ງຕໍ່ໄປນີ້:

- ການເພີ່ມຂຶ້ນຢ່າງຫຼວງຫຼາຍໃນບໍລິມາດຂອງໄມ້ທ່ອນທີ່ນຳເຂົ້າກ່ຽວຂ້ອງກັບການເພີ່ມຂຶ້ນທີ່ຄ້າຍຄືກັນຂອງການຂຸດຄົ້ນໄມ້ທ່ອນ;
- ການເພີ່ມອັດຕາສ່ວນຂອງຊະນິດໄມ້ທີ່ມີມູນຄ່າສູງໃນການສົ່ງອອກໄມ້ລາວ;
- ການເພີ່ມອັດຕາສ່ວນຂອງໄມ້ແປຮູບທີ່ມີມູນຄ່າສູງ.

ອັດຕາສ່ວນໄມ້ທ່ອນແລະໄມ້ແປຮູບໃນການນຳເຂົ້າໂດຍລວມຈາກປະເທດລາວຄິດເປັນມູນຄ່າເງິນເກືອບເກີນ90% ມາໂດຍຕະຫຼອດໃນຊ່ວງປີ2000 ຫາ2014, ເຖິງ95% ໃນປີ2011-2013 ແລະເກືອບເຖິງ 98% ໃນປີ2014(ຍົກເວັ້ນປີ 2004 ແລະ 2005ເຊິ່ງມີການເພີ່ມຂຶ້ນຂອງການນຳເຂົ້າໄມ້ອັດຢ່າງກະທັນຫັນຊົ່ວຄາວ). ຍິ່ງໄປກວ່ານັ້ນ, ອັດຕາສ່ວນໄມ້ແປຮູບໄດ້ບັນລຸເຖິງ81 % ໃນປີ 2002, ແຕ່ຫຼັງຈາກປີ 2006ມີ 60%ໂດຍສະເລ່ຍ ແລະຫຼຸດລົງເຖິງ 41% ໃນປີ 2014 (ຮູບ 4). ຈາກກາງປີ 2000, ອັດຕາສ່ວນໄມ້ທ່ອນໃນການສົ່ງອອກໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງແລະໄດ້ບັນລຸເຖິງ56 % ໃນປີ 2014 ຂະນະທີ່ໃນປີ 2002 ກວມເອົາພຽງແຕ່ 14%ເທົ່ານັ້ນ (ນອກຈາກນັ້ນມູນຄ່າການສົ່ງອອກຂອງໄມ້ທ່ອນເພີ່ມຂຶ້ນເທົ່າຕົວໃນປີ 2014 ເມື່ອທຽບກັບປີ 2013).

**ດັ່ງນັ້ນການປ່ຽນແປງໃນມູນຄ່າຂອງການນຳເຂົ້າບໍ່ມີຜົນຈາກການເພີ່ມຂຶ້ນອັດຕາສ່ວນຂອງໄມ້ແປຮູບໃນການນຳເຂົ້າຈາກລາວ.**

[a] ເນື່ອງຈາກວ່າວັນທີ11ມິຖຸນາ2015 ຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດບໍ່ໄດ້ລວມເອົາຂໍ້ມູນການນຳເຂົ້າໄມ້ລາວທີ່ລາຍງານໂດຍຫວຽດນາມ




**ຮູບ4.ການປ່ຽນແປງສ່ວນປະກອບຂອງຜະລິດຕະພັນການນຳເຂົ້າໄມ້ຈາກລາວ.**

ແຫຼ່ງຂໍ້ມູນ: ຮວບຮວມຈາກຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ; ຂໍ້ມູນການນຳເຂົ້າໂດຍຫວຽດນາມໃນປີ 2014ມາຈາກໂຕ ຊວນ ຟຸກ(2015).

ການວິເຄາະຂໍ້ມູນຈາກຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດສຳລັບປະເທດຈີນ (ຕົວຊີ້ວັດພາກປະຕິບັດຂະແໜງປ່າໄມ້,2014[20]) ສະແດງໃຫ້ເຫັນວ່າ**ການເພີ່ມຂຶ້ນຂອງມູນຄ່າການສົ່ງອອກໄມ້ທ່ອນລາວໄປຈີນມີສາເຫດມາຈາກການເພີ່ມຂຶ້ນຢ່າງຕໍ່ເນື່ອງໃນບໍລິມາດໄມ້ທ່ອນແລະການເພີ່ມຂຶ້ນໃນມູນຄ່າຕໍ່ຄິວຂອງຜະລິດຕະພັນໄມ້ທີ່ສົ່ງອອກຍ້ອນອັດຕາສ່ວນຂອງຊະນິດໄມ້ມູນຄ່າສູງເປັນຈຳນວນຫຼາຍໃນການສົ່ງອອກຂອງລາວ (ຕົ້ນຕໍເປັນຜະລິດຕະພັນທີ່ບໍ່ໄດ້ແປຮູບ).**ຄືກັບບໍລິມາດໄມ້ທ່ອນທີ່ນຳເຂົ້າຈາກປະເທດລາວໄດ້ເພີ່ມຂຶ້ນຈາກປີ2008ຫາ2013 ໂດຍ 4.7ເທົ່າ (ຈາກ 44 ຫາ 205 ພັນແມັດກ້ອນ) ແຕ່ລາຄາຕໍ່ໜຶ່ງແມັດກ້ອນໃນຊ່ວງເວລາດຽວກັນໄດ້ເພີ່ມຂຶ້ນເປັນ3.7ເທົ່າ (ຈາກ 409 ໂດລາສະຫະລັດເຖິງ 1,505 ໂດລາສະຫະລັດ).

ໃນປີ 201386% ຂອງບໍລິມາດ ແລະ95% ຂອງມູນຄ່າໄມ້ທ່ອນໂດຍລວມປະກອບດ້ວຍຊະນິດໄມ້ທີ່ມີມູນຄ່າສູງ ດັ່ງທີ່ອະທິບາຍຢູ່ໃນມາດຕະຖານແຫ່ງຊາດທົ່ງໝູຂອງປະເທດຈີນ. ຜະລິດຕະພັນທີ່ມີມູນຄ່າສູງທີ່ກ່ຽວຂ້ອງກັບການນຳເຂົ້າຈາກລາວ ອາດມີຄື: ໄມ້ດູ່ (macrocarpus Pter-ocarpus), ໄມ້ຄຳພີ້ ຫຼື ໄມ້ປາດູ່(bariensis Dalbergia, ອີກຊື່ໜຶ່ງຄື - D. Olivery)ແລະໄມ້ຂະຍຸງ (cochinchinensis Dalbergia).

ການນຳເຂົ້າໄມ້ແປຮູບໄດ້ເພີ່ມຂຶ້ນໂດຍ4.6 ເທົ່າ (ຈາກ 21 ເຖິງ 96 ພັນແມັດກ້ອນ). ແລະລາຄາຕໍ່ໜຶ່ງແມັດກ້ອນຂອງໄມ້ແປຮູບເພີ່ມຂຶ້ນໂດຍ2ເທົ່າ (ຈາກ 599 ໂດລາສະຫະລັດເຖິງ1,230 ໂດລາສະຫະລັດ). ເຊັ່ນດຽວກັນກັບກໍລະນີຂອງຈີນ ການເພີ່ມຂຶ້ນໃນມູນຄ່າການສົ່ງອອກໄມ້ທ່ອນລາວໄປຫວຽດນາມມີຜົນຈາກການເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງບໍລິມາດໄມ້ທ່ອນແລະການເພີ່ມຂຶ້ນໃນມູນຄ່າຕໍ່ຄິວຂອງ
ຜະລິດຕະພັນໄມ້ທີ່ສົ່ງອອກ (ຕາຕະລາງ3). ຈາກປີ2012ຫາ2014ບໍລິມາດໄມ້ທ່ອນແລະໄມ້ແປຮູບທີ່ສົ່ງອອກໄປຫວຽດນາມໄດ້ເພີ່ມຂຶ້ນໂດຍ55% ແລະ 74%ໃນຂະນະທີ່ລາຄາໄດ້ເພີ່ມຂຶ້ນໂດຍ27% ແລະ 13 % ຕາມລຳດັບ. ຂະນະດຽວກັນຍັງຄົງຕ່ຳກວ່າ2.5-3.5 ແລະ 1.5-1.7ເທົ່າເມື່ອທຽບກັບລາຄາຂອງໄມ້ທ່ອນແລະໄມ້ແປຮູບທີ່ສົ່ງອອກໄປປະເທດຈີນ.
ການມີລາຄາທີ່ຕ່ຳອາດກ່ຽວຂ້ອງກັບອັດຕາສ່ວນທີ່ໜ້ອຍຂອງຊະນິດໄມ້ມູນຄ່າສູງໃນການສົ່ງອອກໄປຫວຽດນາມ ເມື່ອທຽບກັບປະເທດຈີນຫຼື ບໍ່ມີການເປີດເຜີຍຊະນິດໄມ້ຕົວຈິງໂດຍພໍ່ຄ້າໄມ້ຫວຽດນາມ.
ດັ່ງນັ້ນ ອີງຕາມດ່ານພາສີຫວຽດນາມໃນປີ 2012ຜະລິດຕະພັນໄມ້ທີ່ມີບໍລິມາດ194.224 ແມັດກ້ອນໄດ້ຖືກສົ່ງອອກຈາກສປປລາວ ຜ່ານດ່ານຊາຍແດນສາກົນ ພູເກືອ -ໂບວາຍກວມເອົາ40%ຂອງການສົ່ງອອກໄມ້ລາວທີ່ຈົດທະບຽນໂດຍລວມໄປຫວຽດນາມໃນປີນັ້ນ.
ຢ່າງໜ້ອຍມີສາມໄຕມາດຂອງບໍລິມາດໄມ້ນີ້ເປັນຊະນິດໄມ້ທຳມະດາ. ແຕ່ອີກ51% ຂອງມູນຄ່າທັງໝົດເປັນປະເພດໄມ້ມູນຄ່າສູງ ຄື: Gỗ hương (ໄມ້ດູ່) -23%ຂອງມູນຄ່າທັງໝົດ, Trắc(ໄມ້ຂະຍຸງ) -21% , Cẩm lai(ໄມ້ຄຳພີ້)-7%[21].

**ຕາຕະລາງ3. ການປ່ຽນແປງຂອງການສົ່ງອອກໄມ້ລາວໄປຫວຽດນາມ ແລະຈີນ ປີ2012-2014**

| | 2012 | 2013 | 2014 |
|---|---|---|---|
| ການສົ່ງອອກໄປຫວຽດນາມ | | | |
| ໄມ້ທ່ອນ, ຄິດເປັນແມັດກ້ອນ | 199,000 | 226,000 | 309,000 |
| ໄມ້ທ່ອນ, ຄິດເປັນເງິນໂດລາສະຫະລັດ | 76,013,889 | 135,406,649 | 149,500,000 |
| ລາຄາໄມ້ທ່ອນ, ໂດລາສະຫະລັດ/ແມັດກ້ອນ | 382 | 599 | 484 |
| ການປ່ຽນແປງຂອງບໍລິມາດ | - | +14% | +37% |
| ການປ່ຽນແປງຂອງລາຄາ | - | +57% | -19% |
| ໄມ້ແປຮູບ, ຄິດເປັນແມັດກ້ອນ | 284,000 | 385,000 | 495,000 |

| | | | |
|---|---|---|---|
| ໄມ້ແປຮູບ, ຄິດເປັນເງິນໂດລາສະຫະລັດ | 208,175,749 | 323,064,976 | 410,000,000 |
| ລາຄາໄມ້ແປຮູບ, ໂດລາສະຫະລັດ/ແມັດກ້ອນ | 733 | 839 | 828 |
| ການປ່ຽນແປງຂອງປໍລິມາດ | - | +36% | +29% |
| ການປ່ຽນແປງຂອງລາຄາ | - | +14% | -1% |
| ການສົ່ງອອກໄປຈີນ | | | |
| ໄມ້ທ່ອນ, ຄິດເປັນແມັດກ້ອນ | 109,631 | 205,521 | ບໍ່ມີ |
| ໄມ້ທ່ອນ, ຄິດເປັນເງິນໂດລາສະຫະລັດ | 146,033,767 | 309,266,562 | 783,274,789 |
| ລາຄາໄມ້ທ່ອນ, ໂດລາສະຫະລັດ/ແມັດກ້ອນ | 1,332 | 1,505 | - |
| ການປ່ຽນແປງຂອງປໍລິມາດ | +2% | +87% | - |
| ການປ່ຽນແປງຂອງລາຄາ | -15% | +13% | - |
| ໄມ້ແປຮູບ, ຄິດເປັນແມັດກ້ອນ | 70,664 | 96,396 | ບໍ່ມີ |
| ໄມ້ແປຮູບ, ຄິດເປັນເງິນໂດລາສະຫະລັດ | 86,695,561 | 118,531,833 | 245,323,427 |
| ລາຄາໄມ້ແປຮູບ, ໂດລາສະຫະລັດ/ແມັດກ້ອນ | 1,227 | 1,230 | - |
| ການປ່ຽນແປງຂອງປໍລິມາດ | +24% | +36% | - |
| ການປ່ຽນແປງຂອງລາຄາ | +24% | 0% | - |

ແຫຼ່ງຂໍ້ມູນ:ນຳເຂົ້າໂດຍປະເທດຈີນໃນປີ 2012 ແລະປີ 2013 - ຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ; ນຳເຂົ້າໂດຍຫວຽດນາມ - ຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດແລະດ່ານພາສີຫວຽດນາມ.[22].

ປໍລິມາດໄມ້ລາວທີ່ສົ່ງອອກ(ໄມ້ທ່ອນແລະໄມ້ແປຮູບ) ໄປປະເທດຈີນແລະຫວຽດນາມໂດຍລວມໃນປີ 2012ມີ663 ພັນແມັດກ້ອນ, ເຊິ່ງງສູງກວ່າໂຄຕ້າແຫ່ງຊາດໂດຍລວມເຖິງ 86% (357 ພັນແມັດກ້ອນ )ແລະ 9ເທົ່າສູງກວ່າການຂຸດຄົ້ນທີ່ຈົດທະບຽນຢ່າງເປັນທາງການ - 72 ພັນແມັດກ້ອນ (ຕາຕະລາງ4).

ຖ້າຫາກພວກເຮົາເອົາບໍລິມາດໄມ້ທ່ອນທີ່ຕ້ອງການມາຜະລິດເປັນໄມ້ແປຮູບ (ຖ້າພວກເຮົາ ໃຊ້ຄ່າສໍາປະສິດ50%ສໍາລັບຫັນປ່ຽນໄມ້ແປຮູບເປັນໄມ້ກົມ), **ບໍລິມາດການສົ່ງອອກໃນປີ 2012 ເກີນໂຄຕ້າແຫ່ງຊາດໂດຍ2.9ເທົ່າ ແລະການຂຸດຄົ້ນໄມ້ຢ່າງເປັນທາງການ - ໂດຍເກືອບ8 ເທົ່າ.**

ໃນປີ 2013ບໍລິມາດໄມ້ທ່ອນແລະໄມ້ແປຮູບລາວໂດຍລວມທີ່ສົ່ງອອກໄປປະເທດຈີນແລະຫວຽດນາມມີຈໍານວນ 913 ພັນແມັດກ້ອນ. ເທົ່າກັບ 1.4 ລ້ານແມັດກ້ອນ ໃນສົມມູນຂອງໄມ້ໂດຍລວມ(RWE), **ເຊິ່ງສູງກວ່າໂຄຕ້າແຫ່ງຊາດເຖິງ 4.6 ເທົ່າ ແລະ 10.4 ເທົ່າ ສູງກວ່າການຂຸດຄົ້ນທີ່ຈົດທະບຽນຢ່າງເປັນທາງການ.**

ເຫັນໄດ້ຊັດເຈນວ່າໂດຍເພີ່ມໃສ່ກັບການໄຫຼວຽນຂອງຜະລິດຕະພັນທີ່ສົ່ງອອກໄປປະເທດໄທ ພວກເຮົາໄດ້ຊ່ອງວ່າງທີ່ຊັດເຈນຕື່ມອີກລະຫວ່າງບໍລິມາດໂຄຕ້າແຫ່ງຊາດ ຫຼື ການຂຸດຄົ້ນທີ່ມີເອກະສານ ແລະບໍລິມາດການສົ່ງອອກ. ນອກຈາກນັ້ນພວກເຮົາບໍ່ສາມາດຢືນຢັນ ໃນທາງວິຊາການ ເຖິງແມ່ນວ່າສ່ວນທີ່ສົ່ງອອກເຊິ່ງກົງກັບຜະລິດຕະພັນໄມ້ທ່ອນທີ່ອະນຸຍາດຢ່າງເປັນທາງການ (ຫຼືມີເອກະສານ) ໄດ້ຂຸດຄົ້ນຖືກຕ້ອງຕາມກົດໝາຍຕົວຈິງ.

**ຕາຕະລາງ4. ການສົ່ງອອກໄມ້ທ່ອນເກີນບໍລິມາດຂອງການຂຸດຄົ້ນໄມ້ຢ່າງເປັນທາງການ.**

| | 2012 | 2013 | 2014 |
|---|---|---|---|
| ບໍລິມາດທີ່ອະນຸຍາດ(ໂຄຕ້າ), ພັນແມັດກ້ອນ | 357 | 306 | 580 |
| ການຂຸດຄົ້ນທີ່ມີເອກະສານ, ພັນແມັດກ້ອນ | 72 | 134 | ບໍ່ມີ |
| ນໍາເຂົ້າໂດຍຈີນ, ພັນແມັດກ້ອນ (ໄມ້ທ່ອນ ແລະ ໄມ້ແປຮູບ) | 110/71 | 205/96 | ບໍ່ມີ |
| ນໍາເຂົ້າໂດຍຫວຽດນາມ, ພັນແມັດກ້ອນ(ໄມ້ທ່ອນ ແລະ ໄມ້ແປຮູບ) | 199/284 | 226/385 | 309/495 |
| ການນໍາເຂົ້າໂດຍລວມໃນສົມມູນຂອງໄມ້ໂດຍລວມ(RWE) , ພັນແມັດກ້ອນ | 1,019 | 1,393 | 1,299 |
| ຈໍານວນເກີນທີ່ຄາດຄະເນ, ຄິດເປັນເປີເຊັນ% (ເກີນໂຄຕ້າ/ບໍລິມາດຂອງການຂຸດຄົ້ນ) | 185/1,315 | 355/940 | 124 |

ແຫຼ່ງຂໍ້ມູນ: ການນໍາເຂົ້າໂດຍປະເທດຈີນໃນປີ 2012 ແລະປີ 2013 - ຖານຂໍ້ມູນສະຖິຕິການຄ້າຂອງສະຫະປະຊາຊາດ;ການນໍາເຂົ້າໂດຍຫວຽດນາມ - ດ່ານພາສີຫວຽດນາມ[23].

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ86% ຂອງໄມ້ທ່ອນທີ່ນໍາເຂົ້າໂດຍປະເທດຈີນໃນປີ 2013 ແມ່ນໄມ້ທ່ອນມູນຄ່າສູງ ມີແນວໂນ້ມເປັນຊະນິດໄມ້ຕ້ອງຫ້າມສໍາລັບການຂຸດຄົ້ນໃນລາວຕາມກົດໝາຍວ່າດ້ວຍປ່າໄມ້. ດັ່ງການເຝົ້າສັງເກດຢ່າງຖືກຕ້ອງໂດຍບັນດາຜູ້ຊຽນຕົວຊີ້ວັດພາກປະຕິບັດຂະແໜງປ່າໄມ້(2014)

,ຍາກທີ່ຈະເຊື່ອວ່າ176ພັນແມັດກ້ອນຂອງຊະນິດໄມ້ເຫຼົ່ານີ້ຖືກຂຸດຄົ້ນຢູ່ໃນເຂດພື້ນທີ່ໂຄງການພັດທະນາ ທີ່ອະນຸຍາດໂດຍລັດຖະບານສໍາລັບຂຸດຄົ້ນເພື່ອບຸກເບີກທີ່ດິນ.

ການຂຸດຄົ້ນໄມ້ຢ່າງຜິດກົດໝາຍຂະໜາດໃຫຍ່ແລະການສົ່ງອອກໄມ້ທ່ອນທີ່ກ່ຽວຂ້ອງຮັບຮູ້ໂດຍລັດຖະບານ ລາວເຊິ່ງມີຄວາມເປັນຫ່ວງຕໍ່ການສູນເສຍງົບປະມານແຫ່ງຊາດຈໍານວນມະຫາສານຈາກການຂາຍໄມ້ທ່ອນ ທີ່ບໍ່ອະນຸຍາດ. ໃນເດືອນກັນຍາ ປີ2013, ລັດຖະມົນຕີກະຊວງການເງິນທ່ານ ພູເພັດ ຄໍາພູວົງ ໃນການເປີດກອງປະຊຸມລະຫວ່າງລັດຖະບານກາງແລະບັນດາເຈົ້າແຂວງທ່ານໄດ້ກ່າວກັບສື່ມວນຊົນ ລາວວ່າ: "ພວກເຮົາໄດ້ເກັບພາສີອາກອນແລະອັດຕາພາສີເກືອບເຖິງ 20 ລ້ານໂດລາສະຫະລັດ ຈາກການສົ່ງອອກຜະລິດຕະພັນໄມ້ແຕ່ໃນຕົວຈິງລາວໄດ້ຂາຍຜະລິດຕະພັນໄມ້ໃຫ້ແກ່ບັນດາປະເທດເພື່ອນ ບ້ານມີມູນຄ່າຫຼາຍຮ້ອຍລ້ານໂດລາໃນແຕ່ລະປີ".

ອີງຕາມຄໍາຖະແຫຼງການດັ່ງກ່າວ ຈໍານວນກົດໝາຍ, ຂໍ້ກໍານົດແລະດໍາລັດທີ່ຮັບຮອງເອົາໂດຍລັດຖະ ບານເພື່ອຄຸ້ມຄອງການສົ່ງອອກໄມ້ທ່ອນ, "ໄດ້ບັງຄັບໃຊ້ຍັງບໍ່ພຽງພໍແລະມີຊ່ອງ ວ່າງໃຫ້ແກ່ຜູ້ຂຸດຄົ້ນໄມ້ຢ່າງຜິດກົດໝາຍຫາຜົນປະໂຫຍດ". ແລະອໍານາດການປົກຄອງບາງຄົນອາດໃຫ້ ການຮ່ວມມືກັບພໍ່ຄ້າເພື່ອສົ່ງອອກຜະລິດຕະພັນໄມ້ທີ່ຜິດກົດໝາຍ, ລວມທັງຊະນິດໄມ້ຕ້ອງຫ້າມ[24].

ໃນແຜນຮັບມືຂອງກະຊວງການເງິນໃນປີ 2013 ໄດ້ຕັດສິນໃຈປິດພະນັກງານຢູ່ດ່ານຊາຍແດນບາງຈຸດທີ່ ຮ່ວມມືກັບພໍ່ຄ້າເພື່ອລັກລອບເອົາໄມ້ອອກຈາກປະເທດ[25].

ເຫັນໄດ້ຢ່າງຊັດເຈນວ່າ ແຜນຮັບມືຂອງລັດຖະບານເຫຼົ່ານີ້ບໍ່ກໍ່ໃຫ້ເກີດຜົນເທົ່າທີ່ຄວນ. ອີງຕາມຄໍາຖະແຫຼງ ການຂອງລັດຖະມົນຕີກະຊວງກະສິກໍາແລະປ່າໄມ້, ທ່ານ ວິໄລວັນ ພົມເຂໃນກອງປະຊຸມລະຫວ່າງ ຄະນະລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນແລະບັນດາເຈົ້າແຂວງຕ່າງໆ ທີ່ນະຄອນຫຼວງວຽງຈັນ ໃນຕົ້ນເດືອນພຶດສະພາ[26], ເນື່ອງຈາກວ່າໃນກາງເດືອນເມສາ,69,888 ແມັດກ້ອນຂອງໄມ້ທ່ອນໂດຍລວມຖືກຂຸດຄົ້ນຢ່າງເປັນທາງການ, ເທົ່າກັບ12 ສ່ວນຮ້ອຍຂອງການອະນຸມັດ ປະຈໍາປີເພື່ອຂຸດຄົ້ນ80.072 ແມັດກ້ອນ.

ໃນເວລາດຽວກັນພຽງຊ່ວງໄລຍະເຄິ່ງທໍາອິດຂອງປີ 2014 ອີງຕາມຂໍ້ມູນດ່ານພາສີຂອງຫວຽດນາມ ໄມ້ທ່ອນ 526,000 ແມັດກ້ອນຖືກນໍາເຂົ້າຈາກປະເທດລາວ (ລວມທັງ ປະມານ 200 ພັນແມັດກ້ອນຂອງໄມ້ທ່ອນ[27]). ດັ່ງນັ້ນການສົ່ງອອກໄມ້ທ່ອນໄປຫວຽດນາມປະເທດດຽວ ໃນສົມມູນຂອງໄມ້ໂດຍລວມ(RWE) (ໂດຍຄໍານຶງເຖິງວັດຖຸດິບທີ່ຈໍາເປັນສໍາລັບການຜະລິດໄມ້ແປຮູບ) ໃນ ໄລຍະເຄິ່ງທໍາອິດຂອງປີ 2014 ເກີນບໍລິມາດຂອງການຂຸດຄົ້ນໄມ້ທີ່ອະນຸຍາດເປັນທາງການໃນລະດູ ການຂຸດຄົ້ນໄມ້ນັ້ນ1.5ເທົ່າ.

ລວມທັງໝົດໃນປີ 2014 ຫວຽດນາມໄດ້ນໍາເຂົ້າໄມ້ທ່ອນ309 ພັນແມັດກ້ອນ ແລະໄມ້ແປຮູບ 495 ພັນແມັດກ້ອນຈາກລາວ[28] ເຊິ່ງມີ1.3 ລ້ານແມັດກ້ອນໃນສົມມູນຂອງໄມ້ໂດຍລວມ(RWE). ດັ່ງນັ້ນການ ສົ່ງອອກໄມ້ໄປຫວຽດນາມປະເທດດຽວເກີນໂຄຕ້າແຫ່ງຊາດ 2.2ເທົ່າ (ຕາຕະລາງ 3).

ບໍລິມາດຂອງໄມ້ທ່ອນລາວທີ່ຄາດຄະເນສົ່ງອອກໄປຈີນໃນປີ 2014 (ສັນນິຖານວ່າລາຄາສະເລ່ຍຂອງຜະລິດຕະພັນໄມ້ເທົ່າກັນກັບໃນປີ 2013) ມີປະມານ 520ພັນແມັດກ້ອນຂອງໄມ້ທ່ອນແລະ 200 ພັນແມັດກ້ອນເປັນໄມ້ແປຮູບ. **ສະນັ້ນບໍລິມາດໂດຍລວມຂອງໄມ້ລາວທີ່ສົ່ງອອກໄປປະເທດຈີນແລະຫວຽດນາມໃນປີ 2014ສູງເຖິງ2.2 ລ້ານແມັດກ້ອນໃນສົມມູນຂອງໄມ້ໂດຍລວມ(RWE)ເຊິ່ງມີ 3.8ເທົ່າເກີນໂຄຕ້າແຫ່ງຊາດ.**

ຂໍ້ມູນທີ່ເກັບກຳມາຈາກດ່ານຊາຍແດນສະແດງໃຫ້ເຫັນວ່າໜຶ່ງໃນສອງໜ່ວຍງານຈັດຕັ້ງທີ່ຮັບຜິດຊອບບໍ່ເປີດເຜີຍບັນທຶກການຂົນສົ່ງໄມ້ທີ່ສົ່ງອອກທັງໝົດຫຼືຜະລິດຕະພັນໄມ້ຈຳນວນໜຶ່ງບໍ່ໄດ້ຈົດທະບຽນຢູ່ດ່ານຊາຍແດນ (ຄື ຖືກລັກລອບ).

ອີງຕາມພະນັກງານພາສີລາວ ທີ່ດ່ານຊາຍແດນສາກົນ ດາກຕາອອກ - ນ້ຳຢາງ (ເມືອງດາກຈຶງ, ແຂວງເຊກອງ), ໃຫ້ສຳພາດໃນວັນທີ05 ເດືອນທັນວາ ປີ2012, ການສົ່ງອອກໄມ້ທ່ອນກໍລະນີຄັ້ງສຸດທ້າຍໂດຍຜ່ານດ່ານນີ້ແມ່ນໄມ້ແປຮູບ6-10 ແມັດກ້ອນ ໃນເດືອນພຶດສະພາ ປີ2012[29]. ພວກເຮົາຄວນສັງເກດວ່າ ຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງ(POFI)ເຊກອງທີ່ຕັ້ງຢູ່ໃກ້ຄຽງນັ້ນ ເຮັດວຽກພຽງແຕ່ໃນເດືອນມັງກອນຫາ ເດືອນພຶດສະພາແລະຢຸດລົງໃນເດືອນມິຖຸນາໃນລະດູຝົນ[30]. ສອງສາມເດືອນກ່ອນການສຳພາດນີ້ພວກເຮົາໄດ້ເກັບກຳເອົາສຳເນົາໃບອະນຸຍາດຢູ່ດ່ານຊາຍແດນນີ້ທີ່ອອກໂດຍຫ້ອງການອຸດສາຫະກຳແລະການຄ້າແຂວງ (POIC) ເຊກອງໃນວັນທີ18 ເດືອນມິຖຸນາປີ 2012ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ດາກຈຶງ ເຊິ່ງສາມາດສົ່ງອອກ819.592 ແມັດກ້ອນປະເພດໄມ້ກົມ ໂດຍຜ່ານດ່ານຊາຍແດນສາກົນ ດາກຕາອອກພາຍໃນເວລາ 30 ວັນ (ຮູບ5). ເອກະສານສະບັບນີ້ສະແດງໃຫ້ຮູ້ຢ່າງຈະແຈ້ງວ່າຄຳຖະແຫຼງທີ່ວ່າການສົ່ງອອກໄມ້ຜ່ານດ່ານນີ້ຢຸດຕິລົງໃນເດືອນພຶດສະພາບໍ່ຖືກຕ້ອງ.

ຄວນກ່າວຕື່ມອີກວ່າ ເອກະສານສັນຍາການຂາຍແລະຈັດຊື້ກັບຜູ້ນຳເຂົ້າຫວຽດນາມ (ບໍລິສັດ ລອກ ຖຸ້ນ ຈຳກັດ)ບໍ່ມີຕາປະທັບ,ທີ່ຢູ່ຫຼືລາຍລະອຽດການຕິດຕໍ່ໃດໆຂອງຜູ້ນຳເຂົ້າ. ດັ່ງນັ້ນພວກເຮົາສັນນິຖານວ່າສັນຍາດັ່ງກ່າວໄດ້ເຊັນສັນຍາກັບ "ບໍລິສັດທີ່ບໍ່ມີຈິງ". ໂດຍລວມການສຳພາດຢູ່ທີ່ດ່ານຊາຍແດນດາກຕາອອກໄດ້ສະແດງໃຫ້ເຫັນວ່າພະນັກງານພາສີມີເຈດຕະນາບໍ່ຢາກເປີດເຜີຍຂໍ້ມູນກ່ຽວກັບບໍລິມາດແລະສ່ວນປະກອບຂອງການສົ່ງອອກໄມ້ທ່ອນ. ຕົວຢ່າງ, ພະນັກງານພາສີທີ່ມີປະສົບການເຮັດວຽກເປັນເວລາສອງປີ "ບໍ່ສາມາດ" ຄາດຄະເນໂດຍປະມານຂອງຈຳນວນລົດບັນທຸກໄມ້ຂ້າມຊາຍແດນໃນປີນີ້ແລະປີທີ່ຜ່ານມາ.

ການເປີດເຜີຍວ່າງບໍ່ດົນມານີ້ໃນສື່ຂອງຫວຽດນາມຢືນຢັນການຄາດຄະເນຂອງພວກເຮົາກ່ຽວກັບການສັນຈອນທີ່ອາດຈະເປັນໄປໄດ້ຂອງໄມ້ທ່ອນຈຳນວນຫຼວງຫຼາຍທີ່ບໍ່ມີເອກະສານຄົບຖ້ວນ ຂ້າມຊາຍແດນສາກົນລາວ-ຫວຽດນາມ. ເນື່ອງຈາກວ່າ ໃນຕົ້ນເດືອນເມສາປີ2015ຕຳຫຼວດຈະລາຈອນໃນເມືອງເຈືອງດວງ (ແຂວງເງ້ອານ) ໄດ້ຍຶດລົດບັນທຸກໜັກຈຳນວນແປດຄັນທີ່ຂຶ້ນທະບຽນລາວຢ່າງຖືກຕ້ອງພ້ອມທັງໄມ້ທ່ອນທີ່ລັກລອບຢູ່ທາງຫຼວງແຫ່ງຊາດເລກທີ7(ບັນດາຄົນຂັບລົດບັນທຸກບໍ່ມີເອກະ

ສານແຈ້ງເລີຍ). ອີງຕາມຕຳຫຼວດລົດບັນທຸກລາວພ້ອມໄມ້ທ່ອນໄດ້ລົບຫຼີກຈາກຕຳຫຼວດຢູ່ຕາມເສັ້ນທາງ ຮ່ອມນ້ອຍທີ່ເປັນທາງແຍກອອກຈາກທາງຫຼວງແຫ່ງຊາດ ເລກທີ7 ແລະໄມ້ທ່ອນເຫຼົ່ານັ້ນໄດ້ຖືກນຳເຂົ້າຫວຽດນາມໂດຍຜ່ານດ່ານຊາຍແດນສາກົນນ້ຳກັ່ນຕັ້ງຢູ່ລະຫວ່າງແຂວງຊຽງຂວາງແລະເງ້ອານ.[31].






LAOPEAPLE'S DEMOCRATIC REPUBLIC

PEACE INDEPENDENCE DEMOCRACY UNITY PROSPERITY

---------000000---------

SEKONG PROVINCE
PRODUCERS AND SUPPLIER OF WOOD
NGON DONE DAKCHUANG DISTRICT
MOBILE:[illegible]

NO: 02
DATE: 18/6/2012

INVOICE

SOLD TO: LOC THANH CO., LTD
ADDRESS: (VIET NAM)

LICENCE NO:............
DATE:............

SHIPPED FROM: PRODUCERS AND SUPPLIER OF WOOD
To : DARK TA OC
SHIPPED VIA : VIETNAM

CONTRACT NO:............
DATE:............

| NO | DESCRIPTION OF GOODS | LOGS | QUANTITY (m³) | UNIT PRICE ($) | AMOUNT ($) |
|---|---|---|---|---|---|
| 01 | MAY SAKHAI (LOGS WOOD) | 615 | 645,894 | | |
| | Grad A | [illegible] | [illegible] | [illegible] | [illegible] |
| | Grad B | 148 | [illegible] | [illegible] | [illegible] |
| | Grad C | 222 | [illegible] | [illegible] | [illegible] |
| | Grad D | 188 | [illegible] | [illegible] | [illegible] |
| 02 | MAY MAKTEK (LOGS WOOD) | 274 | 173,698 | | |
| | Grad A | [illegible] | [illegible] | [illegible] | [illegible] |
| | Grad B | 65 | [illegible] | [illegible] | [illegible] |
| | Grad C | [illegible] | [illegible] | [illegible] | [illegible] |
| | Grad D | [illegible] | [illegible] | [illegible] | [illegible] |
| | TOTAL | 889 | 819,592 | | $ 53,840,10 |

DIRECTOR

**ຮູບ5.ໃບອະນຸຍາດການສົ່ງອອກ ອອກໂດຍຫ້ອງການອຸດສາຫະກຳແລະການຄ້າແຂວງ (POIC)ເຊກອງໃຫ້ແກ່ບໍລິສັດອຸດສາຫະກຳແປຮູບໄມ້ດາກຈຶງ. ສ່ວນທີ່ຖືກຂີດອ້ອມເປັນສີເຫຼືອງເປັນຈຸດຂົນສົ່ງຕີດາກຕາອອກ, ຊ່ວງໄລຍະເວລາ ແລະ ວັນທີອອກເອກະສານອະນຸຍາດ (ຊ້າຍມື). ໃບສົ່ງສິນຄ້າອອກໃຫ້ຜູ້ຮັບຊື້ຫວຽດນາມ - ບໍລິສັດລອກຖັນ ຈຳກັດ(ຂວາມື).**

ໝາຍເຫດ: ໄມ້ທ່ອນຄຸນນະພາບຕ່ຳ ກວມເອົາ58% ຂອງບໍລິມາດໂດຍລວມແລະລາຄາຂາຍກໍຕ່ຳເຊັ່ນກັນ - ມີລາຄາສູງກວ່າພຽງເລັກນ້ອຍທີ່ໄດ້ສັ່ງຊື້ໄມ້ຈຳນວນນີ້ຈາກ ຫ້ອງການອຸດສາຫະກຳແລະການຄ້າແຂວງ (POIC)ເຊກອງ: ໄມ້ສາຄາຍລາຄາເພີ່ມຂຶ້ນ 11-19 ໂດລາສະຫະລັດ ແລະໄມ້ໝາກແຕກເພີ່ມຂຶ້ນ 1-3 ໂດລາສະຫະລັດ. ຜົນກຳໄລທີ່ຕ່ຳທີ່ສຸດເຫຼົ່ານີ້ຄືສະແດງເຖິງການເວົ້າລາຄາທີ່ຕ່ຳ ແລະຕໍ່ລອງລາຄາເອງລະຫວ່າງຜູ້ຂາຍ ແລະຜູ້ຊື້.

## ການປະເມີນບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍພາຍໃນແຂວງເຊກອງ

ການປະເມີນນີ້ໄດ້ເຮັດຂຶ້ນໃນລະດູການຂຸດຄົ້ນໄມ້ພາກສະໜາມ ຈາກເດືອນພະຈິກ ປີ2010ຫາ ເດືອນທັນວາ ປີ2011ການເລືອກເອົາລະດູການຂຸດຄົ້ນໄມ້ນີ້ຖືກກຳນົດຂຶ້ນເພື່ອເຮັດໃຫ້ຂໍ້ມູນທີ່ພວກເຮົາມີຢູ່ສົມບູນຂຶ້ນ . ຢ່າງເປັນທາງການ, ໂຄຕ້າຖືກກຳນົດໄວ້ວ່າ ລະດູການຂຸດຄົ້ນໄມ້ເລີ່ມຕົ້ນໃນເດືອນພະຈິກແລະສິ້ນສຸດລົງໃນເດືອນພຶດສະພາປີຕໍ່ມາເມື່ອລະດູຝົນເລີ່ມ. ໃນເວລາດຽວກັນເປັນໂອກາດທີ່ເໝາະສົມແກ່ບັນດາໂຄງການພັດທະນາທີ່ຂໍຂະຫຍາຍລະດູການຂຸດຄົ້ນໄມ້ອອກໄປຕື່ມອີກ ໃນກໍລະນີມີຄວາມຈຳເປັນທີ່ສົມເຫດຜົນ. ການສຶກສາເພື່ອເຂົ້າໃຈການໄຫຼວຽນແລະຄວບຄຸມໄມ້ທ່ອນຢູ່ໃນສ. ປ. ປ. ລາວ (2012) ສະໜອງຂໍ້ມູນກ່ຽວກັບບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນຢູ່ໃນແຂວງດັ່ງກ່າວໃນຊ່ວງເວລານີ້. ຖ້າພວກເຮົາສະຫຼຸບບໍລິມາດໄມ້ທ່ອນທີ່ຂຸດຄົ້ນໃນເຂດປ່າຜະລິດ (9,876 ແມັດກ້ອນ), ການອະນາໄມເຂື່ອນອ່າງເກັບນ້ຳ (11,339 ແລະ 6,231 ແມັດກ້ອນ ຈາກເຂື່ອນເຊກອງ 4 ແລະເຂື່ອນຫ້ວຍລຳພັນ, ຕາມລຳດັບ) ແລະການຂຸດຄົ້ນໄມ້ທີ່ກ່ຽວຂ້ອງກັບການສຳປະທານໂຄງການສຳຫຼວດຖ່ານຫີນແລະບໍ່ແຮ່ຂອງບໍລິສັດພອນສັກ (1,044 ແມັດກ້ອນ), ບໍລິມາດຂອງການຂຸດຄົ້ນໄມ້ທ່ອນໂດຍລວມໃນແຂວງນີ້ແມ່ນ28.5 ພັນແມັດກ້ອນ [32].

ບໍລິມາດຂອງການຂົນສົ່ງໄມ້ທ່ອນທີ່ຄາດຄະເນຈາກແຂວງດັ່ງກ່າວນີ້ ແມ່ນອີງໃສ່ຂໍ້ມູນຂອງດ່ານພາສີຫວຽດນາມກ່ຽວກັບການນຳເຂົ້າໄມ້ທ່ອນຈາກແຂວງເຊກອງໂດຍຜ່ານສອງຈຸດກວດກາ (ດາກຕາອອກ-ນ້ຳຢາງ, ຕາວາງ-ເອດອດ)ແລະປຶ້ມບັນທຶກຖ້ຽວລົດບັນທຸກທີ່ຂົນສົ່ງຜະລິດຕະພັນໄມ້ຈາກແຂວງເຊກອງໂດຍຜ່ານດ່ານຊັ່ງນ້ຳໜັກທ່າແຕງ ເຊິ່ງມີເຂດແດນຕິດກັບແຂວງຈຳປາສັກໃນຊ່ວງຂອງການສຶກສານີ້ (ຮູບ 6).




**ຮູບ6. ພື້ນທີ່ຂຸດຄົ້ນໄມ້ ແລະເສັ້ນທາງຫຼັກຂອງການຂົນສົ່ງໄມ້ທ່ອນ ໃນສີ່ແຂວງພາກໃຕ້ຂອງລາວ.**

ອີງໃສ່ຂໍ້ມູນຈາກດ່ານພາສີຫວຽດນາມມີຜະລິດຕະພັນໄມ້ທ່ອນ 24,132.37 ແມັດກ້ອນຖືກຂົນສົ່ງຈາກແຂວງເຊກອງ ໃນປີ 2011 ຜ່ານຈຸດກວດກາດ່ານຊາຍແດນສາກົນດາກຕາອອກ-ນ້ຳຢາງ. ຜະລິດຕະພັນເຫຼົ່ານີ້ສ່ວນໃຫຍ່ເປັນໄມ້ແປຮູບ (66-75%). ຍິ່ງໄປກວ່ານັ້ນໄມ້ທ່ອນ1,027.520 ແມັດກ້ອນຖືກຂົນສົ່ງຜ່ານຈຸດກວດກາຕາວາງ-ເອດອດ.

ປື້ມບັນທຶກດ່ານຊັ່ງນ້ຳໜັກທ່າແຕງມີຂໍ້ມູນຂອງລົດບັນທຸກຂົນສົ່ງຜະລິດຕະພັນໄມ້ທຸກຄັນທີ່ຜ່ານຈຸດນີ້: ມີຊະນິດໄມ້ທີ່ຂົນສົ່ງ (ໄມ້ກົມ, ຜະລິດຕະພັນສຳເລັດຮູບ), ປະເພດລົດບັນທຸກແລະນ້ຳໜັກຂົນສົ່ງທັງໝົດ, ຈຸດເລີ່ມຕົ້ນ ແລະ ປາຍທາງ (ຮູບ7).




**ຮູບ7. ຕົວຢ່າງຂອງເອກະສານເກັບກຳມາຈາກດ່ານຊັ່ງນ້ຳໜັກທ່າແຕງ: ໜ້າປື້ມບັນທຶກຖ້ຽວລົດບັນທຸກ (ຊ້າຍມື) ແລະໃບອະນຸຍາດການຂົນສົ່ງອອກໂດຍຫ້ອງການອຸດສາຫະກຳແລະການຄ້າແຂວງ (POIC )ສຳລັບການຂົນສົ່ງໄມ້ທ່ອນ (ຂວາມື).**

ການຄຳນວນບໍລິມາດໄມ້ທ່ອນທີ່ຂົນສົ່ງໂດຍລົດບັນທຸກສ່ວນຕົວການນຳໃຊ້ການຊັ່ງນ້ຳໜັກລົດບັນທຸກທັງໝົດຖືວ່າສັບສົນ ເນື່ອງຈາກມີຄວາມແຕກຕ່າງກັນໃນຄວາມໜາແໜ້ນ, ແລະຄວາມຊຸ່ມຂອງໄມ້ທ່ອນແລະຈຳເປັນຕ້ອງພິຈາລະນານ້ຳໜັກຂອງລົດບັນທຸກແຕ່ລະຍີ່ຫໍ້. ພວກເຮົາຄວນຄຳນວນບໍລິມາດໄມ້ທ່ອນໂດຍສະເລ່ຍທີ່ຂົນສົ່ງໂດຍລົດບັກທຸກໜຶ່ງຄັນນຳໃຊ້ລົດບັນທຸກ12 ລໍ້ທີ່ອອກອະນຸຍາດໃຫ້ໂດຍຫ້ອງການອຸດສາຫະກຳແລະການຄ້າແຂວງ (POIC )ເຊກອງແລະແຂວງອັດຕະປື, ເກັບຮັກສາສຳເນົາໄວ້ທີ່ດ່ານຊັ່ງນ້ຳໜັກດັ່ງກ່າວ. ໃບອະນຸຍາດເຫຼົ່ານີ້ມີຂໍ້ມູນກ່ຽວກັບຜະລິດຕະພັນໄມ້ທີ່ຂົນສົ່ງໂດຍລົດບັນທຸກ168 ຄັນໃນເດືອນສິງຫາເຖິງເດືອນພະຈິກ ປີ2012 (ສ່ວນໃຫຍ່ຂົນສົ່ງໄປປະເທດໄທ).

ບໍລິມາດໂດຍສະເລ່ຍແມ່ນ 20 ແມັດກ້ອນ, ເຊິ່ງສອດຄ່ອງກັບການສັງເກດຈຸດກວດກາທີ່ດ່ານສາກົນພູເກືອ - ໂບວາຍຂອງພວກເຮົາ. ຕາມການສັງເກດນີ້ ບໍລິມາດໄມ້ກົມໂດຍສະເລ່ຍທີ່ສາມາດຂົນສົ່ງໂດຍລົດບັນທຸກໜຶ່ງຄັນແມ່ນ 19.4 ແມັດກ້ອນ (ຮູບ8)[a].



**ຮູບ8. ລົດບັນທຸກໄມ້ກົມທີ່ຈຸດກວດກາດ່ານຊາຍແດນສາກົນພູເກືອ-ໂບວາຍ (06 ທັນວາ 2013).ເສັ້ນຜ່າກາງແລະຄວາມຍາວໂດຍສະເລ່ຍທີ່ຕິຕາໃສ່ໄມ້ສາມາດຄຳນວນບໍລິມາດໄມ້ທ່ອນທີ່ຂົນສົ່ງໂດຍລົດບັນທຸກ: 208 ແມັດກ້ອນ (ຊ້າຍມື) ແລະ 242 ແມັດກ້ອນ (ຂວາມື).**

ຈາກວັນທີ27 ເດືອນທັນວາ ປີ2010ຮອດວັນທີ30ເດືອນພະຈິກ ປີ2011ດ່ານຊັ່ງນ້ຳໜັກທ່າແຕງໄດ້ບັນທຶກຍານພາຫະນະມີ929 ຄັນບັນທຸກໄມ້ທ່ອນຈາກເຊກອງ[33], 38% ເດີນທາງໄປປະເທດໄທຜ່ານດ່ານສາກົນວັງເຕົ່າ-ຊ່ອງເມັກ, 20%-ໄປຈຳປາສັກ, 19%-ໄປຫວຽດນາມຜ່ານດ່ານຊາຍແດນສາກົນພູເກືອ - ໂບວາຍ, 19%-ມາວຽງຈັນແລະ 5%-ໄປບໍລິຄຳໄຊ.

84% ຂອງການຂົນສົ່ງໂດຍລວມຖືກລະບຸເປັນ“ຜະລິດຕະພັນໄມ້ສຳເລັດຮູບ” ແລະມີພຽງແຕ່16% ເປັນໄມ້ທີ່ຍັງບໍ່ທັນປຸງແຕ່ງ(ການຂົນສົ່ງທັງໝົດໄປຈຳປາສັກ). ຕາມການພິຈາລະນາຂໍ້ມູນເຫຼົ່ານີ້ພວກເຮົາສາມາດປະເມີນບໍລິມາດໂດຍລວມຂອງຜະລິດຕະພັນໄມ້ທັງໝົດທີ່ຂົນສົ່ງຜ່ານດ່ານທ່າແຕງ, ຈາກ 34.3ເຖິງ42.1 ພັນແມັດກ້ອນ ໃນສົມມູນຂອງໄມ້ໂດຍລວມ(RWE) ຂຶ້ນກັບສຳປະສິດຂອງການຫັນປ່ຽນຈາກ"ຜະລິດຕະພັນໄມ້ສຳເລັດຮູບ" ມາເປັນວັດຖຸດິບ: 50%, ສຳລັບໄມ້ແປຮູບຫຼື 40% ສຳລັບການແປຮູບລະດັບທີ່ສູງຂຶ້ນ.

ມີສາມແບບທີ່ແຕກຕ່າງກັນຂອງການປະເມີນບໍລິມາດໄມ້ທ່ອນທີ່ຂົນສົ່ງຈາກແຂວງເຊ
ກອງ(ໃນສົມມູນຂອງໄມ້ໂດຍລວມ(RWE)ຄື:

---

[a] ເປັນການຄາດຄະເນທີ່ໜ້ອຍ

ໂດຍອີງຕາມບັນດາຜູ້ຊ່ຽວຊານລົດບັກທຸກໜັກທີ່ຖືກນຳໃຊ້ທົ່ວໆໄປໃນການຂົນສົ່ງໄມ້ແປຮູບຂ້າມຊາຍແດນສາມາດບັນທຸກໄດ້ເຖິງ 40 ໂຕນ.

- ການປະເມີນໄວ້ໜ້ອຍ- 59.4 ພັນແມັດກ້ອນໃນການສັນນິຖານວ່າ"ຜະລິດຕະພັນສຳເລັດຮູບ"ທັງໝົດທີ່ຂົນສົ່ງຜ່ານທ່າແຕງເປັນໄມ້ແປຮູບ (ຄ່າສຳປະສິດການແປງແມ່ນ50%) ແລະບໍລິມາດນຳເຂົ້າທັງໝົດ ທີ່ຂົນສົ່ງຜ່ານດ່ານດາກຕາອອກ-ນ້ຳຢາງເປັນໄມ້ຍັງບໍ່ທັນປຸງແຕ່ງ.
- ການປະເມີນໄວ້ສູງສຸດ - 94.4 ພັນແມັດກ້ອນ (75%ຂອງໄມ້ທ່ອນຖືກຂົນສົ່ງຜ່ານດ່ານດາກຕາອອກ - ນ້ຳຢາງເປັນໄມ້ແປຮູບໂດຍໃຊ້ 40%ເປັນປັດໃຈການແປງ/ຄ່າສຳປະສິດ).
- ການປະເມີນຄວາມຄືບໜ້າ - 75.5 ພັນແມັດກ້ອນໂດຍນຳໃຊ້50% ເປັນຄ່າສຳປະສິດແປງເປັນ"ຜະລິດຕະພັນສຳເລັດຮູບ" ແລະໄມ້ແປຮູບ,ເຊັ່ນດຽວກັນກັບການຫຼຸດລົງຂອງອັດຕາສ່ວນໄມ້ແປຮູບໃນການນຳເຂົ້າໄມ້ທ່ອນຜ່ານນ້ຳຢາງມີເຖິງ66%.

ຕົວເລກດັ່ງກ່າວຖືວ່າເປັນການປະເມີນໄວ້ໜ້ອຍ ເນື່ອງຈາກບໍ່ໄດ້ຄຳນຶງເຖິງເສັ້ນທາງອື່ນໃນການຂົນສົ່ງຜະລິດຕະພັນໄມ້ຈາກແຂວງເຊກອງໄປຍັງຫວຽດນາມຫຼືໄທ:

- ການຂົນສົ່ງໄປຫວຽດນາມໂດຍຜ່ານຈຸດກວດກາພູເກືອ - ໂບວາຍໃນແຂວງອັດຕະປື (ດ່ານຊັ່ງນ້ຳໜັກທ່າແຕງຈົດທະບຽນພຽງຍານພາຫະນະທີ່ບັນທຸກຜະລິດຕະພັນໄມ້ທີ່ຈັດສົ່ງໄປຫວຽດນາມຈາກຕົວເມືອງທ່າແຕງເທົ່ານັ້ນ);
- ການຂົນສົ່ງໄປຫວຽດນາມໂດຍຜ່ານຈຸດກວດກາຍາລາຍ ໃນແຂວງສາລະວັນ. ອີງຕາມຫ້ອງການກວດກາປ່າໄມ້ແຂວງ (POFI) ສາລະວັນໃນຊ່ວງລະດູການ2012-2013 ມີໄມ້ທ່ອນ5.6 ພັນແມັດກ້ອນທີ່ຂົນສົ່ງຜ່ານຈຸດກວດກາດັ່ງກ່າວ ໄດ້ຈົດທະບຽນເຊິ່ງຂຸດຄົ້ນພາຍໃຕ້ໂຄງການສຳລັບການກໍ່ສ້າງເຂື່ອນໄຟຟ້າເຊກອງ 4. ໃນເດືອນທັນວາ ປີ2014. ໂຮງເລື່ອຍຮົມສະນະໄຊ ຢູ່ເມືອງສາລະວັນໄດ້ຮັບ 3 ພັນແມັດກ້ອນເຊິ່ງຂຸດຄົ້ນພາຍໃຕ້ໂຄງການສຳລັບໂຄງການກໍ່ສ້າງເຂື່ອນໄຟຟ້າເຊັ່ນກັນ. ຜະລິດຕະພັນຂອງໂຮງເລື່ອຍແຫ່ງນີ້ຖືກສົ່ງອອກຜ່ານຈຸດກວດກາ ຍາລາຍໄປຫວຽດນາມຫຼືຜ່ານທາງວັງເຕົ່າ-ຊ່ອງເມັກ ໄປປະເທດໄທ (ໃນກໍລະນີອັນຫຼັງນີ້ ໄມ້ບໍ່ໄດ້ຜ່ານດ່ານຊັ່ງນ້ຳໜັກທ່າແຕງ).

ເພາະສະນັ້ນ, ພວກເຮົາສາມາດສັນນິຖານຢ່າງໜັ້ນໃຈວ່າອັດຕາສ່ວນຂອງໄມ້ທ່ອນຈາກແຫຼ່ງທີ່ບໍ່ມີອະນຸຍາດໃນບໍລິມາດໂດຍລວມຂອງຜະລິດຕະພັນໄມ້ທີ່ຂົນສົ່ງຈາກແຂວງນີ້ບໍ່ໜ້ອຍກວ່າ 50%, ແລະຄົງຫຼາຍກວ່າ 60%(ຮູບ9).




**ຮູບທີ່9.ການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທີ່ບໍ່ມີອະນຸຍາດໃນແຂວງເຊກອງ.**

ຄົງບໍ່ມີໄມ້ທ່ອນຈາກແຂວງອື່ນປະປົນຢູ່ນຳບັນດາຜະລິດຕະພັນໄມ້ທີ່ຈັດສົ່ງມາຈາກແຂວງເຊກອງ.
ໂດຍສະເພາະ, ພະນັກງານຫ້ອງການກວດກາປ່າໄມ້ແຂວງສາລະວັນຈາກຈຸດກວດກາທຳພູວາງ (ເມືອງລະຄອນເພັງ), ຕັ້ງຢູ່ໃນຖະໜົນ 13 ໃຕ້ມີເຂດແດນຕິດກັບແຂວງສະຫວັນນະເຂດ, ປະຕິເສດບໍ່ມີການຂົນສົ່ງໄມ້ທ່ອນຢູ່ເສັ້ນທາງພາກໃຕ້ (ລວມທັງແຂວງເຊກອງ) ຕະຫຼອດເສັ້ນທາງຫຼວງ[34].
ແຂວງສາລະວັນມີຊັບພະຍາກອນໄມ້ຈຳນວນທີ່ໜ້ອຍ(ດັ່ງຫຼັກຖານຄືການປິດໂຮງເລື່ອຍຫຼາຍແຫ່ງລົງ ເນື່ອງຈາກການຂາດແຄນວັດຖຸດິບ). ດັ່ງນັ້ນ ຄົງມີໄມ້ທ່ອນຈາກແຂວງເຊກອງຖືກສົ່ງໄປແຂວງສາລະວັນເພື່ອແປຮູບເທົ່ານັ້ນ.
ບໍ່ມີໄມ້ທ່ອນຈາກແຂວງຈຳປາສັກສົ່ງໄປແຂວງເຊກອງໄດ້ຈົດທະບຽນໃນບັນທຶກການຈັດສົ່ງຢູ່ທີ່ດ່ານຊັ່ງນ້ຳໜັກທ່າແຕງ. ແລະໄມ້ທ່ອນຈາກແຂວງອັດຕະປືຖືກຂົນສົ່ງຜ່ານແຂວງເຊກອງເພື່ອສົ່ງຕໍ່ໄປປະເທດໄທ ແລະວຽງຈັນເທົ່ານັ້ນ.
ບໍ່ມີຫຼັກຖານອ້າງອີງໃຫ້ສັນນິຖານວ່າ ໄມ້ທ່ອນທີ່ຂົນສົ່ງຜ່ານຈຸດກວດກາດາກຕາອອກ - ນ້ຳຢາງ ຂຸດຄົ້ນຢູ່ນອກເມືອງດາກຈຶງ (ແຂວງເຊກອງ). ກ່ອນອື່ນໝົດ, ເມືອງນີ້ບໍ່ມີເສັ້ນທາງທີ່ດີພໍຈະສາມາດເຊື່ອມຕໍ່ກັບ

ເຂດອື່ນຂອງແຂວງເຊກອງແລະພື້ນທີ່ໃກ້ຄຽງຂອງແຂວງອັດຕະປື. ຍິ່ງໄປກວ່ານັ້ນ, ການນຳໃຊ້ຈຸດກວດກາດາກຕາອອກ - ນ້ຳຢາງສຳລັບການຂົນສົ່ງໄມ້ທ່ອນທີ່ຂຸດຄົ້ນຢູ່ນອກເມືອງດາກຈຶງບໍ່ມີເຫດຜົນເນື່ອງຈາກວ່າມີເສັ້ນທາງປູຢາງເລກທີ18 ໄປຮອດຫວຽດນາມໃນແຂວງອັດຕະປື.
ນອກຈາກນັ້ນ ຈຸດກວດກາຕາວາງ - ເອດອດຖືກນຳໃຊ້ເພື່ອຂົນສົ່ງໄມ້ທ່ອນທີ່ຂຸດຄົ້ນຢູ່ພາຍໃນເຂດປ່າສະຫງວນເຊຊັບ, ເຊິ່ງເປັນການຊົດເຊີຍແລກກັບໂຄງການປັບປຸງຄຸນນະພາບເສັ້ນທາງປູຫີນຈາກຈຸດກວດກາດັ່ງກ່າວຮອດບ້ານກາໂລ, ພ້ອມທັງກໍ່ສ້າງຂົວແລະ ເຮືອນຈຳນວນໜຶ່ງຢູ່ໃນບ້ານ.
ຍິ່ງໄປກວ່ານັ້ນ, ການແນະນຳວ່າໄມ້ທ່ອນທີ່ບໍ່ລວມຢູ່ໃນການຄຳນວນ ໃນແຂວງເຊກອງແມ່ນໄມ້ທ່ອນທີ່ສັ່ງຊື້ມາຈາກແຂວງອື່ນຖືກກວດສອບພາຍໃຕ້ໂດຍຄຳນຶງເຖິງການປະເມີນຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍໃນສີ່ແຂວງພາກໃຕ້. ດັ່ງທີ່ໄດ້ກ່າວມາຂ້າງເທິງຍັງຂາດຂໍ້ມູນກ່ຽວກັບການໄຫຼເຂົ້າມາຂອງໄມ້ທ່ອນສູ່ແຂວງພາກໃຕ້ຈາກແຂວງອື່ນ (ນອກຈາກນີ້ກ່ຽວກັບໄມ້ທ່ອນທີ່ນຳເຂົ້າຈາກປະເທດອື່ນດ້ວຍ). ດັ່ງນັ້ນ, ຖ້າໃນກໍລະນີ ການໄຫຼອອກຂອງຜະລິດຕະພັນໄມ້ທ່ອນຕົວຈິງຢູ່ໃນສີ່ແຂວງພາກໃຕ້ແມ່ນສູງກວ່າບໍລິມາດຂອງໄມ້ທ່ອນທີ່ຂຸດຄົ້ນ (ຫຼືໄມ້ທ່ອນທີ່ຈົດທະບຽນຢູ່ຕາມສະໜາມພັກໄມ້ຕ່າງໆ) ສາມາດອະທິບາຍໄດ້ພຽງແຕ່ວ່າມີການສະໜອງໄມ້ທ່ອນຂະໜາດໃຫຍ່ຈາກແຫຼ່ງທີ່ບໍ່ມີອະນຸຍາດເທົ່ານັ້ນ.

## ການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນຢ່າງຜິດກົດໝາຍຢູ່ໃນກຸ່ມສີ່ແຂວງພາກໃຕ້

ການປະເມີນຄັ້ງທີ່ສາມຂອງພວກເຮົາດໍາເນີນຢູ່ໃນກຸ່ມສີ່ແຂວງພາກໃຕ້ທັງໝົດ ລວມມີ ແຂວງເຊກອງ, ສາລະວັນແລະເຂດແດນຕິດກັບແຂວງຈໍາປາສັກແລະອັດຕະປື. ດັ່ງທີ່ໄດ້ກ່າວມາຂ້າງເທິງ ຂົງເຂດນີ້ສາມາດຖືເປັນ "ເຂດລະບົບປິດ". ເຊັ່ນ: ເປັນລະບົບທີ່ສາມາດຜະລິດໄມ້ທ່ອນໄດ້ແລະບໍ່ຮັບເອົາໄມ້ທ່ອນມາຈາກພາຍນອກເຂົ້າມາ. ເພາະສະນັ້ນໂດຍການດໍາເນີນການປະເມີນຮ່ວມກັນທັງສີ່ແຂວງພວກເຮົາສາມາດຫຼຸດຜ່ອນຄວາມບໍ່ຖືກຕ້ອງທີ່ອາດເກີດຂຶ້ນໄດ້ ໃນການແລກປ່ຽນໄມ້ທ່ອນລະຫວ່າງແຂວງ(ຮູບ6).

ຂໍ້ມູນຄົບຖ້ວນທີ່ສຸດກ່ຽວກັບການຂົນສົ່ງໄມ້ທ່ອນຈາກພື້ນທີ່ສຶກສາດັ່ງກ່າວນີ້ ຖືກເກັບກໍາໃນລະດູການຂຸດຄົ້ນໄມ້2011-2012 ລວມທັງຂໍ້ມູນກ່ຽວກັບການສົ່ງອອກໂດຍຜ່ານຈຸດກວດກາຍາລາຍ ແລະວັງເຕົ່າ - ຊ່ອງເມັກ (ໃນຊ່ວງເດືອນຕຸລາ ປີ2011- ເດືອນພຶດສະພາ ປີ2012), ຂໍ້ມູນຈາກດ່ານພາສີຫວຽດນາມກ່ຽວກັບການຂົນສົ່ງໄມ້ທ່ອນຈາກ ສປປລາວໂດຍຜ່ານຈຸດກວດກາດ່ານຊາຍແດນສາກົນພູເກືອ - ໂບຍາວ , ດາກຕາອອກ - ນໍ້າຢາງໃນປີ2012. ແລະຂໍ້ມູນຈາກຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງສາລະວັນທີ່ບ້ານທ່າພູວາງ (ເມືອງລະຄອນເພັງ) ໃນການຂົນສົ່ງໄມ້ທ່ອນໂດຍໃຊ້ເສັ້ນທາງ 13 ໃຕ້: ໄປທາງທິດເໜືອຫາບັນດາແຂວງຕ່າງໆຂອງປະເທດລາວໃນປີ 2012 (ຕາຕະລາງ 5).

**ຕາຕະລາງ5. ການຂົນສົ່ງຜະລິດຕະພັນໄມ້ທ່ອນຈາກບັນດາແຂວງພາກໃຕ້ໃນລະດູການ 2011-2012.**

| ຈຸດກວດກາ | ໄມ້ກົມ, ແມັດກ້ອນ | ໄມ້ແປຮູບ, ແມັດກ້ອນ | ສໍາເລັດຮູບ, ແມັດກ້ອນ | ບໍ່ລະບຸ, ແມັດກ້ອນ | ຂາອອກໂດຍລວມ ໃນປີ 2011-2012ໃນສົມມູນຂອງໄມ້ໂດຍລວມ(RWE), ແມັດກ້ອນ | |
|---|---|---|---|---|---|---|
| | | | | | ຕົວເລືອກ1 | ຕົວເລືອກ2 |
| ພວນສະຫວັນ | 40,774 | 3,030 | - | - | 46,834 | 46,834 |
| ຍາລາຍ | 10,311.973 | 2,424.56 | - | - | 15,161.09 | 30,322.19 |
| ດາກຕາອອກ | 1,621 | 24,851 | - | - | 51,323 | 51,323 |
| ວັງເຕົ່າ | - | 17,668 | 5,303 | | 48,593.5 | 97,187 |
| ໂບວາຍ | ບໍ່ມີ | ບໍ່ມີ | ບໍ່ມີ | 194,224 | 194,223 | 242,780 |
| ເອດອດ | 89.23 | - | - | - | 89.23 | 89.23 |
| ລວມ | 52,796.203 | 47,973.56 | 5,303 | 194,294 | 356,224.8 | 468,535.4 |

ໝາຍເຫດ: ສໍາລັບຕົວເລືອກ1 ສົ່ງອອກໂດຍຜ່ານຈຸດກວດຍາລາຍແລະວັງເຕົ່າບໍ່ໄດ້ປັບແປງ; ເຊື່ອກັນວ່າໄມ້ທ່ອນທັງໝົດເອົາມາຈາກລາວໂດຍຜ່ານທາງໂບວາຍແມ່ນໄມ້ຍັງບໍ່ໄດ້ປຸງແຕ່ງ.

ສໍາລັບທາງເລືອກ2 ການສົ່ງອອກໂດຍຜ່ານຈຸດກວດຍາລາຍ ແລະວັງເຕົ່າຖືກປັບແປງ (ເພີ່ມຂຶ້ນເທົ່າຕົວ); ເຊື່ອກັນວ່າ 25% ຂອງໄມ້ທ່ອນທີ່ສົ່ງອອກໂດຍຜ່ານຈຸດກວດກາໂບວາຍແມ່ນໄມ້ແປຮູບ.

ຢ່າງຈະແຈ້ງ, ຊຸດຂໍ້ມູນແມ່ນບໍ່ເປັນເອກະພາບແລະບໍ່ຄົບຖ້ວນ.

ທີໜຶ່ງ, ສໍາລັບຈຸດກວດກາທັງສອງແຫ່ງພວກເຮົານໍາໃຊ້ຂໍ້ມູນກ່ຽວກັບການສົ່ງອອກ, ແລະສໍາລັບຈຸດກວດກາອື່ນໆ - ຂໍ້ມູນການນໍາເຂົ້າຈາກດ່ານພາສີຂອງຫວຽດນາມ[35].

ທີສອງ, ຊ່ວງເວລາເຊິ່ງພວກເຮົາມີຂໍ້ມູນສໍາລັບການສົ່ງອອກ, ເດືອນຕຸລາຫາເດືອນພຶດສະພາ, ມີການເລີ່ມຕົ້ນກ່ອນລະດູການຂຸດຄົ້ນໄມ້ເປັນທາງການແລ້ວ (ເດືອນພະຈິກຫາເດືອນທັນວາ). ດັ່ງນັ້ນ ບໍລິມາດການສົ່ງອອກລວມທັງໄມ້ທີ່ຂຸດຄົ້ນໃນລະດູການທີ່ຜ່ານມາ 2010-2011 (ແລະຄ່າໃຊ້ຈ່າຍຂອງໂຄຕ້າທີ່ຜ່ານມາ). ເນື່ອງຈາກວ່າ ໂອກາດໃນການຂຸດຄົ້ນໄມ້ທ່ອນໃນເດືອນຕຸລາແລະເດືອນພະຈິກຖືກຈໍາກັດໂດຍກົດໝາຍແລະຈາກປັດໃຈທາງທໍາມະຊາດ (ໃນຊ່ວງທ້າຍຂອງລະດູຝົນ) ພວກເຮົາເຊື່ອວ່າບໍລິມາດໄມ້ທ່ອນທີ່ສົ່ງອອກລະຫວ່າງຊ່ວງນີ້ມີຈໍານວນຫຼຸດລົງ ດັ່ງນັ້ນ ຈະບໍ່ນໍາໄປສູ່ການຄາດຄະເນສູງເກີນໄປຂອງການສົ່ງອອກ. ສໍາລັບການຄາດຄະເນທີ່ອາດຜິດພາດພວກເຮົາວິເຄາະການປ່ຽນແປງປະຈໍາເດືອນຂອງການສົ່ງອອກໄມ້ທ່ອນໃນປີ 2011 ໂດຍນໍາໃຊ້ຂໍ້ມູນຈາກດ່ານຊົ່ງນໍ້າໜັກທ່າແຕງ (ຮູບ10).

ຂໍ້ມູນເຫຼົ່ານີ້ສະແດງໃຫ້ເຫັນວ່າຈໍານວນລວມຂອງລົດບັນທຸກໄມ້ທີ່ຜ່ານດ່ານດັ່ງກ່າວ ໃນເດືອນຕຸລາຫາເດືອນພະຈິກແມ່ນ 8% ຂອງຈໍານວນປະຈໍາປີໂດຍລວມ. ອັດຕາສ່ວນຂອງຍານພາຫະນະທີ່ບັນທຸກຜະລິດຕະພັນສົ່ງອອກແມ່ນ 12% (ຖືວ່າ ບໍ່ມີລົດບັນທຸກທີ່ຈັດສົ່ງຜະລິດຕະພັນສົ່ງອອກລົງທະບຽນໃນເດືອນຕຸລາ). ພວກເຮົາເຊື່ອວ່າການຫຼຸດລົງຂອງການຈັດສົ່ງໄມ້ທ່ອນເປັນເລື່ອງທໍາມະດາໃນເດືອນຕຸລາຫາເດືອນພະຈິກເຊິ່ງສະແດງໃຫ້ເຫັນວ່າມີການຫຼຸດລົງຄ້າຍຄືກັນກັບການສົ່ງອອກໄມ້ເຊັ່ນດຽວກັນ.

ນອກຈາກນີ້, ຕ້ອງຖືວ່າພວກເຮົາບໍ່ມີຂໍ້ມູນກ່ຽວກັບການສົ່ງອອກຂອງຈຸດກວດກາຂອງລາວທັງສອງຈຸດໃນເຄິ່ງທີ່ສອງຂອງລະດູການ 2011-2012 - ໃນເດືອນມິຖຸນາ ຫາເດືອນຕຸລາ ປີ2012. ໃນຊ່ວງເວລາຄ້າຍຄືກັນນີ້ໃນປີ2011. ອັດຕາສ່ວນຂອງລົດບັນທຸກໄມ້ທ່ອນທີ່ຜ່ານດ່ານທ່າແຕງແມ່ນ 48% ຂອງຈໍານວນໂດຍລວມປະຈໍາປີ, ແລະອັດຕາສ່ວນຂອງລົດບັນທຸກທີ່ຈັດສົ່ງຜະລິດຕະພັນສົ່ງອອກແມ່ນ 47% ຂອງຈໍານວນໂດຍລວມປະຈໍາປີ (ແລະ 49% ຂອງຈໍານວນໂດຍລວມປະຈໍາປີຂອງລົດບັນທຸກໄປປະເທດໄທ).

ຖ້າພວກເຮົາຖືເອົາພຽງແຕ່ໃນຊ່ວງເວລາເດືອນມິຖຸນາ ຫາເດືອນກັນຍາ ປີ2011 ອັດຕາສ່ວນຂອງລົດບັນທຸກໄມ້ທ່ອນແມ່ນ47%,

ອັດຕາສ່ວນຂອງລົດບັນທຸກທີ່ຈັດສົ່ງຜະລິດຕະພັນສົ່ງອອກ - 47% (49% ຂອງລົດບັນທຸກໄປປະເທດໄທ).

ໃນຊ່ວງລະດູການ 2011-2012 ພວກເຮົາຄົງສາມາດຄາດຫວັງການປ່ຽນແປງທີ່ຄ້າຍຄືກັນ. ໃນກໍລະນີນີ້ ຂໍ້ມູນກ່ຽວກັບບໍລິມາດການສົ່ງອອກຈາກຈຸດກວດກາລາວທັງສອງຈຸດ
ຕ້ອງເພີ່ມຂຶ້ນເທົ່າຕົວເພື່ອສະແດງໃຫ້ເຫັນເຖິງການສົ່ງອອກລວມທັງໝົດໃນລະດູການໜຶ່ງ.




**ຮູບ10. ການປ່ຽນແປງປະຈຳເດືອນຂອງຈຳນວນລົດບັນທຸກຜະລິດຕະພັນໄມ້ຢູ່ທີ່ດ່ານຊົ່ງນ້ຳໜັກທ່າແຕງ ໃນປີ 2011.**

ອີງຕາມຂໍ້ມູນທີ່ໄດ້ຮັບຈາກຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO) ອັດຕະປື, ຈຳປາສັກ, ສາລະວັນແລະແຂວງເຊກອງ, ບໍລິມາດຂອງໄມ້ທ່ອນຂຸດຄົ້ນທີ່ຈົດທະບຽນໂດຍລວມໃນບັນດາແຂວງເຫຼົ່ານີ້ແມ່ນ 222.3 ພັນແມັດກ້ອນ ຈາກໂຄຕ້າ 250.9 ພັນແມັດກ້ອນ (ບໍ່ລວມແຂວງຈຳປາສັກທີ່ພວກເຮົາຂາດຂໍ້ມູນ) (ຕາຕະລາງ6).

ອີງໃສ່ຂໍ້ມູນທີ່ບໍ່ໄດ້ປັບແປງ ບໍລິມາດຂອງຜະລິດຕະພັນໄມ້ໂດຍລວມທີ່ຈັດສົ່ງມາຈາກພື້ນທີ່ສຶກສາແມ່ນ 300.3 ພັນແມັດກ້ອນ, ລວມທັງ 52.8 ພັນແມັດກ້ອນໄມ້ທີ່ຍັງບໍ່ໄດ້ແປຮູບ48 ພັນແມັດກ້ອນຂອງໄມ້ແປຮູບ, 5.3 ພັນແມັດກ້ອນຂອງຜະລິດຕະພັນສຳເລັດຮູບແລະ 194.2 ພັນແມັດກ້ອນຂອງຜະລິດຕະພັນໄມ້ທີ່ບໍ່ລະບຸ. ບໍລິມາດນີ້ແມ່ນທຽບເທົ່າກັບ 356,2 ພັນແມັດກ້ອນຂອງໄມ້ກົມ ຖ້າພວກເຮົາສັນນິຖານວ່າຜະລິດຕະພັນໄມ້ທີ່ບໍ່ລະບຸທັງໝົດແມ່ນໄມ້ທີ່ຍັງບໍ່ທັນແປຮູບ (ຕາຕະລາງ5). ຖ້າພວກເຮົາປັບປ່ຽນບໍລິມາດການສົ່ງອອກໂດຍຜ່ານຍາລາຍ ແລະວັງເຕົ່າ (ເພີ່ມຈຳນວນຂຶ້ນໂດຍອີງໃສ່ການຄາດຄະເນຂອງການປ່ຽນແປງການໄຫຼວຽນຂອງໄມ້ທ່ອນໃນປີ 2011) ແລະສັນນິຖານວ່າ 25% ຂອງບໍລິມາດການສົ່ງອອກທາງໂບວາຍແມ່ນໄມ້ແປຮູບ[36], ບໍລິມາດການສົ່ງອອກໂດຍລວມຈະເພີ່ມຂຶ້ນເຖິງ 468,5 ພັນແມັດກ້ອນ. ດັ່ງນັ້ນອັດຕາສ່ວນຂອງໄມ້ທ່ອນຈາກແຫຼ່ງທີ່ບໍ່ອະນຸຍາດຈະເປັນ 53% (ຮູບ11).

ໃນສົມມູນຂອງເງິນໂດຍລວມ ມູນຄ່າຂອງການນຳເຂົ້າໄມ້ທ່ອນ"ເພີ່ມຕື່ມ"246.2 ແມັດກ້ອນ (ຖ້າພວກເຮົາຖືເອົາມູນຄ່າສັນຍາໂດຍສະເລ່ຍຂອງໄມ້ທ່ອນທີ່ນຳເຂົ້າຫວຽດນາມໜຶ່ງແມັດກ້ອນຕໍ່

251.4ໂດລາສະຫະລັດ[a]) ອາດເກີນ60 ລ້ານໂດລາສະຫະລັດ (ໂດຍບໍ່ລວມມູນຄ່າຂອງຊະນິດໄມ້ມູນຄ່າສູງທີ່ຖືກລັກລອບສົ່ງອອກເຊິ່ງມີລາຄາທາງຕະຫຼາດສູງຫຼາຍເຊັ່ນ: ໄມ້ຂະຍຸງ(Dalbergia spp), ໄມ້ດູ່(Pterocarpus spp. ແລະໄມ້ອື່ນໆ). ຕົວເລກນີ້ເກີນງົບປະມານລາຍໄດ້ຂອງລາວຈາກການຂາຍໄມ້ທີ່ວາງແຜນໃນງົບປະມານແຫ່ງປີ2013-2014 ໂດຍ 3 ເທົ່າ[37].




**ຮູບ11.ການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນທີ່ບໍ່ມີອະນຸຍາດໃນກຸ່ມສີ່ແຂວງພາກໃຕ້ຂອງລາວ.**

[a]ອີງໃສ່ຂໍ້ມູນຂອງດ່ານພາສີຫວຽດນາມໃນການນຳເຂົ້າຜະລິດຕະພັນໄມ້ຈາກລາວ ໂດຍຜ່ານດ່ານຊາຍແດນສາກົນດາກຕາອອກ-ນ້ຳຢ່າງ ແລະ ພູເກືອ-ໂບວາຍໃນປີ 2012.

**ຕາຕະລາງ6.ການອອກໂຄຕ້າ ແລະຜະລິດຕະພັນທີ່ຈົດທະບຽນໃນແຂວງພາກໃຕ້ຂອງສປປລາວໃນປີ2011-2012 (ແມັດກ້ອນ)**

| | ແຂວງສາລະວັນ | | ແຂວງເຊກອງ | | ແຂວງຈຳປາສັກ | | ແຂວງອັດຕະປື | |
|---|---|---|---|---|---|---|---|---|
| | ໂຄຕ້າ | ການບັນທຶກ | ໂຄຕ້າ | ການບັນທຶກ | ໂຄຕ້າ | ການບັນທຶກ | ໂຄຕ້າ | ການບັນທຶກ |
| ບໍ່ແຮ່/ສຳຫຼວດ | ພອນສັກ | | ພອນສັກ | | | | ວັງຕັດ | |
| | ບໍ່ມີ | 35,484 | ບໍ່ມີ | 10,955 | | | 3,122 | 3,413.029 |
| ໂຄງການກໍ່ສ້າງເຂື່ອນໄຟຟ້າ | | | ເຊກອງ 4 | | | | ເຊກະໝານ | |
| | | | ບໍ່ມີ | 8,540 | | | 145,000 | 55,896.683 |
| | | | ຫ້ວຍລຳພັນໃຫຍ່ | | | | ນ້ຳກົງ | |
| | | | 6,000 | 4,489 | | | 45,000 | 36,538.941 |
| ໂຄງການພັດທະນາພື້ນຖານໂຄງລ່າງ | 14,215 | 5,557 | 6,155 | 1,971 | ບໍ່ມີ | 816 | ທາງສະໜາມໄຊ-ເຊເປນ ແລະ ຫຼັກ102-ພູຢາງ | |
| | | | | | | | 8,701.591 | 8,076.147 |
| | | | | | | | ສາຍສົ່ງນ້ຳກົງ, ສະໜາມໄຊ-ເຊເປນ | |
| | | | | | | | 1,965 | 1,458.212 |
| | | | | | | | ທາງ 18A ເຊຄຳໂພ-ເຊເປນ | |

| | | | | | | | | |
|---|---|---|---|---|---|---|---|---|
| | | | | | | | 555 | 0 |
| ໂຄງການກໍ່ສ້າງ | | | | | ບໍ່ມີ | 115 | ເຮືອນພັກແຂວງ | |
| | | | | | | | 2,864 | 2,861.099 |
| | | | | | | | ສຳລັບບັນດາເມືອງ ແລະ ບ້ານຕ່າງໆ | |
| | | | | | | | | 1,097.648 |
| ການບຸກເບີກທີ່ດິນອື່ນໆ | | | | | | | | 27,191.300 |
| ການຊົດເຊີຍ ແລະ ການບັນເທົາໜີ້ | | | ການບັນເທົາໄພນ້ຳຖ້ວມເກດສະໜາ | | ໂຄງການກໍ່ສ້າງເສັ້ນທາງເລກທີ14C | | ການຊົດເຊີຍໜີ້ບໍລິສັດຮ່ວງແອ້ງ | |
| | | | 5,981 | 5,221 | ບໍ່ມີ | 6,491 | 3,498 | 3,498.414 |
| ໂຄງການອື່ນໆ | | | | | | | ໂຄງການພັດທະນາວັງຕັດ | |
| | | | | | | | 356 | 271.371 |
| ໄມ້ທ່ອນຈາກລະດູການ 2010-2011 | | | | | | 1,031 | | |
| ສວນປູກ | 850 | 529 | 700 | 0 | | | 200 | 94.174 |
| ຕໍໄມ້ | | | | | ໄມ້ຂະຍຸງ | | | 584.662 |
| | | | | | ບໍ່ມີ | 115 | | |
| ເຂດປ່າຜະລິດ | 0 | 0 | 0 | 0 | 0 | 0 | 6,000 | 0 |
| ລວມ | 15,065 | 41,570 | 18,836 | 31,176 | ບໍ່ມີ | 8,568 | 217,261 | 140,981.68 |

## ແຫຼ່ງໄມ້ທ່ອນທີ່ບໍ່ມີເອກະສານຄົບຖ້ວນ

ເຫັນຢ່າງຊັດເຈນວ່າການຂຸດຄົ້ນແລະ ປຸງແຕ່ງໄມ້ບໍລິມາດຈຳນວນຫຼວງຫຼາຍຂອງໄມ້ທ່ອນທີ່ບໍ່ມີເອກະສານຄົບຖ້ວນດັ່ງກ່າວບໍ່ສາມາດດຳເນີນການໄດ້ໂດຍກຸ່ມຂຸດຄົ້ນໄມ້ຂະໜາດນ້ອຍຫຼືສ່ວນບຸກຄົນ. ກິດຈະກຳຂະໜາດໃຫຍ່ເຊັ່ນນີ້ສາມາດດຳເນີນໄດ້ພຽງແຕ່ມີສ່ວນຮ່ວມຂອງບັນດາບໍລິສັດທີ່ມີຄວາມສາມາດທາງດ້ານວິຊາການແລະກົດໝາຍເປັນພື້ນຖານເພື່ອຄຸ້ມຄອງເອົາການຂຸດຄົ້ນໄມ້ທີ່ຜິດກົດໝາຍແລະການປຸງແຕ່ງນີ້. ບົນພື້ນຖານດ້ານກົດໝາຍດັ່ງກ່າວເກີດຂຶ້ນຈາກການຈັດສັນໂຄຕ້າສຳລັບການຂຸດຄົ້ນໄມ້ທ່ອນ ພ້ອມດ້ວຍການບຸກເບີກທີ່ດິນເພື່ອເຮັດສວນປູກ, ໂຄງການກໍ່ສ້າງ, ການຂຸດຄົ້ນບໍ່ແຮ່ຫຼືການສຳຫຼວດທາງທໍລະນີວິທະຍາ.

ແນວໂນ້ມການອາໃສໄມ້ກຳລັງເພີ່ມທະວີຂຶ້ນຈາກການຫັນປ່ຽນທີ່ດິນປ່າໄມ້ສຳລັບໂຄງການພັດທະນາຕ່າງໆຖືກເຝົ້າສັງເກດໃນລະຫວ່າງປີ1990-1994 ແລະ 1995-1999ໃນເມື່ອເກືອບເຖິງສອງຫາສາມສ່ວນຂອງໄມ້ທ່ອນ (63.1%) ມາຈາກການຫັນປ່ຽນທີ່ດິນປ່າໄມ້ (ນະໂຍບາຍປ່າຜະລິດແຫ່ງ ສ. ປ. ປ. ລາວ, 2001). ອີງຕາມຂໍ້ມູນເປັນທາງການ, ອັດຕາສ່ວນຂອງໂຄງການພັດທະນາເຖິງຈຸດສູງສຸດທີ່ 82.7%ໃນລະດູການຂຸດຄົ້ນໄມ້2010-2010 ໃນຂະນະທີ່ 7.8% ຂອງບໍລິມາດດັ່ງກ່າວຖືກຂຸດຄົ້ນໃນເຂດປ່າຜະລິດ (PFA) ແລະ 9.5% - ໃນປ່າສວນປູກ[38]. ຕົ້ນລະດູການ 2011-2012 ຈົນເຖິງປັດຈຸບັນນີ້ລັດຖະບານລາວຍັງບໍ່ອອກໂຄຕ້າສຳລັບການຂຸດຄົ້ນໄມ້ໃນເຂດປ່າຜະລິດກ່ອນການວາງແຜນສຳຫຼວດແລະການຄຸ້ມຄອງປ່າໄມ້ຖືກສ້າງຂຶ້ນ. ອີງຕາມຂໍ້ມູນຈາກກະຊວງກະສິກຳ ແລະປ່າໄມ້ ການສຳຫຼວດປ່າຜະລິດທີ່ຍັງເຫຼືອ 780,000 ເຮັກຕາຈະບໍ່ສຳເລັດໂດຍປີ 2015[39]. ດັ່ງນັ້ນ, ໃນປັດຈຸບັນການຂຸດຄົ້ນໄມ້ຢ່າງເປັນທາງການໃນເຂດປ່າທຳມະຊາດມີຂຶ້ນໃນຮ່າງວຽກຂອງການຫັນປ່ຽນທີ່ດິນປ່າໄມ້. ການອະນຸຍາດໃຫ້ສຳປະທານແລະການເຊົ່າໃນສ. ປ. ປ. ລາວເພີ່ມຂຶ້ນໃນລະດັບທີ່ໜ້າຕົກໃຈນັບຕັ້ງແຕ່ໃນຕົ້ນປີ 2000. ຈາກ36 ໂຄງການເປັນມູນຄ່າ 0.02 ຕື້ໂດລາສະຫະລັດໃນປີ2000 ຈຳນວນໂຄງການທີ່ອະນຸຍາດເພີ່ມຂຶ້ນໂດຍປັດໃຈທີ່50 ເປີເຊັນ ໃນເວລາໜ້ອຍກວ່າສິບປີ (ຮູບ12)[40].




**ຮູບ12.ການເພີ່ມຂຶ້ນຂອງໂຄງການລົງທຶນໃນລາວ ແຕ່ປີ 2000.**

ແຫຼ່ງຂໍ້ມູນ: Lestrelin G. et al. (2013).

ອີງຕາມ Lestrelin et al. (2013) ມີການຊື້ຂາຍທີ່ດິນເພີ່ມຂຶ້ນສູງຫຼາຍ ຈາກຕົ້ນປີ 2005, ໃນຂະນະທີ່ອີງຕາມ ສິດທະນົນໄຊ ສຸວັນນະພັກດີ (Sithanonxay Suvannaphakdy)(2013) ການລັ່ງໄຫຼເຂົ້າມາຂອງການລົງທຶນໂດຍກົງຕ່າງປະເທດ (FDI) ຫຼາຍກວ່າເທົ່າຕົວໃນລະຫວ່າງປີ 2005 ແລະ 2006 (ຮູບ13).




**ຮູບ13. ການລັ່ງໄຫຼເຂົ້າມາຂອງການລົງທຶນໂດຍກົງຕ່າງປະເທດ(FDI)ທີ່ອະນຸມັດ, 2000-2011.**

ແຫຼ່ງຂໍ້ມູນ: ສິດທະນົນໄຊ ສຸວັນນະພັກດີ (Sithanonxay Suvannaphakdy) (2013).

ເຖິງວ່າຫຼຸດລົງເຫຼັກນ້ອຍໃນການອະນຸມັດໂຄງການລະຫວ່າງປີ 2007 ແລະ2008, ຄົງກ່ຽວຂ້ອງກັບການສັ່ງຢຸດຊົ່ວຄາວຂອງການສຳປະທານແຫ່ງຊາດທີ່ປະກາດໂດຍນາຍົກລັດຖະມົນຕີໃນເດືອນພຶດສະພາ

ປີ2007 (Lestrelin et al 2013.,), ໃນປີ 2009ພຽງປີດຽວ, ມີ 208 ໂຄງການທີ່ໄດ້ຮັບອະນຸມັດ ແລະດໍາເນີນກິດຈະການ, ເຊິ່ງມີມູນຄ່າປະມານ 4.3 ຕື້ໂດລາສະຫະລັດຂອງການລົງທຶນໂດຍກົງຕ່າງປະເທດ(FDI) (PEI, 2010)[41].
ການລົງທຶນເກືອບທັງໝົດແມ່ນແນ່ໃສ່ຂະແໜງດ້ານຂຸດຄົ້ນບໍ່ແຮ່ (29% ຂອງ ຫຸ້ນການລົງທຶນໂດຍກົງຕ່າງປະເທດ(FDI) ໂດຍລວມ), ຂະແໜງດ້ານພະລັງງານ (23%) ແລະຂະແໜງດ້ານກະສິກໍາ (15%)[42]. ຫວຽດນາມ, ສາທາລະນະລັດປະຊາຊົນຈີນ (PRC), ແລະປະເທດໄທກວມເອົາ ຫຼາຍກວ່າ 70%ການລັ່ງໄຫຼເຂົ້າມາຂອງການລົງທຶນໂດຍກົງຕ່າງປະເທດ (FDI).

ການວິເຄາະການຈໍາໜ່າຍການຊື້ຂາຍທີ່ດິນໂດຍຜ່ານປະເພດສິ່ງປົກຫຸ້ມໃນໜ້າດິນສະແດງໃຫ້ເຫັນວ່າສ່ວນໃຫຍ່ຂອງເນື້ອທີ່ດິນທີ່ອະນຸຍາດນອນຢູ່ໃນປະເພດ "ປ່າເປີດແລະປ່າເຫລົ່າ[a]" (260,372 ເຮັກຕາຫຼື 45% ຂອງເນື້ອທີ່ທັງໝົດນີ້ຢູ່ພາຍໃຕ້ການລົງທຶນ) ແລະປ່າໄມ້ (213,650 ເຮັກຕາ, 37%). 80-90% ຂອງເນື້ອທີ່ອະນຸຍາດສໍາລັບການລົງທຶນໃນຂະແໜງການຂຸດຄົ້ນບໍ່ແຮ່ແລະເຮັດກິດຈະການດ້ານປ່າໄມ້ ຖືກຈັດຢູ່ໃນປະເພດປ່າເປີດແລະປ່າເລົ່າແລະປ່າໄມ້ດົງດິບ[43].
29% ຂອງເນື້ອທີ່ໂດຍລວມຢູ່ພາຍໃຕ້ການລົງທຶນ (170,048 ເຮັກຕາ) ແລະ 330 ໂຄງການ (26% ຂອງໂຄງການທັງໝົດ)ມີຂື້ນໃນທີ່ດິນທີ່ຈັດເປັນປະເພດປ່າໄມ້ດົງດິບໂດຍລັດຖະບານສປປລາວ (ປ່າປ້ອງກັນ, ປ່າສະຫງວນ, ແລະປ່າຜະລິດ). ສ່ວນໃຫຍ່ທີ່ດິນຢູ່ພາຍໃຕ້ການລົງທຶນທີ່ຈັດເປັນປະເພດປ່າໄມ້ດົງດິບຕົກຢູ່ໃນປະເພດການຄຸ້ມຄອງຂອງປ່າສະຫງວນ (130,847 ເຮັກຕາ, 23%, 214 ໂຄງການ). ພື້ນທີ່ຈັດເປັນປະເພດເຂດປ່າປ້ອງກັນມີ 61 ໂຄງການກວມເອົາ 24,828 ເຮັກຕາ (4% ຂອງພື້ນທີ່ທັງໝົດຢູ່ພາຍໃຕ້ການລົງທຶນ). ບັນດາໂຄງການທີ່ຢູ່ໃນທີ່ດິນທີ່ຈັດເປັນປະເພດປ່າໄມ້ດົງດິບ, ໂຄງການຂຸດຄົ້ນບໍ່ແຮ່, ກິດຈະການດ້ານປ່າໄມ້ແລະກະສິກໍາ ກວມເອົາ 51%, 35% ແລະ 9% ຂອງເນື້ອທີ່ດິນໂດຍລວມ.
ສະເຕັນເຮົາສ໌ ແລະ ໂບໂຈ (Stenhouse ແລະ Bojo) (2011) ໄດ້ແນະນໍາວ່າ ມີເຖິງ 5 ເປີເຊັນຂອງເຂດປ່າສະຫງວນແຫ່ງຊາດຂອງລາວຕົກຢູ່ພາຍໃຕ້ການສໍາປະທານເພື່ອຂຸດຄົ້ນບໍ່ແຮ່ແລະນັ້ນມີເຖິງ 8 ເປີເຊັນຂອງລະບົບເຂດປ່າສະຫງວນແຫ່ງຊາດຂອງລາວຕົກຢູ່ພາຍໃຕ້ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ ຫຼືການສໍາປະທານເພື່ອຂຸດຄົ້ນບໍ່ແຮ່ (ສູງເຖິງ 5.4 ສ່ວນຮ້ອຍຂອງເນື້ອທີ່ດິນຂອງເຂດປ່າສະຫງວນແຫ່ງຊາດຖືກຫາຜົນປະໂຫຍດ ຫຼືຖືກຄອກງໍາ[44]).
ການກະໂດດເຂົ້າມາຢ່າງຊັດເຈນຂອງມູນຄ່າການສົ່ງອອກ(ແລະດ້ານບໍລິມາດເຊັ່ນດຽວກັນ) ສອດຄ່ອງກັນດີກັບຂໍ້ມູນກ່ຽວກັບການລັ່ງໄຫຼເຂົ້າມາໃນປະເທດລາວຂອງການລົງທຶນໂດຍກົງຕ່າງປະເທດ (FDI)[45].

---

[a]"ເລົ່າ" ເປັນພື້ນທີ່ປ່າທີ່ເຄີຍຖືກຖາງເຮັດໄຮ່

ເຮັດໃຫ້ການສົ່ງອອກໄມ້ທ່ອນຂອງລາວເພີ່ມຂຶ້ນເທົ່າຕົວ (ໃນດ້ານມູນຄ່າ) ໃນປີ 2011 ຕາມມາໂດຍການເພີ່ມຂຶ້ນເຖິງຈຸດສູງສຸດຂອງການອະນຸມັດໂຄງການລົງທຶນ (476 ໂຄງການ) ໃນປີ 2010, ເຊິ່ງກ່ຽວຂ້ອງກັບການດຳເນີນການຂອງໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່ຫຼາຍແຫ່ງ[46].
ເກືອບທັງໝົດການເພີ່ມຂຶ້ນຢ່າງຊັດເຈນໃນການສົ່ງອອກໄມ້ທ່ອນ ອາດສະທ້ອນເຖິງການເພີ່ມຂຶ້ນຂອງການຂຸດຄົ້ນໄມ້ທ່ອນ ໄດ້ດຳເນີນໂດຍຜ່ານການອະນຸຍາດເພື່ອບຸກເບີກທີ່ດິນສຳລັບໂຄງການລົງທຶນທີ່ໄດ້ຮັບອະນຸມັດແລ້ວ. ຄວນສັງເກດວ່າ ການລົງທຶນເກືອບທັງໝົດ (ຫຼາຍກວ່າ 70% ຂອງການລັ່ງໄຫຼເຂົ້າມາຂອງການລົງທຶນໂດຍກົງຕ່າງປະເທດ (FDI[47])ມາຈາກຫວຽດນາມ, ຈີນແລະປະເທດໄທ .ບັນດາປະເທດທີ່ໄດ້ກ່າວມາຂ້າງເທິງນັ້ນ ມີສ່ວນຮັບຜິດຊອບນຳເຂົ້າໄມ້ທ່ອນຂອງລາວເກືອບທັງໝົດ (96-97% ຂອງມູນຄ່າການນຳເຂົ້າໂດຍລວມປີ2011-2013).
ຢ່າງໃດກໍຕາມ, ຂໍ້ມູນຈາກພະແນກປ່າໄມ້(DOF)ສະແດງໃຫ້ເຫັນການຫຼຸດລົງຂອງການຂຸດຄົ້ນໄມ້ຢ່າງເປັນທາງການໃນສປປລາວປີ 2011 ໂດຍ 28-40% ເມື່ອທຽບກັບປີທີ່ຜ່ານມາ. ດັ່ງນັ້ນຖ້າສັນນິຖານກ່ຽວກັບສາເຫດແລະຜົນກະທົບຄວາມສຳພັນລະຫວ່າງການອະນຸມັດໂຄງການລົງທຶນແລະຕາມການເພີ່ມຂຶ້ນໃນການນຳເຂົ້າໄມ້ທ່ອນແມ່ນຖືກຕ້ອງດັ່ງນັ້ນພວກເຮົາຕ້ອງຍອມຮັບວ່າ "ການຫັນປ່ຽນທີ່ດິນປ່າໄມ້" ສຳລັບເຫດຜົນບາງຢ່າງບໍ່ໄດ້ຈົດທະບຽນໂດຍບັນດາໜ່ວຍງານທີ່ຮັບຜິດຊອບ(ຢ່າງໜ້ອຍໃນລະດັບຊາດ).
ຫຼັກຖານຫຼາຍຢ່າງຖືກຮວບຮວມວ່າງບໍ່ດົນມານີ້ເພື່ອພິສູດວ່າໂຄງການພັດທະນາບາງໂຄງການ ໃນພື້ນທີ່ປ່າໄມ້ດົງດິບຖືກນຳໃຊ້ເພື່ອເປັນສາກບັງໜ້າສຳລັບການຂຸດຄົ້ນໄມ້ (Baird, 2010)[48]. ການປະຕິບັດແບບດຽວກັນນີ້ເພື່ອເຂົ້າເຖິງປ່າໄມ້ດົງດິບພາຍໃຕ້ໜ້າກາກຂອງບັນດາໂຄງການການພັດທະນາໄຟຟ້ານ້ຳຕົກມີການລາຍງານວ່າຈະຖືກນຳໄປໃຊ້ຢູ່ໃນປະເທດຫວຽດນາມ[49]. ຕົວຢ່າງ, ການຈັດສັນສຳລັບສວນປູກຢາງພາລາມີສ່ວນລຸກລ້ຳເນື້ອທີ່ດິນ39,000 ເຮັກຕາທີ່ລາຍງານເມື່ອບໍ່ດົນມານີ້ຢູ່ໃນເຂດປ່າສະຫງວນແຫ່ງຊາດພູພະນັງແລະພູເຂົາຄວາຍ ແຂວງວຽງຈັນແລະບໍລິຄຳໄຊ[50].
ບົດລາຍງານທີ່ປ່ອຍອອກມາເມື່ອບໍ່ດົນມານີ້ກ່ຽວກັບຜົນສຳຫຼວດຂອງການເຊົ່າແລະສຳປະທານທີ່ດິນຂອງລັດໃນສປປລາວ (2012) ສະແດງໃຫ້ເຫັນມີຫຼາຍກໍລະນີສຶກສາໃນເມື່ອການສຳປະທານເພື່ອເຮັດກະສິກຳຖືກຈັດສັນຢູ່ໃນປ່າໄມ້ດົງດິບທີ່ສົມບູນ[51]. ມີກໍລະນີຈຳນວນໜຶ່ງຖືກບັນທຶກໃນເມື່ອໂຄງການກໍ່ສ້າງເສັ້ນທາງແລະເຂື່ອນໄຟຟ້າຕິດຕາມມາໂດຍການຂຸດຄົ້ນໄມ້ທີ່ຜິດກົດໝາຍຢູ່ນອກເຂດພື້ນທີ່ ທີ່ອະນຸຍາດ.
ການພິສູດທາງດ້ານກົດໝາຍຂອງບັນດາໂຄຕ້າສຳລັບການຂຸດຄົ້ນໄມ້ທ່ອນຄຸນນະພາບສູງຈຳນວນຫຼາຍພັນແມັດກ້ອນໃນລະຫວ່າງການບຸກເບີກຂອງໂຄງການຫີນປູນເພື່ອຂຸດຄົ້ນເອົາວັດສະດຸກໍ່ສ້າງ, ໂຄງການກໍ່ສ້າງເສັ້ນທາງປູຫີນຫຼື "ການເກັບກູ້" ຂຸດຄົ້ນໄມ້ທ່ອນໃນເຂດນ້ຳຖ້ວມຂອງໂຄງການເຂື່ອນໄຟຟ້າໃນກໍລະນີຈຳນວນໜຶ່ງເຮັດໃຫ້ເກີດຂໍ້ສົງໃສແລະຄຳຖາມ. ໃນຫຼາຍຄັ້ງ ການວິເຄາະເບື້ອງຕົ້ນໂດຍນຳໃຊ້ແຜນທີ່ພູມີປະເທດ ແລະຂໍ້ມູນການຕິດຕາມທາງໄກພິສູດວ່າເປັນໄປບໍ່ໄດ້ທີ່ຈະຂຸດຄົ້ນບໍລິມາດໄມ້ທ່ອນຄຸນນະພາບສູງດັ່ງກ່າວ ຍ້ອນວ່າເຂດພື້ນທີ່ອະນຸຍາດຈຳກັດຫຼືຊັບພະຍາກອນ

ດ້ານໄມ້ມີໜ້ອຍ (ຕົວຢ່າງ, ປ່າໄມ້ຮ່ອມພູນ້ຳຫ້ວຍພາຍໃນອ່າງເກັບນ້ຳທີ່ວາງແຜນໄວ້ປົກກະຕິແມ່ນປົກຄຸມໂດຍປ່າເລົ່າອ່ອນ ຍ້ອນການຖາງປ່າເຮັດໄຮ່ທີ່ຍັງມີການປະຕິບັດຢ່າງກວ້າງຂວາງໃນສປປ ລາວ).

ຂໍ້ມູນທີ່ເກັບກຳໂດຍຜູ້ຄົ້ນຄວ້າທີ່ຜ່ານມາແລະຍັງເປັນຂໍ້ມູນການສຳຫຼວດຂອງພວກເຮົາເຊັ່ນກັນ ສະແດງໃຫ້ເຫັນວ່າໂຄຕ້າທີ່ມີຢູ່ແລ້ວສຳລັບການຂຸດຄົ້ນເພື່ອຫັນປ່ຽນປ່າກົງກັນຂ້າມກັນຢ່າງສິ້ນເຊີງກັບກົດໝາຍຂອງລາວແລະເປັນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການຂຸດຄົ້ນໄມ້ຂະໜາດໃຫຍ່ທີ່ຜິດກົດໝາຍ. ການປະຕິບັດດັ່ງກ່າວມີລັກສະນະຕົ້ນຕໍຄື:

- ແຜນທີ່ສຳລັບການສຳປະທານເພື່ອຂຸດຄົ້ນໄມ້ບໍ່ຖືກຕ້ອງຫຼືບໍ່ມີ.
- ການປັກຫຼັກໝາຍເຂດແດນບໍ່ໄດ້ດຳເນີນການ.
- ການສຳຫຼວດຂຶ້ນບັນຊີໄມ້ໄດ້ອອກແບບໄວ້ລ່ວງໜ້າສຳລັບການຂຸດຄົ້ນໄມ້ຫຼືບໍ່ໄດ້ດຳເນີນການ (ຫຼືບາງຄັ້ງກໍບິດເບືອນ) ຫຼືດຳເນີນຕາມຫຼັກວິຊາການ(ຕາມຫຼັກເກນທາງການ)ເທົ່ານັ້ນແລະບໍ່ຖືກນຳໃຊ້ເຂົ້າໃນການປະຕິບັດໂຕຈິງ.
- ການຂຸດຄົ້ນໄມ້ທ່ອນເກີດຂຶ້ນຢູ່ໃນພື້ນທີ່ທີ່ມີໄມ້ຄຸນນະພາບສູງໂດຍບໍ່ຄຳນຶງເຖິງຂອບເຂດຂອງການສຳປະທານ.
- ໜ່ວຍງານທີ່ກ່ຽວຂ້ອງ (ຫ້ອງການກະສິກຳ ແລະປ່າໄມ້ເມືອງ,ຫ້ອງການກະສິກຳແລະປ່າໄມ້ແຂວງ,ຫ້ອງການກວດກາປ່າໄມ້ແຂວງ,ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ)ບໍ່ຄວບຄຸມການປະຕິບັດ ຕາມທີ່ຕັ້ງຂອງການຂຸດຄົ້ນໄມ້ໃນຂອບເຂດສຳປະທານ ຫຼືສ່ວນປະກອບຂອງໄມ້ຂຸດຄົ້ນທີ່ມີອະນຸຍາດ.

ການບໍ່ມີແຜນທີ່ແລະແມ້ແຕ່ວ່າບັນດາໂຄງການທຳມະດາທີ່ມີເຂດແດນຂອງການສຳປະທານໄດ້ຖືກລະເມີດເປັນລະບົບ, ດັ່ງທີ່ສະແດງໃຫ້ເຫັນໂດຍການສຳຫຼວດເຂດແດນຂອງການສຳປະທານທີ່ດຳເນີນຢູ່ແຂວງວຽງຈັນໃນປີ2008-2009 (ຂໍ້ມູນຂອງໂຄງການສຳຫຼວດການສຳປະທານແລະການເຊົ່າທີ່ດິນແຫ່ງລັດ, 2009 )[52]. ອີງຕາມການສຳຫຼວດນີ້ມີພຽງແຕ່ 5% ຂອງຈຳນວນໂດຍລວມຂອງໂຄງການເຊົ່າແລະສຳປະທານທີ່ດິນທີ່ຍັງເຄື່ອນໄຫວສາມາດສະໜອງແຜນທີ່ທີ່ມີເຂດແດນຂອງເນື້ອທີ່ເຊົ່າ/ສຳປະທານ (12 ໃນ 237ໂຄງການ) ລວມທັງ3.5% ຂອງໂຄງການກະສິກຳ (4 ຈາກ 114) ແລະ 10.9% ຂອງໂຄງການຂຸດຄົ້ນບໍ່ແຮ່ (6ໃນ55).21.9% ຂອງກໍລະນີທີ່ມີແຜນທີ່ແຕ້ມໂດຍມືລວມມີ27.2% ຂອງໂຄງການກະສິກຳ (31)ແລະ 21.8% ຂອງໂຄງການຂຸດຄົ້ນບໍ່ແຮ່ (12). ແຕ່ໄດ້ຖືກສັງເກດວ່າແຜນທີ່ເຫຼົ່ານີ້ມີຫຼາຍເທື່ອ "ບໍ່ສະທ້ອນເຖິງຄວາມເປັນຈິງ".

ຍາກຈະຈິນຕະນາການວ່າ ເກືອບທັງໝົດຂອງກໍລະນີເຫຼົ່ານີ້ ໜ່ວຍງານທີ່ກ່ຽວຂ້ອງບໍ່ຮັກສາຫຼືເຮັດເອກະສານເຫຼົ່ານີ້ເສຍໂດຍສະເພາະດັ່ງທີ່ໃຫ້ຂໍ້ມູນມາວ່າສ່ວນໃຫຍ່ການສຳປະທານແລະການເຊົ່າຖືກອະນຸ

ຍາດລະຫວ່າງຊ່ວງໄລຍະເວລາ3 ປີ (2006-2008) ກ່ອນການສຳຫຼວດສຳເລັດ. ຄົງຈະເປັນເລື່ອງປົກກະຕິທີ່ບໍ່ເຮັດແຜນທີ່ເຂດແດນ. ທີມງານສຳຫຼວດຍັງເປີດເຜີຍກໍລະນີຕ່າງໆໃນເມື່ອບັນດາສວນປູກຖືກຈັດສັນຢູ່ໃນເຂດປ່າດົງດິບຫຼືປ່າເລົ່າແກ່ທີ່ຍັງສົມບູນແລະແມ້ແຕ່ວ່າຢູ່ໃນເຂດປ່າອະນຸລັກ ແລະປ່າສະຫງວນ.

ແຜນທີ່ສຳປະທານທີ່ບໍ່ສົມບູນສະແດງໃຫ້ເຫັນໂດຍຫຼາຍຕົວຢ່າງກໍລະນີສຶກສາໃນການຄົ້ນຄວ້າກ່ຽວກັບ "ການສຳປະທານແລະການເຊົ່າໃນສ. ປ. ປ. ລາວ (2012)". ໃນກໍລະນີໜຶ່ງປີ 2006 ບໍລິສັດໄດ້ຮັບອະນຸຍາດເຮັດສວນປູກຢາງພາລາເນື້ອທີ່214 ເຮັກຕາ. ເວລາດຽວກັນນັ້ນ ເຂດແດນຢູ່ໃນແຜນທີ່ຕິດຄັດກັບໃບເອກະສານສັນຍາມີເນື້ອທີ່ກວມເອົາ 3,411 ເຮັກຕາ. ໂດຍເວລານັ້ນການສຳຫຼວດໄດ້ດຳເນີນແລ້ວບໍລິສັດທີ່ລົງທຶນໄດ້ທຳການບຸກເບີກປ່າໄມ້ເນື້ອທີ່345 ເຮັກຕາໄປແລ້ວ. ໃນກໍລະນີອື່ນແຜນທີ່ສຳລັບການບຸກເບີກເນື້ອທີ່1,172 ເຮັກຕາຫຼັງຕິດຄັດມານຳໃບເອກະສານສັນຍາ, ເຊິ່ງເກີນຂະໜາດຂອງເນື້ອທີ່ອະນຸຍາດສຳລັບການບຸກເບີກເຮັດສວນປູກກາເຟ 150 ເຮັກຕາຫຼາຍເທົ່າ. ໃນກໍລະນີນີ້ ບໍລິສັດນຳໄດ້ໃຊ້ແຜນທີ່ "ຜິດພາດ"ນີ້ ແລະທຳການບຸກເບີກພື້ນທີ່ກວ້າງກວ່າທີ່ອະນຸມັດ.

ໄດ້ຍົກເອົາອີກສອງຕົວຢ່າງໃນຊ່ວງການທົດສອບປັບປຸງລະບົບການຕິດຕາມໄມ້ທ່ອນສຳລັບການຫັນປ່ຽນປ່າເປັນທີ່ດິນ ເຊິ່ງດຳເນີນການເປັນສ່ວນໜຶ່ງຂອງໂຄງການ CarBi ຂອງອົງການສາກົນ WWF ຈາກເດືອນມັງກອນ ປີ2014 ຫາເດືອນເມສາປີ2015.

## ກໍລະນີສຶກສາທີ1: ການບຸກເບີກປ່າໄມ້ສຳລັບໂຄງການຂຸດຄົ້ນຫີນປູນ (ແຂວງສາລະວັນ)

ໜຶ່ງໃນໂຄຕ້າທົດລອງອະນຸມັດໃຫ້ບຸກເບີກປ່າໄມ້ສຳລັບໂຄງການຂຸດຄົ້ນຫີນປູນຢູ່ໃນເມືອງ ແລະແຂວງສາລະວັນ. ອີງຕາມການແຈ້ງການຂອງລັດຖະມົນຕີກະຊວງກະສິກຳແລະປ່າໄມ້ວັນທີ11 ເດືອນພະຈິກ ປີ2013 (ເລກທີ0082/ກຊກປ)[53], ແລະການຕັດສິນໃຈຂອງເຈົ້າແຂວງສາລະວັນ ວັນທີ2ເດືອນທັນວາ ປີ2013 (ເລກທີ.600/ຈຂສ)[54].ແຜນການຂຸດຄົ້ນໄມ້ດັ່ງກ່າວໃນງົບການເງິນແຫ່ງປີ2013- 2014 ລວມທັງ "ໄມ້ທ່ອນ 5,000 ແມັດກ້ອນ ໃນເຂດພື້ນທີ່ສຳປະທານຂອງໂຄງການຂຸດຄົ້ນຫີນປູນໃນເນື້ອທີ່1,500 ເຮັກຕາໃນແຂວງສາລະວັນ". ແຜນທີ່ສະໜອງໃຫ້ໂດຍຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO)ໄດ້ກຳນົດເຂດແດນສຳປະທານສຳລັບໂຄງການຂຸດຄົ້ນຫີນປູນມີພຽງແຕ່505 (504?) ເຮັກຕາເທົ່ານັ້ນ (ຮູບ14).

ອີງຕາມການອະທິບາຍຂອງຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO)ບໍລິມາດທີ່ກຳນົດໄວ້ແມ່ນພຽງແຕ່ເປັນການປະມານເທົ່ານັ້ນແລະຈະໄດ້ຮັບການຢືນຢັນອີກເທື່ອໜຶ່ງໂດຍອີງໃສ່ການສຳຫຼວດພາກສະໜາມກ່ອນຈະເລີ່ມການຂຸດຄົ້ນໄມ້. ຄວນກ່າວຕື່ມອີກວ່າກົດໝາຍວ່າດ້ວຍປ່າໄມ້ແຫ່ງ ສປປລາວຮຽກຮ້ອງໃຫ້ກຳນົດເປັນທີ່ແນ່ນອນໃຫ້ຖືກຕ້ອງກັບຈຳນວນຂອງບໍລິມາດ
ແລະສ່ວນປະກອບຂອງຊະນິດທີ່ຄາດໄວ້ໃນແຜນການປະຈຳປີສຳລັບບັນດາໂຄງການພື້ນຖານໂຄງລ່າງ ໂດຍອີງໃສ່ຜົນຂອງການສຳຫຼວດຂຶ້ນບັນຊີໄມ້, ເຊິ່ງມີການວັດແທກແລະໝາຍເຄື່ອງໝາຍໃສ່ຕົ້ນໄມ້ທັງໝົດທີ່ມີເສັ້ນຜ່າສູນກາງຫຼາຍກວ່າ 15 (ຫຼື 10) ຊຕມ[55].

ໃນເວລາດຽວກັນ ການສຳຫຼວດຂຶ້ນບັນຊີໄມ້ໄດ້ດຳເນີນການໃນຊ່ວງວັນທີ8 ຫາ ວັນທີ28ເດືອນມັງກອນ ປີ2014ກວມເອົາພຽງແຕ່ 223 ເຮັກຕາ ຈາກ505 ເຮັກຕາຂອງການສຳປະທານ(46%). ມີ1,622 ຕົ້ນໄມ້ຈາກ53 ຊະນິດທີ່ແຕກຕ່າງກັນທີ່ມີເສັ້ນຮອບວົງຈາກ 1,000 ມມ (ຕົວຢ່າງເສັ້ນຜ່າສູນກາງຫຼາຍກວ່າ 30 ຊມ) ຖືກວັດແທກ, ໝາຍເຄື່ອງໝາຍໂດຍຂວານ, ຮວບຮວມຂໍ້ມູນແລະຂໍ້ມູນບາງສ່ວນຢູ່ໃນເຄື່ອງຈີພີເອສ(GPS)[56]. ບໍລິມາດໂດຍລວມມີຈຳນວນ 2,908 ແມັດກ້ອນ.

ໃນຂະນະທີ່ລົງຢ້ຽມຢາມພື້ນທີ່ທີ່ສຳຫຼວດໃນເດືອນມັງກອນປີ2015 ພວກເຮົາພົບວ່າ ໄກກັນຫຼາຍຈາກຕົ້ນໄມ້ທັງໝົດທີ່ມີເສັ້ນຜ່າສູນກາງຫຼາຍກວ່າ 30 ຊຕມຖືກຈົດທະບຽນ (ຄື: ບໍ່ມີເຄື່ອງໝາຍ). ນອກຈາກນັ້ນຫຼັກການຄັດເລືອກຕົ້ນໄມ້ກໍຍັງບໍ່ຊັດເຈນ ເນື່ອງຈາກວ່າຕົ້ນໄມ້ທີ່ບໍ່ມີເຄື່ອງໝາຍບາງສ່ວນຂ້ອນຂ້າງມີມູນຄ່າດ້ານພານິດສູງໃນການສົມທຽບກັບຕົ້ນໄມ້ທີ່ມີເຄື່ອງໝາຍ (ຮູບ15).

ການຂຸດຄົ້ນໄມ້ພາຍໃຕ້ໂຄຕ້ານີ້ໄດ້ເລີ່ມຕົ້ນກ່ອນວັນທີ21 ເດືອນມັງກອນປີ2014ຄື: ໜຶ່ງອາທິດກ່ອນການສຳຫຼວດຂຶ້ນບັນຊີໄມ້ສຳເລັດ(ຮູບ16). ເຂດແດນສຳປະທານຄວນມີການປັກຫຼັກໝາຍພາຍຫຼັງຈາກນັ້ນ. ຢ່າງໃດກໍຕາມອີງຕາມພະນັກງານຫ້ອງການກະສິກຳ ແລະປ່າໄມ້ເມືອງ (DAFO)ໄດ້ກ່າວວ່າບໍ່ມີການປັກຫຼັກໝາຍເຂດແດນສຳປະທານກໍບໍ່ເປັນຫຍັງ ເນື່ອງຈາກວ່າຜູ້ຂຸດຄົ້ນໄມ້ມີຄວາມຊຸນເຄີຍກັບເຂດແດນສຳປະທານຂອງເຂົາເຈົ້າແລ້ວ.

ໃນລະຫວ່າງການລົງກວດກາພາກສະໜາມໃນເດືອນມີນາຫາເດືອນເມສາປີ2014 ພວກເຮົາພົບວ່າສ່ວນໃຫຍ່ທີ່ຕັ້ງຂອງການຂຸດຄົ້ນໄມ້ຢູ່ນອກເຂດແດນສຳປະທານທີ່ລະບຸໄວ້ໃນແຜນທີ່ (ຮູບ17). ຜູ້ຕາງໜ້າຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງ (DAFO) ຄາດວ່າເນື້ອທີ່ຕົວຈິງຂອງການສຳປະທານທີ່ອະນຸມັດອາດໂດຍລັດຖະບານແມ່ນ1,500 ເຮັກຕາແຕ່ບໍ່ສາມາດຄາດເດົາໄດ້ວ່າເຂດແດນຂອງການສຳປະທານທີ່ໃຫຍ່ກວ່າຢູ່ໃສ່. ຕໍ່ມາໄດ້ມີການຢືນຢັນວ່າພື້ນທີ່ສຳປະທານຂອງໂຄງການຂຸດຄົ້ນຫີນປູນອອກໃຫ້ໂດຍພະແນກພະລັງງານແລະບໍ່ແຮ່ມີພຽງແຕ່ 505 ເຮັກຕາ. ຫ້ອງການກະສິກຳ ແລະປ່າໄມ້ແຂວງ (PAFO)ບໍ່ມີແຜນທີ່ອື່ນໃດເລີຍສຳລັບພື້ນທີ່ບຸກເບີກທີ່ໃຫຍ່ກວ່າແຕ່ກໍຍັງອະນຸຍາດໃຫ້ມີການຂຸດຄົ້ນໄມ້ໃນພື້ນທີ່ຈຳນວນ1,500ເຮັກຕານັ້ນ. ຍິ່ງໄປກວ່ານັ້ນຍາກທີ່ຈະເຂົ້າໃຈວ່າຍ້ອນຫຍັງ ຫ້ອງການກະສິກຳ ແລະປ່າໄມ້ແຂວງ ແລະເມືອງໄດ້ວາງແຜນປັກຫຼັກໝາຍເຂດແດນສຳລັບຂອບເຂດສຳປະທານ "ທີ່ມີຂະໜາດໜ້ອຍກວ່າ"505 (504?) ເຮັກຕາ.




**ຮູບ14. ແຜນທີ່ຂອງຫ້ອງການກະສິກຳ ແລະປ່າໄມ້ແຂວງ (PAFO)ທີ່ສະໜອງໃຫ້ທີ່ມີເຂດແດນສຳປະທານສຳລັບໂຄງການຂຸດຄົ້ນຫີນປູນເນື້ອທີ່504 ເຮັກຕ້າ(ໃນຂອບສີແດງ),ເນື້ອທີ່ 233ເຮັກຕ້າທີ່ດຳເນີນການສຳຫຼວດຂຶ້ນບັນຊີໄມ້(ໃນຂອບສີເຫຼືອງ).ປ້າຍສະແດງເຂດແດນສຳປະທານທີ່ຕິດເທິງຕົ້ນໄມ້ໃກ້ທາງ(ຂວາມື).**



**ຮູບ15. ຕົວຢ່າງຂອງຕົ້ນໄມ້ທີ່ມີເຄື່ອງໝາຍເຊິ່ງມີມູນຄ່າທາງດ້ານພານິດຕ່ຳທີ່ບໍ່ຖືກຂຸດຄົ້ນ.**



**ຮູບ16. ພະນັກງານຫ້ອງການກະສິກຳ ແລະປ່າໄມ້ເມືອງໄດ້ບັນທຶກການສະໜອງໄມ້ທີ່ຂຸດຄົ້ນຢູ່ໃນສະໜາມII: ບັນທຶກຄັ້ງທຳອິດໃນວັນທີ21 ເດືອນມັງກອນປີ2014.**

ຜົນຂອງການເຮັດແຜນທີ່ເຂດທີ່ຕັ້ງຂອງການຂຸດຄົ້ນໄມ້ໃນພື້ນທີ່ນີ້ໂດຍອີງໃສ່ການສົມທຽບຂອງພາບຖ່າຍທາງດາວທຽມຄວາມລະອຽດສູງຖ່າຍກ່ອນມີການຂຸດຄົ້ນໄມ້(ເວີດວິວ (WorldView) -2, 30ເດືອນທັນວາ ປີ2013) ແລະຈົບສຳເລັດການຂຸດຄົ້ນໄມ້ເນື່ອງຈາກວ່າໃນຕົ້ນລະດູຝົນ (ກອນສາດ

(Kompsat) -3, ວັນທີ05ເດືອນມິຖຸນາ ປີ2014) ສະແດງໃຫ້ເຫັນວ່າ ມີເຖິງ 76% ຂອງເຂດພື້ນທີ່ຂຸດຄົ້ນໃໝ່ທີ່ກວດພົບ (35.4ໃນ46.8 ຮຕ)ຕັ້ງຢູ່ນອກເຂດແດນສຳປະທານ (ຮູບ18). ຄວາມຈິງຢູ່ທີ່ພາກສະໜາມຢືນຢັນວ່າເຂດທີ່ຕັ້ງຂອງການຂຸດຄົ້ນໄມ້ທ່ອນທັງໝົດທີ່ກວດພົບໂດຍຜ່ານການວິເຄາະພາບຖ່າຍທາງດາວທຽມແມ່ນຄວາມຈິງ.

ເພາະສະນັ້ນ, ມີພຽງຈຳນວນໜ້ອຍໃນໄມ້ທ່ອນນັບຮ້ອຍທີ່ກວດສອບຢູ່ສະໜາມ IIມີເຄື່ອງໝາຍຈາກການສຳຫຼວດຂຶ້ນບັນຊີໄມ້ (ຮູບ19). ອີງຕາມການປະເມີນເປັນທາງການມີພຽງ 22.2 ແມັດກ້ອນ (19 ທ່ອນ) ຈາກບໍລິມາດໂດຍລວມຂອງ 3,290 ແມັດກ້ອນທີ່ຂຸດຄົ້ນໃນຊ່ວງລະດູການຢູ່ພາຍໃຕ້ໂຄຕ້າໄດ້ຖືກນັບໃນຊ່ວງສຳຫຼວດເພື່ອຂຶ້ນບັນຊີໄມ້ (ເຊັ່ນ:ຕ່ຳກວ່າໜຶ່ງສ່ວນຮ້ອຍ). ນອກຈາກນັ້ນໃນພື້ນທີ່ສຳຫຼວດເພື່ອຂຶ້ນບັນຊີໄມ້, ພວກເຮົາຍັງພົບເຫັນການຂຸດຄົ້ນບັນດາຕົ້ນໄມ້ທີ່ບໍ່ມີເຄື່ອງໝາຍຢູ່ໃກ້ກັບຕົ້ນໄມ້ທີ່ມີເຄື່ອງໝາຍແຕ່ບໍ່ໄດ້ຖືກຂຸດຄົ້ນ.

ໃນລະຫວ່າງການສຳຫຼວດເພື່ອຂຶ້ນບັນຊີໄມ້ມີ 53 ຊະນິດໄມ້ທີ່ແຕກຕ່າງກັນຖືກນັບ. ໃນເວລາດຽວກັນໄມ້ທ່ອນທີ່ຂຸດຄົ້ນຕົວຈິງມາຈາກພຽງແຕ່ 19 ຊະນິດ. 80% ຂອງໄມ້ທ່ອນທີ່ຂຸດຄົ້ນມາຈາກ3 ຊະນິດຄື:ໄມ້ບາກ (robusta Anisopteraຫຼືcostata) - 41%,ໄມ້ຍາງ (Dipterocarpus spp.) - 29 %,ໄມ້ຈິກ(Shorea hypochra ຫຼື obtusa?) - 10%. ຢ່າງໃດກໍຕາມອີງຕາມການສຳຫຼວດຂຶ້ນບັນຊີໄມ້ອັດຕາສ່ວນຂອງຊະນິດໄມ້ເຫຼົ່ານີ້ຄາດຄະເນຢູ່ທີ່13% (9%, 4% ແລະຕ່ຳກວ່າ 1% ຕາມລຳດັບ) (ຮູບ19).

ນອກຈາກນັ້ນມີຫຼາຍເຫດຜົນທີ່ເຮັດໃຫ້ເກີດຂໍ້ສົງໃສຄວາມຈຳເປັນໃນການ
ຫັນປ່ຽນທີ່ດິນປ່າໄມ້ຈຳນວນຫຼວງຫຼາຍດັ່ງກ່າວ (505 ເຮັກຕາແລະນອກຈາກນັ້ນ ຍັງມີ1,500 ເຮັກຕາ) ສຳລັບໂຄງການຂຸດຄົ້ນຫີນປູນ. ການວິເຄາະພາບຖ່າຍທາງດາວທຽມສະແດງໃຫ້ເຫັນວ່າໃນເບື້ອງຕົ້ນຂອງບໍລິສັດຊີນັງລາວຊົງຍາ ຢູຊີ(Zhongya Yuxi)ດຳເນີນກິດຈະການຈາກປີ2012[57] ຈົນເຖິງປັດຈຸບັນພື້ນທີ່ຂອງໂຄງການຂຸດຄົ້ນຫີນປູນມີພຽງແຕ່ 14 ເຮັກຕາ (ເຊັ່ນ: ການເພີ່ມຂຶ້ນຂອງເນື້ອທີ່ໃນໄລຍະຜ່ານມາຢ່າງໜ້ອຍ7 ເຮັກຕາຕໍ່ປີ).



ຮູບ17. ລົດດຸດທີ່ມີເຄື່ອງໝາຍຂອງຂະແໜງປ່າໄມ້ເພື່ອການຄຸ້ມຄອງການຂຸດຄົ້ນໄມ້ ແລະປ່າ ຢູ່ທີ່ພື້ນທີ່ສຳປະທານໂຄງການສຳຫຼວດຖ່ານຫີນ ເມືອງສາລະວັນ- ເມືອງຕາໂອຍ, ແຂວງສາລະວັນ, ຖືກພົບເຫັນເຮັດວຽກຢູ່ນອກພື້ນທີ່ສຳປະທານ (200ແມັດ), ວັນທີ28 ເດືອນມີນາປີ2014.



**ຮູບ18. ສະຖານທີ່ຕັ້ງຂອງການຂຸດຄົ້ນໄມ້ທ່ອນແລະບຸກເບີກທີ່ດິນໃໝ່ (ຂອບເຂດສີມ້ວງ) ໄດ້ດຳເນີນການປີ 2014 ໃນພື້ນທີ່ຂອງໂຄງການສຳປະທານຂຸດຄົ້ນຫີນປູນ (ເຂດແດນສຳປະທານເນັ້ນໃນສີແດງ).**






**ຮູບ19. ໄມ້ທ່ອນຢູ່ທີ່ສະໜາມII (ລຽງໄປຕາມເຂັມໂມງຈາກຊ້າຍເທິງ): ໄມ້ທ່ອນຖືກໝາຍໃນລະຫວ່າງການສຳຫຼວດຂຶ້ນບັນຊີໄມ້ ຄື; ໄມ້ບາກ (robusta Anisopteraຫຼື costata ) ໄມ້ຍາງ (spp Dipterocarpus.); ໄມ້ຈິກ (hypochra Shorea ຫຼື obtusa?).**

ອີງຕາມການກວດກາພາກສະໜາມ ການຂຸດຄົ້ນໄມ້ທ່ອນແມ່ນແນ່ໃສ່ຂຸດຄົ້ນໄມ້ພານິດໃນເປົ້າໝາຍໂດຍບໍ່ຄຳນຶງເຖິງພື້ນທີ່ມີທ່າແຮງຂອງບໍ່ຫີນປູນ, ລວມທັງການຂຸດຄົ້ນໄມ້ຢູ່ໃນເຂດພື້ນທີ່ສະພາບແວດລ້ອມອັນຕະລາຍ: ເປີ້ນພູຊັນຫຼາຍກວ່າ 35 ອົງສາ, 30-50ແມັດໃນເຂດກັນຊົນຕາມຣິມຕາຝັ່ງແມ່ນ້ຳແລະຫ້ວຍ (ບໍ່ລວມການຂຸດຄົ້ນໄມ້ທ່ອນຢູ່ໃນບັນດາເຂດປ່າຜະລິດ ອີງຕາມກົດລະບຽບ.[58]) (ຮູບ20).

ພື້ນທີ່ຂຸດຄົ້ນໄມ້ທ່ອນທັງໝົດແມ່ນຕັ້ງຢູ່ໜຶ່ງໃນບັນດາເຂດປ່າຜະລິດ (ພູຕາລະວາ)(ຮູບ21), ເຊິ່ງລັດຖະບານໄດ້ໂຈະການອະນຸມັດໂຄຕ້າຂຸດຄົ້ນໄມ້ກ່ອນການວາງແຜນການຄຸ້ມຄອງສຳເລັດ. ການຂຸດຄົ້ນໄມ້ແບບຄັດເລືອກຂະໜາດໃຫຍ່ໃນຂໍ້ອ້າງຂອງການບຸກເບີກທີ່ດິນ (ແຕ່ໃນຄວາມຈິງຂຸດຄົ້ນໄມ້

ຊະນິດທີ່ມີມູນຄ່າສູງຫຼາຍກວ່າ) ໄດ້ນໍາໄປສູ່ການເສື່ອມລາຄາຂອງເຂດປ່າຜະລິດທີ່ເປັນແຫຼ່ງໄມ້ທ່ອນໃນອະນາຄົດ.

ຫ້ອງການກະສິກໍາ ແລະປ່າໄມ້ແຂວງ (PAFO)ແລະຫ້ອງການກວດກາປ່າໄມ້ແຂວງ(POFI)ບໍ່ກວດສອບການລະເມີດຂໍ້ກໍານົດໃດໆໃນລະຫວ່າງການຂຸດຄົ້ນໄມ້ທ່ອນ. ອີງຕາມການຕັດສິນໃຈຂອງຄະນະກໍາມະການປະກອບດ້ວຍຜູ້ຕາງໜ້າຂອງຫ້ອງການກະສິກໍາ ແລະປ່າໄມ້ແຂວງ, ຫ້ອງການກະສິກໍາ ແລະປ່າໄມ້ເມືອງ, ຫ້ອງການອຸດສາຫະກໍາ ແລະການຄ້າແຂວງ,ພະແນກຄຸ້ມຄອງຊັບສິນລັດແລະພະແນກການເງິນແຂວງ ໄມ້ທ່ອນທີ່ຂຸດຄົ້ນທັງໝົດຖືກຈົດທະບຽນຢູ່ໃນສະໜາມ II ແລະຖືກສົ່ງໄປໃຫ້ກັບຜູ້ຊື້ - ໂຮງເລື່ອຍຮົມຊະນະໄຊ (ຮູບ22). ໃນເດືອນທັນວາ ປີ2014 ຫ້ອງການກະສິກໍາ ແລະປ່າໄມ້ແຂວງ (PAFO)ໄດ້ອະນຸຍາດໃຫ້ໂຮງເລື່ອຍຮົມຊະນະໄຊສົ່ງອອກຜະລິດຕະພັນໄມ້ທີ່ເຮັດຈາກໄມ້ເຫຼົ່ານີ້ໄປປະເທດໄທແລະຈີນ.




ຮູບ20.ການຂຸດຄົ້ນໄມ້ຕາມເຂດປ່າຍອດນ້ຳຫ້ວຍປູນ.




ຮູບ21.ປ້າຍທີ່ມີແຜນທີ່ເຂດປ່າຜະລິດແຫ່ງຊາດພູຕາລະວາຕັ້ງຢູ່ຂ້າງທາງເລກທີ15B.





ຮູບ12. ໄມ້ທ່ອນຢູ່ທີ່ສະໜາມ II ມີເຄື່ອງໝາຍ "ຄ້ອນຕີກາປ່ອຍໄມ້" (ປມ) ຂອງຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFOສາລະວັນ)ສຳລັບການຂົນສົ່ງພາຍໃນປະເທດ.
ຕົວຢ່າງຂອງໃບອະນຸຍາດສຳລັບການຂົນສົ່ງໄມ້ (ຂວາມື).

### ກໍລະນີສຶກສາທີ2: ການບຸກເບີກເສັ້ນທາງບ້ານຜານອນ-ບ້ານທົ່ງສາ (ແຂວງເຊກອງ)

ໂຄຕ້າຂຸດຄົ້ນໄມ້ "ທົດລອງ"ຄັ້ງທີສອງໄດ້ອະນຸມັດໃຫ້ໂຄງການກໍ່ສ້າງເສັ້ນທາງຈາກເມືອງກະລຶມ,ແຂວງເຊກອງ ຫາ ເມືອງຕະໂອ້ຍ, ແຂວງສາລະວັນ (ທາງຈາກບ້ານຜານອນ-ບ້ານທົ່ງສາ) ຄວາມຍາວຂອງໂຄງການແມ່ນ101 ກິໂລແມັດ. ການຂຸດຄົ້ນໄມ້ຄວນດຳເນີນຢູ່ພາຍໃນເຂດ25 ແມັດຈາກໃຈກາງເສັ້ນທາງທັງສອງດ້ານ (ສະແດງໃຫ້ເຫັນຢ່າງຊັດເຈນໃນການຕັດສິນໃຈຂອງເຈົ້າແຂວງກ່ຽວກັບການສຳຫຼວດຂຶ້ນບັນຊີໄມ້,ແລະການອະນຸຍາດຂຸດຄົ້ນໄມ້). ເສັ້ນທາງທີ່ອອກແບບອາດຕັ້ງຢູ່ໂດຍອີງໃສ່ເອກະສານແຜນທີ່ດັ່ງຕໍ່ໄປນີ້:

1. ໂຄງການສ້າງຂຶ້ນໂດຍອີງໃສ່ພູມີປະເທດໃນອັດຕາສ່ວນ 1: 220,000 ເຊິ່ງຕິດຄັດກັບຊຸດເອກະສານທີ່ອະນຸຍາດ. ອີງຕາມໂຄງການນີ້ເສັ້ນທາງດັ່ງກ່າວຖືກສ້າງຂຶ້ນໃນເຂດນອກເສັ້ນທາງເກືອບທັງໝົດ, ຈາກຮອຍຂູດເກືອບຢູ່ໃນເຂດປ່າສະຫງວນແຫ່ງຊາດ(ເຊກອງ-ເຊຂະໜານ) ແລະເຂດປ່າສະຫງວນເຊຊັບ (ຮູບ23).
2. ການແຕ້ມເຄົ້າໂຄງແບບຫຍາບໆຂອງເສັ້ນທາງພ້ອມຈຸດອ້າງອີງທາງພູມິສາດ11ຈຸດ ໂດຍບໍ່ອີງໃສ່ພູມີປະເທດ (ຮູບ24). ຮູບຮ່າງຂອງເສັ້ນທາງໃນໂຄງຮ່າງເບິ່ງສອດຄ່ອງກັບໂຄງການທຳອິດສຳລັບການຍົກເວັ້ນຕອນປາຍຂອງເສັ້ນທາງໃນທິດຕາເວັນຕົກ (ຮູບ25).
3. ເສັ້ນທາງໂດຍອີງໃສ່ພາບຖ່າຍທາງດາວທຽມຂອງກູໂກໂລກ ເຊິ່ງສະໜອງໃຫ້ໂດຍພະແນກໂຍທາທິການແລະການຂົນສົ່ງ (DPWT), ແຂວງເຊກອງ (ຮູບ26). ເຫັນໄດ້ຢ່າງຊັດເຈນວ່າສະຖານທີ່ຕັ້ງຂອງເສັ້ນທາງແມ່ນແຕກຕ່າງຈາກຮູບເດີມທີ່ຜ່ານມາດັ່ງທີ່ພວກເຮົາເຫັນຢູ່ໃນຮູບພາບທີ່ລວມເຂົ້າກັນ (ຮູບ27). ຕອນປາຍຂອງເສັ້ນທາງໃນທິດຕາເວັນອອກຕັ້ງຢູ່ໃກ້ກັບບ້ານກະສານ, ຢ່າງໃດກໍຕາມຕາມສັນຍາລັກໃນແຜນທີ່ແມ່ນ "ບ້ານຜານອນ". ຄວາມຈິງແລ້ວບ້ານດັ່ງກ່າວນີ້ຫ່າງອອກໄປອີກ19 ກິໂລແມັດທາງທິດຕາເວັນຕົກສຽງໃຕ້.



ຮູບ23. ໂຄງການກໍ່ສ້າງເສັ້ນທາງບ້ານຜານອນ-ບ້ານທົ່ງສາໂດຍອີງໃສ່ພູມິປະເທດ.




ຮູບ24.ຮູບຮ່າງຂອງເສັ້ນທາງບ້ານຜານອນ-

ບ້ານທົ່ງສາພ້ອມຈຸດອ້າງອີງທາງພູມິສາດໂດຍບໍ່ອີງໃສ່ພູມິປະເທດ.




ຮູບ25.ທີ່ຕັ້ງຂອງຈຸດອ້າງອີງທາງພູມີສາດ ("ຈຸດເຄື່ອງໝາຍທາງຜານອນທາທົ່ງສາ") ສົມທຽບກັບເສັ້ນທາງຈາກໂຄງການທີ່ໜຶ່ງ(ເສັ້ນສີຟ້າ). ເສັ້ນສີແດງສະແດງເຖິງເສັ້ນທາງທີ່ສຳເລັດແລ້ວ.




ຮູບ26. ເສັ້ນທາງໂດຍອີງໃສ່ພາບຖ່າຍທາງດາວທຽມຂອງກູໂກໂລກ(Google Earth)ໂດຍພະແນກໂຍທາທິການແລະຂົນສົ່ງແຂວງເຊກອງ.




**ຮູບ27.ການລວມເຂົ້າກັນລະຫວ່າງສອງໂຄງການກໍ່ສ້າງເສັ້ນທາງຈາກບ້ານຜານອນ-ບ້ານທົ່ງສາ. ສີເຫຼືອງແມ່ນຄວາມແຕກຕ່າງຂອງເສັ້ນທາງທີໜຶ່ງ,ສີແດງ – ທີສາມ (ສະໜອງໃຫ້ໂດຍພະແນກໂຍທາທິການ ແລະຂົນສົ່ງແຂວງເຊກອງ), ສີມ້ວງ – ເສັ້ນທາງທີ່ກໍ່ສ້າງ (ການບັນທຶກພາກສະໜາມຂອງພວກເຮົາ).**

ອີງຕາມຂໍ້ມູນທີ່ພວກເຮົາເກັບຮວບຮວມການຂຸດຄົ້ນໄມ້ໃນຮ່າງຂອງໂຄຕ້ານີ້ເລີ່ມກ່ອນເດືອນທັນວາ ປີ2012. ການສັງເກດພາກສະໜາມຈຳນວນຫຼາຍຄັ້ງໃນເດືອນມີນາ ປີ2014 ສະແດງໃຫ້ເຫັນວ່າເສັ້ນທາງໃໝ່ຖືກກໍ່ສ້າງແລ້ວ 20-25 ກະໂລແມັດຈາກຕອນປາຍໃນທິດຕາເວັນຕົກ (ຮູບ28). ເຫັນຢ່າງຊັດເຈນວ່າການກໍ່ສ້າງເສັ້ນທາງໃນການປະຕິບັດຕົວຈິງອອກແລວຢ່າງສິ້ນເຊີງຈາກຮູບເດີມທັງໝົດ.

ບໍ່ມີການເຊື່ອມໂຍງກັນລະຫວ່າງການກໍ່ສ້າງເສັ້ນທາງແລະໂຄງການ ຂອງພະແນກໂຍທາທິການແລະການຂົນສົ່ງ(DPWT)ແຂວງເຊກອງ. ຄວາມແຕກຕ່າງກັນລະຫວ່າງເສັ້ນທາງປັດຈຸບັນແລະເສັ້ນທາງສະແດງຢູ່ໃນສອງໂຄງການທຳອິດຂ້ອນຂ້າງສຳຄັນ. ສາມາດພິສູດໄດ້ວ່າໂຄງການເຫຼົ່ານີ້ສາມາດນຳໃຊ້ເປັນພຽງແຕ່ການອ້າງອີງ/ເຄົ້າໂຄງແບບຫຍາບໆສຳລັບຜູ້ກໍ່ສ້າງຈາກຄວາມຈິງທີ່ວ່າເສັ້ນທາງທີ່ກໍ່ສ້າງບໍ່ຜ່ານຈຸດອ້າງອີງພູມີສາດທີ່ສະແດງຢູ່ໃນໂຄງການທີສອງ. ແມ້ແຕ່ວ່າໃນກໍລະນີທີ່ດີທີ່ສຸດເສັ້ນທາງເຂົ້າມາໃກ້ກັບຈຸດເດີມໄກກວ່າ150 ແມັດ ("ຈຸດເຄື່ອງໝາຍເສັ້ນທາງຜານອນຫາທົ່ງສາ2").




ຮູບ28. ສົມທຽບເສັ້ນທາງທີ່ກໍ່ສ້າງ (ເນັ້ນໃນສີແດງ) ກັບສິ່ງທີ່ແຕກຕ່າງອອກໄປໃນໂຄງການທີໜຶ່ງ (ສີມ່ວງອ່ອນ) ແລະຈຸດອ້າງອີງພູມີສາດຈາກໂຄງການທີສອງ.

ຜູ້ຕາງໜ້າຂອງພະແນກໂຍທາທິການແລະການຂົນສົ່ງ(DPWT)ແຂວງເຊກອງຍອມຮັບວ່າການກໍ່ສ້າງເສັ້ນທາງດຳເນີນການອອກແລວຈາກໂຄງການທາງເດີມແລະການກໍ່ສ້າງເສັ້ນທາງໃໝ່ຖືກດຳເນີນໂດຍບໍ່ໄດ້ກະກຽມລ່ວງໜ້າ[59]. ອີງຕາມຄວາມຄິດເຫັນຂອງຜູ້ທີ່ຮູ້ ການປະຕິບັດດັ່ງກ່າວໃນປະເທດລາວບໍ່ແມ່ນການຍົກເວັ້ນແຕ່ແມ່ນຫຼັກການ. ການຂາດວິສະວະກຳກໍ່ສ້າງເສັ້ນທາງທີ່ດີສົ່ງຜົນໃຫ້ໂຄງການຈຳນວນຫຼາຍບໍ່ສຳເລັດ ເຊິ່ງສະທ້ອນໃຫ້ເຫັນເຖິງຂະບວນການຄັດເລືອກເສັ້ນທາງຢູ່ກັບພາກສະໜາມໃນຂະນະທີ່ການກໍ່ສ້າງກຳລັງດຳເນີນຢູ່.

ເຫັນຢ່າງຊັດເຈນວ່າສຳລັບການຂາດວິສະວະກຳເສັ້ນທາງແລະການກໍ່ສ້າງການສຳຫຼວດເພື່ອຂຶ້ນບັນຊີໄມ້ໃນພາກສະໜາມບໍ່ມີຄວາມໝາຍໃນຂະນະທີ່ການຄາດຄະເນຂອງບໍລິມາດການຂຸດຄົ້ນ ແລະສ່ວນປະກອບຂອງຊະນິດກຳນົດໂດຍກຸ່ມຄົນທີ່ບໍ່ຢູ່ພາກສະໜາມ ສະນັ້ນການປະຕິບັດວຽກຈິ່ງມີຄວາມແນ່ນອນທີ່ຕ່ຳ.

ເພື່ອໃຫ້ສອດຄ່ອງກັບລະບຽບສຳລັບການສຳຫຼວດຂຶ້ນບັນຊີໄມ້ການວັດແທກໄມ້ທ່ອນຕ້ອງປະຕິບັດຕາມເສັ້ນທາງທີ່ອອກແບບໂດຍ ພະແນກໂຍທາທິການ ແລະການຂົນສົ່ງ(DPWT)ຢູ່ໃນຂອບເຂດ 25 ແມັດຈາກໃຈກາງເສັ້ນທາງທັງສອງດ້ານ[60]. ການສຳຫຼວດດັ່ງກ່າວດຳເນີນການໂດຍພະນັກງານທີ່ຖືກແຕ່ງຕັ້ງຈຳນວນ6ທ່ານ (ລວມມີ. ຫ້ອງການກະສິກຳ ແລະປ່າໄມ້ແຂວງ ແລະເມືອງ,ພະແນກໂຍທາທິການ ແລະການຂົນສົ່ງ,ຂະແໜງໂຍທາທິການເມືອງ,ຜູ້ຕາງໜ້າຂອງບໍລິສັດກໍ່ສ້າງ). ໄລຍະເວລາຂອງການສຳຫຼວດດັ່ງກ່າວຈຳກັດຢູ່ໃນ15ມື້ນັບຈາກວັນທີ 19 ເດືອນທັນວາປີ2011ຮອດວັນທີ2ເດືອນມັງກອນປີ2012. ຕາມການລາຍງານເປັນທາງການການສຳຫຼວດຕົວຈິງໄດ້ປະຕິບັດພຽງແຕ່ 13 ມື້ຈາກວັນທີ18 ເຖິງວັນທີ30 ເດືອນທັນວາ ປີ2011[61]. ຈຳນວນໂດຍລວມຂອງຕົ້ນໄມ້ທີ່ບັນທຶກແມ່ນ10.638 ຕົ້ນ ໃນນັ້ນມີ 9 ຊະນິດ ແລະບໍລິມາດໂດຍລວມແມ່ນ19,120.856 ແມັດກ້ອນ (ຕາຕະລາງ 7).

**ຕາຕະລາງ7.ສະຫຼຸບຜົນຂອງການສຳຫຼວດຂຶ້ນບັນຊີໄມ້ສຳລັບໂຄງການກໍ່ສ້າງເສັ້ນທາງ.**

| ລຳດັບ | ຊະນິດໄມ້ (ຊື່ທ້ອງຖິ່ນລາວ) | ຊະນິດໄມ້ (ຊື່ພາສາລາຕິນ) | ຈຳນວນໄມ້ | ບໍລິມາດ ແມັດກ້ອນ |
|---|---|---|---|---|
| 1 | ໄມ້ແປກ | Pinus spp. | 3,934 | 7,125.576 |
| 2 | ໄມ້ສາຄາຍ | Betula alnoides | 3,427 | 5,196.000 |
| 3 | ໄມ້ກົ່ງ (ຮົງ) | Keteleeria evelyniana | 418 | 804.604 |
| 4 | ໄມ້ແຕກ | Prunus arborea (Pygeum arboreum) | 1,284 | 2,205.199 |

| | | | | |
|---|---|---|---|---|
| 5 | ໄມ້ໂລງເລັງ | Fokienia hodginsii | 50 | 88.956 |
| 6 | ໄມ້ບາກ | Anisoptera costata | 303 | 1,179.315 |
| 7 | ໄມ້ຍາງ | Dipterocarpus spp. | 387 | 1,532.208 |
| 8 | ໄມ້ແດງ | Xylia xylocarpa | 438 | 524.681 |
| 9 | ໄມ້ດູ່ | Pterocarpus pedatus | 397 | 464.317 |
| | ລວມ | | 10,638 | 19,120.856 |

ມີຂໍ້ສົງໄສຫຼາຍຢ່າງວ່າຕົວເລກເຫຼົ່ານີ້ໄດ້ມາໃນລະຫວ່າງການລົງສຳຫຼວດພາກສະໜາມຕົວຈິງ ຫຼືບໍ່. ກ່ອນອື່ນ, ຈາກທັດສະນະທາງປະຕິບັດແລ້ວ ເປັນໄປບໍ່ໄດ້ທີ່ຈະສຳເລັດການສຳຫຼວດຂຶ້ນບັນຊີໄມ້ໃນເສັ້ນທາງທີ່ມີຄວາມຍາວ101ກິໂລແມັດເນື້ອທີ່505 ເຮັກຕາມີພຽງແຕ່ 6ທ່ານພາຍໃນ 13 ມື້. ແຕ່ລະທ່ານຕ້ອງຮັບຜິດຊອບວຽກປະຈຳວັນມີປະມານ1364 ຕົ້ນໄມ້ຕໍ່ຄົນ. ໃນເວລາດຽວກັນໜ້າວຽກຮັບຜິດຊອບປະຈຳວັນຂອງນັກສຳຫຼວດແຕ່ລະຄົນ ໃນກໍລະນີຂອງ ໂຄງການສຳປະທານຂຸດຄົ້ນຫີນປູນໃນແຂວງສາລະວັນມີພຽງແຕ່ 4.3 ຕົ້ນ (ຕາຕະລາງ 8). ມີພຽງແຕ່ 9 ຊະນິດໄມ້ (ທີ່ມີມູນຄ່າດ້ານພານິດ) ເປັນລາຍການໃນບັນດາຜົນຂອງການສຳຫຼວດນີ້, ເຊິ່ງເຫັນຢ່າງຊັດເຈນວ່າມີຈຳນວນໜ້ອຍກວ່າຊະນິດທີ່ຄົງຂະຫຍາຍຕົວໃນພື້ນທີ່ຂອງການກໍ່ ສ້າງເສັ້ນທາງດັ່ງກ່າວແລະຕ້ອງຖືກຂຶ້ນບັນຊີເຊັ່ນກັນ. ນອກຈາກນັ້ນ, ຫ້ອງການກະສິກຳ ແລະປ່າໄມ້ເມືອງ ແລະແຂວງບໍ່ສາມາດສະໜອງຂໍ້ມູນທາງທິດສະດີ (ບັນຊີຂອງຕົ້ນໄມ້ທີ່ວັດແທກ) ທີ່ ພວກເຂົາເຈົ້ານຳໃຊ້ເປັນຖານໃນການຄຳນວນຂັ້ນສຸດທ້າຍ. ພະນັກງານຂອງໜ່ວຍງານເຫຼົ່ານີ້ບໍ່ສາ ມາດຊອກຫາທີ່ຕັ້ງຂອງເສັ້ນທາງໃນພາກສະໜາມໄດ້ເຊັ່ນດຽວກັນ.

ການສົມທຽບລະຫວ່າງການສຳຫຼວດຂຶ້ນບັນຊີໄມ້ສຳລັບໂຄງການຂຸດຄົ້ນຫີນປູນມີ53ຊະນິດທີ່ຖືກນັບ. ຜົນ ຂອງການສຳຫຼວດດັ່ງກ່າວແມ່ນອີງໃສ່ລາຍການຂອງຕົ້ນໄມ້ທີ່ວັດແທກ. ສຳລັບຕົ້ນໄມ້ ບາງຊະນິດຖືກລະບຸລາຍລະອຽດໂດຍຈຸດພິກັດຂອງເຄື່ອງຈີພີເອສ(GPS). ຕົ້ນໄມ້ທີ່ໝາຍສາມາດ ພົບເຫັນໃນພື້ນທີ່ນັ້ນ. ຍິ່ງໄປກວ່ານັ້ນການສຳປະທານຂອງໂຄງການຂຸດຄົ້ນຫີນປູນມີພື້ນທີ່ໜ້ອຍກວ່າ ແລະຕັ້ງຢູ່ໃນພື້ນທີ່ດຽວກັບເຄືອຂ່າຍເສັ້ນທາງດິນແດງ, ໃກ້ເສັ້ນທາງປູຢາງເລກທີ15 ປະມານ 3 ກິໂລ ແມັດ, ເຊິ່ງຫຼຸດຜ່ອນບັນຫາຂອງການຂົນສົ່ງລົງ. ໃນທາງກົງກັນຂ້າມລະຫວ່າງການສຳຫຼວດເສັ້ນທາງ ບ້ານຜານອນ ຫາ ບ້ານທົ່ງສາ ການສຳຫຼວດຂຶ້ນບັນຊີໄມ້ດັ່ງກ່າວທີມສຳຫຼວດຕ້ອງເຮັດວຽກຢູ່ ນອກເຂດເສັ້ນທາງແລະເປັນພື້ນທີ່ຊັນ.

**ຕາຕະລາງ8. ການສົມທຽບຜົນສຳຫຼວດຂຶ້ນບັນຊີໄມ້ໃນເສັ້ນທາງບ້ານຜານອນ ຫາ ບ້ານທົ່ງສາ ແລະ ໂຄງການສຳປະທານຂຸດຄົ້ນຫີນປູນ.**

| | ທາງ<br>ບ້ານຜານອນ-ບ້ານທົ່ງສາ | ໂຄງການຫີນປູນ |
|---|---|---|
| ເຂດສຳປະທານ, ເຮັກຕາ | 505 (100 ກິໂລແມັດ x 0,05 ກິໂລແມັດ) | 500 ຫຼື 504 |
| ຈຳນວນນັກສຳຫຼວດ | 6 | 18 |
| ຈຳນວນມື້ / ຄົນ (ຜູ້ສຳຫຼວດ) ມື້ | 13 / 78 | 21 / 378 |
| ເຂດສຳຫຼວດ, ເຮັກຕ້າ | 505 | 233 |
| ຈຳນວນຕົ້ນໄມ້ / ຊະນິດທີ່ບັນທຶກ | 10,638 / 9 | 1,622 / 53 |
| ບໍລິມາດສະເລ່ຍຂອງຕົ້ນໄມ້, ແມັດກ້ອນ | 1.797 | 1,793 |
| ບໍລິມາດ, ແມັດກ້ອນ | 19,120.856 | 2,908.1984 |
| ຕົ້ນໄມ້ຕໍ່ເຮັກຕ້າ/ ແມັດກ້ອນຕໍ່ເຮັກຕ້າ | 21 / 37.86 | 7 / 12.5 |
| ຕົ້ນໄມ້ຕໍ່ຄົນຕໍ່ມື້ | 136.4 | 4.3 |

ໂດຍກາງປີ2014ການກໍ່ສ້າງເສັ້ນທາງດຳເນີນການພຽງຈາກທິດຕາເວັນຕົກທີ່ໝາຍເປັນເຂດພື້ນທີ່ໃກ້ກັບບ້ານທົ່ງສາໃນໂຄງການດັ່ງກ່າວ. ພວກເຮົາບໍ່ເຫັນຮ່ອງຮອຍຂອງການຂຸດຄົ້ນໄມ້ທ່ອນຕາມແຄມທາງ: ສຳລັບການບຸກເບີກ ຫຼືການຂຸດຄົ້ນ. ຄົງກ່ຽວຂ້ອງກັບຄຸນນະພາບຂອງປ່າໄມ້ ເນື່ອງຈາກວ່າເປັນປ່າທີ່ຖືກທຳລາຍຈາກການເຮັດໄຮ່ເລື່ອນລອຍເກືອບທັງໝົດແລະເປັນປ່າໄມ້ປະເພດປ່າເຫລົ່າແລະໄມ້ໄຜ່ອ່ອນ. ເພາະສະນັ້ນ ບໍລິເວນນີ້ບໍ່ມີໄມ້ທ່ອນທີ່ມີມູນຄ່າທາງດ້ານພານິດທີ່ເປັນຕາໜ້າສົນໃຈ (ຮູບ29).



**ຮູບ29. ເສັ້ນທາງກຳລັງກໍ່ສ້າງ (ພາຍໃນເຂດປ່າສະຫງວນເຊຊັບ) ທີ່ມີປ່າເລົ່າແລະໄມ້ໄຜ່ອ່ອນໂດຍບໍ່ມີໄມ້ພານິດຢູ່ທັງສອງຂ້າງທາງ.**

ເຂດຂຸດຄົ້ນໄມ້ທີ່ກວດພົບຕັ້ງຢູ່ໃນພື້ນທີ່ໃກ້ກັບບ້ານຜານອນເຊິ່ງຕອນປາຍຂອງເສັ້ນທາງທິດຕາເວັນອອກ ຖືກອອກແບບໃຫ້ສອດຄ່ອງກັບໂຄງການ.
ຢ່າງໃດກໍຕາມໃນເວລາລົງກວດກາວຽກກໍ່ສ້າງເສັ້ນທາງບໍ່ມີການດຳເນີນການ.
ບໍລິເວນໃກ້ບ້ານຜານອນເປັນທີ່ດຶງດູດສຳລັບການຂຸດຄົ້ນໄມ້ດ້ານພາບິດຍ້ອນວ່າເມື່ອທຽບກັນແລ້ວມີປ່າໄມ້ຄຸນນະພາບດີທີ່ມີການລົບກວນຕ່ຳຍັງເຫຼືອຢູ່ໃນບໍລິເວນນີ້ (ອາດເປັນຜົນມາຈາກຄວາມໜາແໜ້ນຂອງປະຊາກອນທີ່ຕ່ຳແລະເປັນພື້ນທີ່ເຂົ້າເຖິງບໍ່ໄດ້). ຍິ່ງໄປກວ່ານັ້ນ ການເປີດຈຸດກວດກາດ່ານຊາຍແດນໃໝ່ ກະລຶມ - ໄຕຢາງ ໃນວັນທີ 25 ເດືອນເມສາ ປີ2013 ມີພຽງ7 ກິໂລແມັດເທົ່ານັ້ນຈາກບ້ານຜານອນ (15 ກິໂລແມັດໂດຍເສັ້ນທາງດິນແດງ) ເຮັດໃຫ້ການຜ່ານຊາຍແດນຖືກຕ້ອງຕາມກົດໝາຍ, ລວມທັງການຂົນສົ່ງໄມ້ຈາກລາວ (ຮູບ30).



**ຮູບ30. ດ່ານຊາຍແດນ ກະລຶມ-ໄຕຢາງ**

ໃນເບື້ອງຫວຽດນາມຈຸດກວດການີ້ຕັ້ງຢູ່ໃນພື້ນທີ່ຂອງເມືອງໄຕຢາງ ແຂວງກວາງນາມ ແລະເຊື່ອມຕໍ່ໂດຍເສັ້ນທາງ ພຽງ 66 ກິໂລແມັດ (ສ່ວນໃຫຍ່ເປັນທາງດິນແດງ) ກັບທາງຫຼວງໂຮ່ຈິມິນ. ອີງຕາມການສຳພາດຂອງປະຊາຊົນຫວຽດນາມການຕັດສິນໃຈກ່ຽວກັບການເປີດຈຸດກວດກາໃໝ່ເກີດຂຶ້ນໂດຍລັດຖະບານຕາມການຮຽກຮ້ອງເພື່ອຂົນສົ່ງໄມ້ທ່ອນທີ່ຂຸດຄົ້ນຢູ່ໃນປະເທດລາວພາຍໃຕ້ໂຄຕ້າສຳລັບການກໍ່ສ້າງເສັ້ນທາງຈາກບ້ານຜານອນ ຫາ ບ້ານທົ່ງສາ.

ອີງຕາມການສຳພາດຢູ່ເບື້ອງລາວການຂຸດຄົ້ນໄມ້ໄດ້ເລີ່ມຕົ້ນໃນເດືອນທັນວາ ປີ2012. ຜູ້ຕາງໜ້າຂອງບໍລິສັດນຳເຂົ້າຫວຽດນາມບໍລິສັດມິນຮ່າຮ່າໂນ້ຍ ຈຳກັດຍັງຢືນຢັນວ່າການຂຸດຄົ້ນໄມ້ເລີ່ມຂຶ້ນໃນຕົ້ນປີ2012[62]. ການສັງເກດການພາກສະໜາມຂອງພວກເຮົາໃນການກັບມາຂອງພວກເຂົາເຈົ້າໄດ້ຢືນຢັນວ່າການຂຸດຄົ້ນໄມ້ໄດ້ເລີ່ມຕົ້ນກ່ອນກາງເດືອນມັງກອນ ປີ2013.

ເນື່ອງຈາກວ່າຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO)ເຊກອງໄດ້ສະໜອງລາຍການໄມ້ໃຫ້ແກ່ພວກເຮົາ ເຊິ່ງມີພຽງສຳລັບປີ 2014 ພວກເຮົາສາມາດປະເມີນບໍລິມາດຂອງໄມ້ທ່ອນທີ່ມີເອກະສານເປັນທາງການໃນລະດູການ 2012-2013 ພຽງຈາກແຫຼ່ງຂໍ້ມູນລອງເທົ່ານັ້ນ:

- ສັນຍາໃນການຊື້ຂາຍລະຫວ່າງຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC) ເຊກອງແລະຜູ້ຊື້ບໍລິສັດເກດທິໄຊ (1,411.530 ແມັດກ້ອນ);
- ອະນຸຍາດການສົ່ງອອກອະນຸມັດ ໃຫ້ບໍລິສັດເກດທິໄຊໂດຍຫ້ອງການອຸດສາຫະກຳແລະການຄ້າແຂວງ(POIC) ເຊກອງ(1,725.729 ແມັດກ້ອນ);
- ຄວາມແຕກຕ່າງລະຫວ່າງຂະໜາດໂຄຕ້າໂດຍລວມແລະບໍລິມາດທີ່ອະນຸຍາດສຳລັບໂຄຕ້າໃນລະດູການຂຸດຄົ້ນໄມ້2013-2014ອີງຕາມການອະນຸຍາດຂຸດຄົ້ນໄມ້ອອກໂດຍຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC)ໃນວັນທີ06.12.2013: 19,120.856 ແມັດກ້ອນ (ໂຄຕ້າໂດຍລວມ) - 17.394ແມັດກ້ອນ (ອະນຸຍາດສຳລັບປີ 2013-2014) = 1,726.856 ແມັດກ້ອນ.

ອີງຕາມລາຍການໄມ້3 ລາຍການຮອບຮວມໂດຍຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC) ເຊກອງໃນເດືອນພຶດສະພາ ປີ2014 ມີ 2,426.585 ແມັດກ້ອນຂອງໄມ້ທ່ອນທີ່ຂຸດຄົ້ນໃນຕອນທ້າຍຂອງລະດູການຂຸດຄົ້ນໄມ້ 2013-2014[63].

ສອງໃນລາຍການເຫຼົ່ານີ້ເຮັດຂຶ້ນສຳລັບສະໜາມII ໃນພື້ນທີ່ຂອງບ້ານຜານອນ (1,719.761 ແມັດກ້ອນ), ໃນຂະນະທີ່ລາຍການໄມ້ທີ່ສາມ - ສຳລັບສະໜາມII ໃນພື້ນທີ່ຂອງເມືອງດາກຈຶງ (706.824 ແມັດກ້ອນ) . ດັ່ງນັ້ນໂດຍກາງປີ 2014 ອີງຕາມຂໍ້ມູນເປັນທາງການຫຼາຍກວ່າ4,183 ແມັດກ້ອນຂອງໄມ້ທ່ອນຖືກຂຸດຄົ້ນພາຍໃຕ້ໂຄຕ້າດັ່ງກ່າວ, ລວມທັງໄມ້ທ່ອນຢ່າງໜ້ອຍ3,446 ແມັດກ້ອນໃນເຂດພື້ນທີ່ຂອງບ້ານຜານອນ. ຕາມທີ່ໄດ້ກ່າວມາຂ້າງເທິງເນື່ອງຈາກເຄືອຂ່າຍເສັ້ນທາງສະພາບບໍ່ດີ ໄມ້ທ່ອນທີ່ຂຸດຄົ້ນຢູ່ໃນພື້ນທີ່ຂອງບ້ານຜານອນສາມາດຂົນສົ່ງໄປພຽງຫວຽດນາມໂດຍຜ່ານດ່ານຊາຍແດນກະລືມ-ໄຕຢາງ. ໂດຍກາງປີ2014, ອີງຕາມດ່ານພາສີຫວຽດນາມບັນດາເອກກະສານຈາກເວລາເມື່ອເປີດຈຸດກວດກາໃໝ່ ບໍລິມາດຂອງໄມ້ທ່ອນທີ່ນຳເຂົ້າຄາດຄະເນຢູ່ທີ່ 6,750 ແມັດກ້ອນ (ຄື:ປະມານ 35% ຈາກບໍລິມາດໂຄຕ້າໂດຍລວມ) ທີ່ມີມູນຄ່າສັນຍາ 1,717,823 ໂດລາສະຫະລັດ (ຕາຕະລາງ 9).

**ບໍລິມາດນີ້ເກີນບໍລິມາດຂອງໄມ້ທ່ອນໂດຍລວມທີ່ຈົດທະບຽນຢ່າງເປັນທາງການໃນເບື້ອງລາວໂດຍ 96%.**

ຄວນເນັ້ນຕື່ມວ່າໂຄຕ້າໃນການກໍ່ສ້າງເສັ້ນທາງຈາກບ້ານຜານອນ ຫາ ບ້ານທົ່ງສາ ເປັນພຽງການອ້າງອີງດ້ານກົດໝາຍດຽວເທົ່ານັ້ນສໍາລັບການຂຸດຄົ້ນໄມ້ຢູ່ໃນພື້ນທີ່ຂອງຈຸດກວດກາ ໃນເບື້ອງລາວ. ປະຊາຊົນທີ່ໃຫ້ສໍາພາດຢູ່ເບື້ອງຫວຽດນາມກໍ່ຍັງອ້າງເຖິງໂຄຕ້າດັ່ງກ່າວທີ່ເປັນພຽງແຫຼ່ງດຽວເທົ່ານັ້ນທີ່ນໍາເຂົ້າໄມ້ທ່ອນ.

ເນື່ອງຈາກເຄືອຂ່າຍເສັ້ນທາງທີ່ດ້ອຍພັດທະນາໃນພາກຕາເວັນອອກຂອງແຂວງເຊກອງ, ບັນດາໄມ້ທ່ອນທີ່ຈົດທະບຽນຢູ່ສະໜາມII ໃນພື້ນທີ່ຂອງເມືອງດາກຈຶງ (706.824 ແມັດກ້ອນ) ບໍ່ສາມາດມາຈາກບ້ານຜານອນ ຫຼືເຂດອື່ນທີ່ຢູ່ໃກ້ກັບເສັ້ນທາງບ້ານຜານອນ ຫາ ບ້ານທົ່ງສາທີ່ວາງແຜນໄວ້. ບາງທີເອກະສານອະນຸຍາດສໍາລັບໂຄຕ້ານີ້ຖືກນໍາໃຊ້ເພື່ອເຮັດໃຫ້ໄມ້ທ່ອນທີ່ບໍ່ມີອະນຸຍາດຖືກຕ້ອງຕາມກົດໝາຍ. ກໍລະນີຄ້າຍຄືກັນໄດ້ກ່າວມາແລ້ວກ່ອນໜ້ານີ້ໂດຍພວກເຮົາໃນເດືອນພຶດສະພາ ຫາ ເດືອນມິຖຸນາ ປີ2013, ເມື່ອພະນັກງານຂອງບໍລິສັດດັ່ງກ່າວເປັນຜູ້ຮັບເໝົາຍ່ອຍສໍາລັບຂຸດຄົ້ນໄມ້ໃນໂຄງການກໍ່ສ້າງເສັ້ນທາງຈາກບ້ານຜານອນ ຫາ ບ້ານທົ່ງສາຖືກພົບເຫັນໂດຍນໍາໃຊ້ເຄື່ອງກົນຈັກໜັກໃນຂະນະທີ່ພວກເຂົາເຈົ້າພວມຄົ້ນຫາໄມ້ຢູ່ໃນເບື້ອງຕາເວັນອອກສຽງໃຕ້ຂອງເຂດປ່າສະຫງວນແຫ່ງຊາດເຊຊັບ - ມີໄລຍະຫ່າງຫຼາຍກວ່າ20 ກິໂລແມັດຈາກເຂດທີ່ໃກ້ທີ່ສຸດຂອງເສັ້ນທາງທີ່ກໍ່ສ້າງ. ເຂດພື້ນທີ່ນີ້ມີປະໂຫຍດຢ່າງບໍ່ຕ້ອງສົງໄສສໍາລັບການຂຸດຄົ້ນໄມ້ເນື່ອງຈາກວ່າມີອະນຸຍາດໃຫ້ຂົນສົ່ງໄມ້ທ່ອນໄປຫວຽດນາມໂດຍໃຊ້ເສັ້ນທາງທີ່ມີຄຸນນະພາບດີໂດຍຜ່ານດ່ານຊາຍແດນສາກົນທີ່ໃກ້ຄຽງ ຕາວາງ - ເອກດອດ. ໃນກໍລະນີດັ່ງກ່າວຜູ້ຕາງໜ້າຂອງຫ້ອງການຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມແຂວງ(PONRE)ເຊກອງແຈ້ງວ່າ ຜູ້ສໍາຫຼວດດັ່ງກ່າວມີເຈດຕະນາທີ່ຜິດຕໍ່ກົດໝາຍ.

**ດັ່ງນັ້ນຈຶ່ງຖືວ່າໄມ້ທ່ອນຢູ່ສະໜາມ II ໃນພື້ນທີ່ເມືອງດາກຈຶງ ບໍລິມາດຂອງໄມ້ທ່ອນໂດຍລວມມາຈາກແຫຼ່ງທີ່ບໍ່ຮູ້ຈັກມີ4,011 ແມັດກ້ອນ, ເຊັ່ນ: ຫຼາຍກວ່າບໍລິມາດຂອງໄມ້ທ່ອນຈາກແຫຼ່ງທີ່ຮູ້ຈັກແຕ່ໃນນາມເທົ່ານັ້ນ.**

ການສົ່ງອອກໄດ້ກັບມາດໍາເນີນການອີກໃນເດືອນມັງກອນປີ2015 ແລະອີງຕາມດ່ານພາສີຫວຽດນາມມີໄມ້ທ່ອນຕື່ມອີກ4,209 ແມັດກ້ອນຖືກຈັດສົ່ງຈາກປະເທດລາວໃນຕົ້ນເດືອນເມສາປີ2015 ໃນຂະນະທີ່ເຈົ້າໜ້າທີ່ລາວຢືນຢັນວ່າບໍ່ມີການຂຸດຄົ້ນໄມ້ໃນລະດູການ 2014-2015 ໃນຮ່າງຂອງໂຄຕ້າສໍາລັບການກໍ່ສ້າງເສັ້ນທາງແລະມີພຽງແຕ່ໄມ້ທ່ອນທີ່ເຫຼືອຈາກລະດູການທີ່ຜ່ານມາຖືກສົ່ງອອກເທົ່ານັ້ນ. ບໍລິມາດທັງໝົດນີ້ຖືກນໍາເຂົ້າໂດຍບໍລິສັດຫວຽດນາມບໍລິສັດດຽວ,ບໍລິສັດຮ່ວມລົງທຶນ ມີນຮ່າຈໍາກັດ, ບົນພື້ນຖານຂອງສັນຍາການຂາຍແລະການຈັດຊື້ກັບບໍລິສັດສົ່ງອອກລາວພຽງບໍລິສັດດຽວ - ໂຮງງານປຸງແຕ່ງໄມ້ ເຊກອງ (ເປັນບໍລິສັດຍ່ອຍຂອງບໍລິສັດຮ່ວມລົງທຶນ ມິນຮ່າຈໍາກັດໃນປະເທດລາວ).

ຕັ້ງແຕ່ຕົ້ນປີ 2015ມີບໍລິສັດຫວຽດນາມອີກບໍລິສັດໜຶ່ງ ບໍລິສັດລອກຖານ ຈໍາກັດໄດ້ຈັດສົ່ງໄມ້ທ່ອນປະມານ 300 ແມັດກ້ອນໂດຍຜ່ານດ່ານຊາຍແດນກະລຶມ - ໄຕຢາງ. ໄມ້ທ່ອນເຫຼົ່ານີ້ເກັບມ້ຽນໄວ້ຢູ່ໃນເບື້ອງ

ຫວຽດນາມໃນເຄີ່ນຂົນສົ່ງໄມ້ທ່ອນຕັ້ງຢູ່ໃກ້ກັບຊາຍແດນແລະລໍຖ້າສໍາລັບການເຈລະຈາກັບດ່ານພາສີສໍາເລັດ.

ສະຖານະການຂອງການສະໜອງວັດຖຸດິບໃຫ້ແກ່ວິສາຫະກິດນີ້ບໍ່ໝັ້ນຄົງເລີຍ ໃນຊ່ວງລະດູການ 2011/2012. ບໍລິມາດຂອງບັນດາວັດຖຸດິບທີ່ກວດກາໂດຍຫ້ອງການກວດກາປ່າໄມ້ແຂວງ(POFI) ໃນສອງໄລຍະໂຮງງານປຸງແຕ່ງໄມ້ໃນທີເມສັງທອງມີ2,086ແມັດກ້ອນ, ໃນຂະນະທີ່ 79% ຂອງ ບໍລິມາດນີ້ແມ່ນໄມ້ທ່ອນທີ່ຍຶດມາໄດ້ແລະວັດຖຸດິບທີ່ຍັງຄົງເຫຼືອຈາກລະດູການ2010-2011 (1,215.661ແລະ427,708 ແມັດກ້ອນ ຕາມຄວາມເໝາະສົມ). ໝາຍຄວາມວ່າການສະໜອງວັດຖຸດິບ ຈາກການຂຸດຄົ້ນຢ່າງເປັນທາງການມີພຽງແຕ່442.6 ແມັດກ້ອນ.



**ຮູບ48.**

**ໂຮງເລື່ອຍຂອງບໍລິສັດພອນສັກໃກ້ກັບບ້ານຕາແລວໃນເມືອງສາລະວັນໃນພາບຖ່າຍທີ່ມີຄວາມລະອຽດສູງ ຖ່າຍວັນທີ30 ເດືອນທັນວາ ປີ2013 (ຊ້າຍມື) ແລະ ວັນທີ05 ເດືອນມິຖຸນາ ປີ2014 (ຂວາມື). ທີ່ສະໜາມພັກໄມ້ ພວກເຮົາສາມາດເຫັນຢ່າງໜ້ອຍມີໄມ້ທ່ອນຫຼາຍພັນແມັດກ້ອນ.**



**ຮູບ49. ລົດບັນທຸກຊ່ວງຍາວບັນທຸກໄມ້ແປຮູບແລະໄມ້ທ່ອນ (ໄມ້ທັງໝົດຖືກອ້າງວ່າເປັນຂອງບໍລິສັດພອນສັກ) ກຳລັງເດີນທາງຈາກແຂວງສາລະວັນໄປຫວຽດນາມໃກ້ກັບດ່ານຊາຍແດນສາກົນຍາລາຍ ໃນເດືອນພະຈິກ ປີ2014. ອີງຕາມການສັງເກດການຈາກການບອກເລົ່າຂອງພວກເຮົາ ມີລະດັບການສົ່ງອອກໄມ້ທ່ອນຈຳນວນຄ້າຍຄືກັນຕາມເສັ້ນທາງນີ້ຕະຫຼອດປີ 2014 .**

ບໍລິສັດປຸງແຕ່ງໄມ້ວັນດາໃນເມືອງສາລະວັນຄືງແມ່ນໜຶ່ງໃນບັນດາບໍລິສັດປຸງແຕ່ງໄມ້ທີ່ໃຫຍ່ທີ່ສຸດໃນແຂວງ (ຮູບ50). ໂຮງງານດັ່ງກ່າວສ້າງຕັ້ງຂຶ້ນໃນປີ 2005 ໂດຍນັກລົງທຶນລາວ ທ່ານວັນດາດ້ວຍການລົງທຶນໂດຍລວມເປັນຈຳນວນເງິນ62,000 ລ້ານກີບ ຫຼືປະມານ 7.8 ລ້ານໂດລາສະຫະລັດ. ບໍລິສັດນີ້ຕົ້ນຕໍແມ່ນຜະລິດເຄື່ອງເຟີນີເຈີຈົນເຖິງປີ2008. ປະຈຸບັນສາມາດຜະລິດໄມ້ປາເກ້ ແລະແຜນໄມ້ຕ່າງໆ. ຄວາມສາມາດໃນການປຸງແຕ່ງຂອງບໍລິສັດນີ້ແມ່ນ 10,000 ແມັດກ້ອນຕໍ່ປີ. ອຸປະກອນການປຸງແຕ່ງແມ່ນມາຈາກໄຕ້ຫວັນ. ຜະລິດຕະພັນສົ່ງອອກໄປພາກໃຕ້ຂອງຫວຽດນາມ, ຍີ່ປຸ່ນ ແລະອາເມລິກາ.[87].



**ຮູບ50. ຕົວຢ່າງຂອງວັດຖຸດິບແລະຜະລິດຕະພັນສຳເລັດຮູບໃນບໍລິສັດປຸງແຕ່ງໄມ້ວັນດາ.ເທິງດ້ານຊ້າຍມື: ທ່ອນໄມ້ຊີດົງ (Vaticicinerea(?). ເທິງດ້ານຊ້າຍຂວາມື:ກອງໄມ້ຫຼຽມໄມ້ດູ່ (macrocarpusPterocar-pus).**

ອີງຕາມຫ້ອງການອຸດສາຫະກຳ ແລະການຄ້າແຂວງ (POIC)ໃນສົກປີ 2009-2010, ໂຮງງານໄດ້ປຸງແຕ່ງໄມ້ຫຼາຍກວ່າ158 ແມັດກ້ອນ ແລະສົ່ງອອກໄມ້ປາເກ້ ແລະໄມ້ແປຮູບເປັນມູນຄ່າຫຼາຍລ້ານໂດລາໃຫ້ແກ່ປະເທດໄທ, ຫວຽດນາມແລະຈີນ.[88].

ອີງຕາມຂໍ້ມູນສະໜອງໃຫ້ໂດຍຜູ້ຈັດການຂອງບໍລິສັດດັ່ງກ່າວ, ບໍລິມາດຂອງວັດຖຸດິບທີ່ສະໜອງໃຫ້ໃນປີ2009, 2010 ແລະ 2011 ປະກອບມີ2,500, 850 ແລະ 1,000 (?) ແມັດກ້ອນ ຕາມຄວາມເໝາະສົມ. ການຫັນປ່ຽນປ່າເປັນທີ່ດິນຈາກການບຸກເບີກພື້ນທີ່ຂຸດຄົ້ນບໍ່ແຮ່ແມ່ນໜຶ່ງໃນບັນດາແຫຼ່ງຂອງການສະໜອງວັດຖຸດິບ. ສຳລັບລະດູການ 2012-2013 ບໍລິສັດດັ່ງກ່າວໄດ້ນຳໃຊ້ວັດຖຸດິບ3,000 ແມັດກ້ອນ .ຖືກຍອມຮັບວ່າ ຈຳນວນໄມ້ທ່ອນທີ່ສະໜອງແມ່ນບໍ່ພຽງພໍສຳລັບຄວາມອາດສາມາດໃນການປຸງແຕ່ງຂອງໂຮງງານຢ່າງເຕັມທີ່. ເຊັ່ນດຽວກັນກັບກໍລະນີທີ່ຜ່ານມາຍາກທີ່ຈະອະທິບາຍກ່ຽວກັບການລົງທຶນ

ດ້ານການປຸງແຕ່ງໄມ້ທີ່ມີມູນຄ່າຫຼາຍລ້ານໂດລາໃນເງື່ອນໄຂອັນໂຫດຮ້າຍໃນປັດຈຸບັນຂອງການຂາດແຄນວັດຖຸດິບແລະບໍລິສັດສາມາດຜະລິດສິນຄ້າທີ່ມີມູນຄ່າສູງໄດ້ແນວໃດ.

ມາດຕາສ່ວນຂອງການຂົນສົ່ງວັດຖຸໄມ້ແປຮູບທີ່ເຝົ້າສັງເກດໂດຍພວກເຮົາໃນແຂວງສາລະວັນ ກໍ່ໃຫ້ເກີດມີຄໍາຖາມກ່ຽວກັບແຫຼ່ງທີ່ມາເພີ່ມຕື່ມ(ທີ່ຈົດທະບຽນເປັນທາງການ)ຂອງການສະໜອງວັດຖຸດິບໃຫ້ແກ່ບັນດາໂຮງເລື່ອຍຕ່າງໆ. ຕົວຢ່າງ, ໃນເດືອນມິຖຸນາ ປີ2013 ພາຍໃນໜຶ່ງຊົ່ວໂມງເທົ່ານັ້ນ ພວກເຮົາສັງເກດເຫັນມີລົດພ່ວງຈໍານວນ7 ຄັນມີປ້າຍທະບຽນລົດໄທຄົງມາຈາກໜຶ່ງໃນບັນດາໂຮງເລື່ອຍໃນເມືອງເລົ່າງາມ (ແຂວງສາລະວັນ) ເພື່ອໄປແຂວງຈໍາປາສັກ (ແລະຄົງເດີນທາງໄປປະເທດໄທຕໍ່) (ຮູບ51). ບໍລິມາດຂອງສິນຄ້າໄມ້ແປຮູບທີ່ຂົນສົ່ງ (ຢ່າງໜ້ອຍກວ່າ140 ແມັດກ້ອນ) ທຽບເທົ່າກັບ 280 ແມັດກ້ອນໃນສົມມູນຂອງໄມ້ໂດຍລວມ (RWE)- ເຊັ່ນ:15%ຂອງການສະໜອງວັດຖຸດິບປະຈໍາປີໂດຍສະເລ່ຍໃຫ້ແກ່ໂຮງງານປຸງແຕ່ງໄມ້ທີ່ໃຫຍ່ທີ່ສຸດໃນແຂວງສາລະວັນ.




**ຮູບ51. ລົດພ່ວງໄທບັນທຸກໄມ້ແປຮູບເຕັມຄັນລົດຈາກແຂວງສາລະວັນວັນທີ09ເດືອນກໍລະກົດ ປີ2013.**

ອີງຕາມຂໍ້ມູນຈາກຫ້ອງການອຸດສາຫະກໍາ ແລະການຄ້າແຂວງ(POIC)ເຊກອງໃນຕອນທ້າຍຂອງປີ2012ມີໂຮງເລື່ອຍ30 ແຫ່ງທີ່ຈົດທະບຽນແຕ່ມີພຽງ 12ແຫ່ງດໍາເນີນກິດຈະການ. ມີໂຮງງານເຟີນີເຈີຍັງເຄື່ອນໄຫວຢູ່ຈໍານວນ20 ແຫ່ງ (ຮູບ52).

ອີງຕາມການຄົ້ນຄວ້າເພື່ອເຂົ້າໃຈການໄຫຼວຽນແລະການຄວບຄຸມໄມ້ໃນສປປລາວ (2012) ບໍລິສັດປຸງແຕ່ງໄມ້ທີ່ຈົດທະບຽນເປັນທາງການ13ແຫ່ງທີ່ຄາດຄະເນວ່າມີຄວາມອາດສາມາດປຸງແຕ່ງວັດຖຸດິບ48,000 ແມັດກ້ອນຕໍ່ປີ ໄດ້ດໍາເນີນກິດຈະການຢູ່ໃນແຂວງເຊກອງ. ບໍລິມາດດັ່ງກ່າວປະກອບດ້ວຍ154% ຂອງການຂຸດຄົ້ນໄມ້ທີ່ຈົດທະບຽນເປັນທາງການທັງໝົດໃນແຂວງເຊກອງໃນລະດູການ2011-2012 (ຕາຕະລາງ 6).

ພວກເຮົາຄວນສັງເກດວ່າ 63% ຂອງໄມ້ທ່ອນຢູ່ໃນແຂວງນີ້ຖືກຂຸດຄົ້ນໂດຍບໍລິສັດພອນສັກໃນຮ່າງຂອງການອະນາໄມອ່າງເກັບນໍ້າສໍາລັບເຂື່ອນໄຟຟ້ານໍ້າຕົກເຊກອງ 4 ແລະການສໍາປະທານຂອງບໍລິສັດດັ່ງກ່າວໃນການສໍາຫຼວດແຮ່ຖ່ານຫີນແລະຂຸດຄົ້ນບໍ່ແຮ່. ໄມ້ທ່ອນເຫຼົ່ານີ້ຖືກຈັດຕຽມເພື່ອສົ່ງອອກໄປຫວຽດນາມແລະ

ໄປໂຮງງານປຸງແຕ່ງຂອງບໍລິສັດສັດພອນສັກໃນເມືອງທ່າແຂກ, ແຂວງຄໍາມ່ວນ. ຄໍານຶງເຖິງ **ແຫຼ່ງໄມ້ທ່ອນທີ່ຖືກຕ້ອງຕາມກົດໝາຍສາມາດສະໜອງໄດ້ພຽງແຕ່ 24% ຂອງຄວາມຕ້ອງການຂອງບັນດາໂຮງງານປຸງແຕ່ງໄມ້ໃນທ້ອງຖິ່ນ.**

ອີງຕາມຫ້ອງການອຸດສາຫະກໍາ ແລະການຄ້າແຂວງ (POIC)ໃນຊ່ວງລະດູການ2010-2011 ບໍລິສັດນີ້ຜະລິດສິນຄ້າໄດ້ 23,851 ແມັດກ້ອນ. ຍິ່ງໄປກວ່ານັ້ນ, ຂໍ້ມູນກ່ຽວກັບການນໍາເຂົ້າໄມ້ແປຮູບຈາກແຂວງເຊກອງໄປຫວຽດນາມໂດຍຜ່ານດ່ານຊາຍແດນສາກົນ ດາກຕາອອກ-ນໍ້າຍາງແລະການສົ່ງອອກຜະລິດຕະພັນສໍາເລັດຮູບຜ່ານດ່ານຊັ່ງນໍ້າໜັກໃນເມືອງທ່າແຕງ ໃນປີ 2011ສະແດງໃຫ້ເຫັນວ່າ ບັນດາບໍລິສັດປຸງແຕ່ງໄມ້ມີບໍລິມາດຂອງຜົນຜະລິດສູງກວ່າທີ່ສະແດງຢູ່ໃນຂໍ້ມູນຂອງຫ້ອງການອຸດສາຫະກໍາ
ແລະການຄ້າແຂວງ(POIC) - 32-34 ພັນແມັດກ້ອນ.

ໃນເວລາດຽວກັນ, ວັດຖຸດິບທີ່ສະໜອງເປັນທາງການໃນໄລຍະລະດູການນີ້ມີພຽງແຕ່ 15,874 ແມັດກ້ອນ .ນີ້ໜ້ອຍກວ່າ3-4ເທົ່າທີ່ຕ້ອງການສໍາລັບການຜະລິດຂອງຜົນຜະລິດທີ່ໄດ້ກ່າວມາຂ້າງເທິງນັ້ນ.

ບໍລິມາດຂອງວັດຖຸດິບດັ່ງກ່າວຫຼາຍກວ່າສອງເທົ່າເກີນການຂຸດຄົ້ນໄມ້ທີ່ຈົດທະບຽນຢ່າງເປັນທາງການໃນແຂວງສາລະວັນ ປີ2011-2012 (28.5 ພັນແມັດກ້ອນ), ເຊິ່ງມີ43% ຖືກຂຸດຄົ້ນໂດຍບໍລິສັດພອນສັກ (12.4 ພັນແມັດກ້ອນ). ດັ່ງນັ້ນ, ໃນລະດູການ2011-2012 ເຊັ່ນດຽວກັນ **ແຫຼ່ງໄມ້ທ່ອນທີ່ຖືກຕ້ອງຕາມກົດໝາຍໃນແຂວງນີ້ສາມາດສະໜອງພຽງແຕ່ໜຶ່ງໃນສີ່ສ່ວນຂອງໄມ້ວັດຖຸດິບທີ່ນໍາໃຊ້ໂດຍບັນດາໂຮງງານປຸງແຕ່ງໃນທ້ອງຖິ່ນປີ2010-2011.**



ຮູບ52. ດ້ານໜ້າພາກຕາເວັນອອກຂອງໂຮງງານປຸງແຕ່ງໄມ້ຢູ່ແຂວງເຊກອງ - **ຫ້ອງເຮັດເຟີນິເຈີ** (ນາຍຊ່າງທັດຖະກຳ5ຄົນ), ຕັ້ງຢູ່ພຽງ2 ກິໂລແມັດຫ່າງຈາກດ່ານຊາຍແດນສາກົນ ດາກຕາອອກ (ເມືອງດາກຈຶງ). ອີງຕາມເຈົ້າຂອງທີ່ເປັນຜູ້ຍິງຊາວຫວຽດນາມ, ເຄື່ອງເຟີນິເຈີແມ່ນຜະລິດຂຶ້ນຕາມການສັ່ງຊື້ເພື່ອນຳໄປຂາຍຕໍ່ໃນແຂວງເຊກອງ. ຢ່າງໃດກໍຕາມ, ຍັງມີບາງໂອກາດທີ່ສົ່ງອອກເຄື່ອງເຟີນິເຈີໄປຫວຽດນາມ. ອີງຕາມ**ຫ້ອງການກະສິກຳ ແລະປ່າໄມ້ເມືອງ (DAFO)**ດາກຈຶງ, **ຫ້ອງເຮັດເຟີນິເຈີນີ້,** ມີພຽງແຕ່ແຫ່ງດຽວໃນເມືອງ, **ນຳໃຊ້ໄມ້ທ່ອນທີ່ຂຸດຄົ້ນໂດຍຊາວກະສິກອນຕາມທົ່ງນາແລະບໍ່ມີໃບອະນຸຍາດສົ່ງອອກ.**

ພວກເຮົາກໍໄປຢ້ຽມຢາມໂຮງເລື່ອຍຂະໜາດໃຫຍ່ທີ່ຕັ້ງຢູ່ໃກ້ກັບສູນກາງການບໍລິຫານຂອງເມືອງດາກຈຶງ (ຮູບ 53). ອີງຕາມຂໍ້ມູນທີ່ສະໜອງໃຫ້ໂດຍຮອງຜູ້ອຳນວຍການດັ່ງກ່າວ, ໂຮງເລື່ອຍນີ້ສ້າງຕັ້ງຂຶ້ນໃນປີ 2006.ພວກເຮົາຄວນສັງເກດວ່າ ໃນປີດຽວກັນປະມານ 13 ກິໂລແມັດໄປທາງຕາເວັນອອກຈາກໂຮງເລື່ອຍດັ່ງກ່າວ(18 ກິໂລແມັດຫ່າງຈາກເສັ້ນທາງ) ດ່ານຊາຍແດນສາກົນດາກຕາອອກ - ນ້ຳຢາງໄດ້ເປີດໃຫ້ບໍລິການ. ນີ້ແມ່ນການສ້າງຂຶ້ນເພື່ອອ້າງອີງທາງດ້ານກົດໝາຍ ແລະເພື່ອເປັນການສົ່ງເສີມດ້ານເສດຖະກິດໃນການສົ່ງອອກໄມ້ທ່ອນໄປຫວຽດນາມຈາກພື້ນທີ່ຂອງແຂວງເຊກອງ. ການເປີດບໍລິການຂອງດ່ານຊາຍແດນສາກົນດັ່ງກ່າວແລະການສ້າງຂຶ້ນຂອງໂຮງ

ເລື່ອຍເກີດຂຶ້ນພ້ອມກັນ ຫຼືອາດກ່ຽວກັບການເລີ່ມກໍ່ສ້າງເຂື່ອນໄຟຟ້ານໍ້າຕົກເຊຂະໜານ 3 ໃກ້ກັບເມືອງດາກຈຶງໃນເດືອນເມສາປີ2006.

ມີບຸກຄະລາກອນຢູ່ໂຮງເລື່ອຍ 47ຄົນ,ເຊິ່ງ 46 ຄົນເປັນພົນລະເມືອງຂອງຫວຽດນາມແລະ 1 ຄົນ - ເປັນຄົນລາວ. ໄມ້ແປຮູບຖືກສົ່ງອອກໄປໃຫ້ວິສາຫະກິດຂອງບໍລິສັດດັ່ງກ່າວໃນແຂວງກົນຕົມ(Kon Tum)(ປະເທດຫວຽດນາມ) ທີ່ຜະລິດເຄື່ອງເຟີນີເຈີສໍາລັບພາຍໃນແລະພາຍນອກເພື່ອສະໜອງໃຫ້ຕະຫຼາດຫວຽດນາມແລະເພື່ອສົ່ງອອກໄປເອີຣົບແລະອິດສະຕາລີ.

ບໍລິມາດຂອງການສະໜອງໄມ້ທ່ອນ ໃນປີ2010, 2011 ແລະ2012 ປະກອບດ້ວຍ 2,200, 2,500 ແລະຫຼາຍກວ່າ2,000 ແມັດກ້ອນ ຕາມຄວາມເໝາະສົມ. ເຄິ່ງໜຶ່ງຂອງບໍລິມາດນີ້ຖືກຂຸດຄົ້ນໂດຍບໍລິສັດດັ່ງກ່າວ ແລະອີກເຄິ່ງທີ່ສອງແມ່ນມາຈາກການຈັດຊື້. ໜຶ່ງໃນແຫຼ່ງທີ່ມາຂອງວັດຖຸດິບຕົ້ນຕໍແມ່ນການຫັນປ່ຽນປ່າເປັນທີ່ດິນຈາກການກໍ່ສ້າງເສັ້ນທາງໃນເມືອງນີ້.

ໂຮງເລື່ອຍດັ່ງກ່າວມີເລື່ອຍທົກໃບຕາມລວງນອນເຊິ່ງມີຄວາມອາດສາມາດໃນການຜະລິດ50 ແມັດກ້ອນຕໍ່ມື້, ເຊັ່ນ: ສາມາດຜະລິດ15,000 ແມັດກ້ອນຕໍ່ປີໃນໄລຍະດໍາເນີນການ10 ເດືອນ.ມີເຕົາອົບ6 ເຕົາແຕ່ລະເຕົາສາມາດອົບໄດ້25 ແມັດກ້ອນ, ອົບໄມ້ 10ມື້ຕໍ່ໜຶ່ງຮອບ ແລະໄລຍະດໍາເນີນການ10 ເດືອນເຮັດໃຫ້ບໍລິສັດສາມາດຜະລິດໄມ້ແປຮູບແຫ້ງໄດ້ເຖິງ 4,500 ແມັດກ້ອນ.

ຍິ່ງໄປກວ່ານັ້ນ, ໃນລະຫວ່າງການລົງຢ້ຽມຢາມຂອງພວກເຮົາ ມີລົດລາກ 14ຄັນທີ່ຈອດຢູ່ເດີ່ນຂອງໂຮງເລື່ອຍດັ່ງກ່າວ, ເຊິ່ງໝາຍເຖິງຄວາມອາດສາມາດໃນການຂົນສົ່ງຢ່າງໜ້ອຍຂອງບໍລິສັດດັ່ງກ່າວແມ່ນ 30,000 ແມັດກ້ອນຕໍ່ປີ[a]. ເຊັ່ນ:ທາງວິຊາການຄວາມອາດສາມາດຂອງໂຮງງານດັ່ງກ່າວ ໃນກໍລະນີນີ້ກໍຍັງເກີນບໍລິມາດຂອງການສະໜອງວັດຖຸດິບເປັນທາງການຫຼາຍເທົ່າຕົວ.





---

[a]ສັນນິຖານວ່າ ລົດບັນທຸກແຕ່ລະຄັນແລ່ນໜຶ່ງຖ້ຽວຕໍ່ມື້ພ້ອມບັນທຸກໄມ້ທ່ອນ10 ແມັດກ້ອນພຽງໃນຊ່ວງລະດູແລ້ງເທົ່ານັ້ນຈາກເດືອນພະຈິກ ຮອດ ເດືອນພຶດສະພາ ລວມໝົດທຸກຢ່າງ. ຄວາມຈິງແລ້ວ ລົດລາກສາມາດບັນທຸກໄມ້ໄດ້100 ແມັດກ້ອນຕໍ່ມື້.

**ຮູບ53. ບັນດາລົດລາກແລະໄມ້ທ່ອນໃນໂຮງງານປຸງແຕ່ງໄມ້ເມືອງດາກຈຶງ. ອີງຕາມຜູ້ຕາງໜ້າຂອງບໍລິສັດດັ່ງກ່າວ ໄມ້ທ່ອນເຫຼົ່ານີ້ຖືກຂຸດຄົ້ນໃນໂຄຕ້າຂອງເມືອງສໍາລັບການກໍ່ສ້າງແລະຜະລິດເຟີນິເຈີສໍາລັບຕຶກອາຄານລາຊະການ. ເຄື່ອງໝາຍສໍຂາວຢູ່ສົ້ນໄມ້ທ່ອນ(ໄມ້ແດງນໍ້າ, Xylliadolabriformis) ສະແດງເຖິງຕົວເລກຈາກລາຍການໄມ້, ຈໍານວນທີ່ໃຫ້ໂຮງເລື່ອຍດັ່ງກ່າວແລະຄວາມຍາວຂອງໄມ້ທ່ອນ.**

ໃນພາກ "ການປະເມີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນທີ່ຜິດກົດໝາຍໃນກຸ່ມສີ່ແຂວງພາກໃຕ້" ພວກເຮົາໄດ້ສະໜອງຂໍ້ມູນທີ່ສະແດງເຖິງ ໄມ້ແປຮູບ 24,851 ແມັດກ້ອນຖືກສົ່ງອອກໂດຍຜ່ານດ່ານຊາຍແດນສາກົນ ດາກຕາອອກ-ນໍ້າຢາງໃນປີ2012. ການພັດທະນາຂອງເຄືອຂ່າຍເສັ້ນທາງທີ່ຕໍ່າເປັນຂໍ້ຈໍາກັດສໍາລັບການຫາປະໂຫຍດຈາກດ່ານຊາຍແດນນີ້ໃນການສົ່ງອອກຜະລິດຕະພັນໄມ້ທີ່ຂຸດຄົ້ນໃນພາກຕາເວັນອອກຂອງແຂວງເຊກອງ. ພວກເຮົາຮູ້ພຽງແຕ່ວ່າມີໂຮງເລື່ອຍສາມແຫ່ງໃນຂົງເຂດນີ້ (ລວມທັງວິສາຫະກິດໃຫຍ່ທີ່ສຸດໃນຕົວເມືອງດາກຈຶງທີ່ພວກເຮົາໄດ້ກ່າວມາຂ້າງເທິງ) ສາມາດຜະລິດໄມ້ແປຮູບເພື່ອສົ່ງອອກ. ເຫັນວ່າເພື່ອຜະລິດບໍລິມາດຂອງຜະລິດຕະພັນໄມ້ດັ່ງກ່າວ (ຢ່າງໜ້ອຍ50 ພັນແມັດກ້ອນ), ຈະຕ້ອງການວັດຖຸດິບເກີນບໍລິມາດຂອງວັດຖຸດິບທີ່ສະໜອງຈາກແຫຼ່ງທີ່ມາເປັນທາງການຢ່າງຫຼວງຫຼາຍ.

ບາງບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການປຸງແຕ່ງໄມ້ໃນແຂວງເຊກອງແລະແຂວງສາລະວັນໄດ້ກ່າວວ່າ ອຸດສາຫະກໍາດັ່ງກ່າວປະສົບກັບການຂາດແຄນຂອງວັດຖຸດິບຢ່າງໜັກໜ່ວງ ເຊິ່ງເປັນຊ່ວງວິກິດ ແລະຈົບວ່າມີການປິດກິດຈະການລົງຫຼາຍແຫ່ງ. ໂຮງເລື່ອຍທີ່ຍັງຢູ່ລອດຂຶ້ນກັບວ່າຂອງເຈົ້າຫຼືຜູ້ຈັດການມີອິດທິພົນພຽງພໍຫຼືບໍ່ທີ່ຈະໄດ້ຮັບໂຄຕ້າແລະຮູ້ກ່ຽວກັບພື້ນທີ່ຕ່າງໆທີ່
ມີໄມ້ທີ່ໜ້າສົນໃຈດ້ານພານິດຫຼົງເຫຼືອຢູ່. ໃນເວລາດຽວກັນການສັງເກດການຂອງພວກເຮົາເຮັດໃຫ້ບໍ່ສາມາດເຫັນດີກັບຄໍາຖະແຫຼງການກ່ຽວກັບວິກິດການຂາດແຄນວັດຖຸດິບທີ່ປະສົບໂດຍຂະແໜງປຸງແຕ່ງໄມ້. ການຢັ້ງມຢາມແຂວງເຊກອງ ແລະສາລະວັນ ໃນປີ2012-2014 ພວກເຮົາພົບວ່າ ຢ່າງໜ້ອຍ12 ບໍລິສັດຂະໜາດໃຫຍ່ແລະກາງມີວັດຖຸດິບເກັບມ້ຽນໄວ້ໃນສາງຢ່າງພຽງພໍ (ຮູບ54).





**ຮູບ54. ໂຮງເລື່ອຍໃນເມືອງລະໝາມ, ແຂວງເຊກອງ, 3 ກິໂລແມັດທາງທິດຕາເວັນຕົກຈາກບ້ານນ້ຳທິບຕາມເສັ້ນທາງເຊກອງ-ດາກຈຶງ ເລກທີ16B (12/05/2012). ຈຳນວນໄມ້ແປຮູບທີ່ຍັງໃໝ່ສະແດງວ່າໂຮງງານມີການສະໜອງວັດຖຸດິບຢ່າງຫຼວງຫຼາຍ, ເຖິງແມ່ນວ່າລະດູການຂຸດຄົ້ນໄມ້ເປັນທາງການຍັງຢູ່ໃນໄລຍະເລີ່ມຕົ້ນ[a].**

ຍິ່ງໄປກວ່ານັ້ນ, ກົງກັນຂ້າມກັບການສົ່ງອອກໄມ້ທ່ອນຈຳນວນຫຼວງຫຼາຍທີ່ເບິ່ງເຫັນໂດຍຕາເປົ່າໄປປະເທດຫວຽດນາມ. ເຫັນຢ່າງຊັດເຈນ, ບຸລິມະສິດເບື້ອງຕົ້ນແມ່ນການສະໜອງໄມ້ທ່ອນວັດຖຸດິບໃຫ້ແກ່ບັນດາບໍລິສັດຫວຽດນາມຖ້າມີໂອກາດຮຽກຂໍອະນຸຍາດພິເສດສຳລັບການສົ່ງອອກໄມ້ທ່ອນ.

ດັ່ງນັ້ນ, ກໍລະນີດັ່ງກ່າວນີ້ຄົງກ່ຽວກັບການຂາດແຄນໄມ້ທ່ອນຈາກແຫຼ່ງທີ່ມາເປັນທາງການ ເຊິ່ງທົດແທນ (ເຕັມສ່ວນ ຫຼືບາງສ່ວນ)ໂດຍໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍ. ອີງຕາມການສຳພາດໜຶ່ງໃນກຳມະກອນຈາກໂຮງງານປຸງແຕ່ງໄມ້ແຫ່ງໜຶ່ງໃນແຂວງສາລະວັນ, ມີພຽງແຕ່ 20% ຂອງໄມ້ທ່ອນທີ່ສະໜອງຈາກແຫຼ່ງທີ່ອະນຸຍາດ.

ອີງຕາມກົດໝາຍ,ຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC)ໃນການປະສານງານກັບຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO)ຕ້ອງຄວບຄຸມຄວາມຖືກຕ້ອງຂອງໄມ້ທ່ອນທີ່ສະໜອງໃຫ້ບັນດາວິສາຫະກິດປຸງແຕ່ງໄມ້. ເງື່ອນໄຂທີ່ສຳຄັນສຳລັບການອອກໃບອະນຸຍາດການສົ່ງອອກຈະຕ້ອງໄດ້ຮັບການຢັ້ງຢືນຈາກຄະນະກຳມະການຄວບຄຸມຂອງລັດຖະບານກ່ຽວກັບການປະຕິບັດຕາມລະບຽບຜົນຜະລິດຂອງບໍລິສັດທີ່ມີບໍລິມາດວັດຖຸດິບທີ່ສະໜອງໃຫ້[89]. ປາກົດວ່າອົງປະກອບທີ່ສຳຄັນສຳລັບການຄິດໄລ່ ຄວາມດຸນດ່ຽງນີ້ຈະເປັນປັດໃຈການຫັນປ່ຽນຜົນຜະລິດ, ເຊິ່ງຂຶ້ນກັບຊະນິດຂອງຜະລິດຕະພັນ, ຄຸນນະພາບຂອງວັດຖຸດິບແລະປະສິດທິພາບຂອງອຸປະກອນຂອງວິສາຫະກິດນັ້ນ.

ໃນແຂວງສາລະວັນປັດໃຈຜົນຜະລິດຖືກຢືນຢັນຢ່າງເປັນທາງການແມ່ນ75% ຂອງວັດຖຸດິບແລະໃນແຂວງອັດຕະປືມີປັດໃຈສູງກວ່າ - 80%, ໃນຂະນະທີ່ອີງຕາມບັນດາຜູ້ຊ່ຽວຊານທີ່ເຮັດວຽກຢູ່ໃນສປປລາວຜົນຜະລິດໂດຍສະເລ່ຍຂອງໄມ້ແປຮູບຂອງບັນດາໂຮງເລື່ອຍລາວບໍ່ເກີນ 40-50% ຂອງໄມ້ທ່ອນ. ຍ້ອນວ່າການນຳໃຊ້ປັດໃຈຜົນຜະລິດທີ່ສູງເກີນບໍ່ສົມເຫດສົມຜົນດັ່ງກ່າວ (ອາດເປັນການສະແດງຄວາມສັດຊື່ຕໍ່ກັບນະໂຍບາຍຂອງລັດຖະບານທີ່ຕ້ອງການປັບປຸງປະສິດທິພາບໃນດ້ານອຸດສາຫະກຳການປຸງແຕ່ງໄມ້ຂອງປະເທດ) ບັນດາບໍລິສັດມີໂອກາດເຮັດໃຫ້ການນຳໃຊ້ວັດຖຸດິບ50-100%ຫຼາຍກວ່າທີ່ແຈ້ງຢູ່ໃນເອກະສານຂອງການສະໜອງຖືກຕ້ອງຕາມກົດໝາຍ.

[a] ໃນມື້ດຽວກັນ ໃນເດີ່ນຂອງຫ້ອງເຮັດວຽກເພີນິເຈີ (ກຳມະກອນ 3 ຄົນຈາກ ເວ້) ຕັ້ງຢູ່ເສັ້ນທາງບ້ານຕາລາວຫຼວງ (1.5 ກິໂລແມັດທິດຕາເວັນຕົກຈາກ ບ້ານກາສາງ ກາງ) ພວກເຮົາພົບກອງໄມ້ດູ່ (ຢ່າງໜ້ອຍ 3 ແມັດກ້ອນ). ອີງຕາມຫ້ອງການກວດກາປ່າໄມ້ແຂວງເຊກອງ ຫ້ອງເຮັດວຽກເພີນິເຈີນີ້ໄດ້ຍ້າຍມາຈາກບ່ອນອື່ນ ແລະບໍ່ມີໂຄຕ້າອະນຸຍາດ.

ຄວາມຈິງແລ້ວບໍ່ມີການຄວບຄຸມຂອງລັດຖະບານທີ່ມີປະສິດທິຜົນໃນຂະແໜງການປຸງແຕ່ງໄມ້, ຊຶ່ງຮັບຮູ້ໂດຍສະພາແຫ່ງຊາດແລະລັດຖະບານເອງ. ພວກເຂົາເຈົ້າຖືວ່າການດຳເນີນງານໃນປັດຈຸບັນຂອງບັນດາໂຮງເລື່ອຍເປັນສາເຫດສ້າງຄວາມເສຍຫາຍທາງດ້ານການເງິນຢ່າງໜັກໜ່ວງສຳລັບປະເທດແລະການເຊື່ອມໂຊມຂອງປ່າໄມ້. ເຈົ້າໜ້າທີ່ຍອມຮັບວ່າ ບາງໂຮງເລື່ອຍສ້າງຕັ້ງຂຶ້ນໂດຍບໍ່ມີເຈດຕະນາເຮັດຜະລິດຕະພັນໄມ້, ແຕ່ສ້າງຂຶ້ນເພື່ອຮັບຊື້ໄມ້ທ່ອນທີ່ມີເຄົ້າແລະແຫຼ່ງທີ່ມາບໍ່ມີຄວາມຊັດເຈນ[90].

ໃນເດືອນມັງກອນ ປີ2014 ຮອງນາຍົກລັດຖະມົນຕີ, ທ່ານສົມສະຫວາດ ເລັ່ງສະວັດ, ປະກາດໃນລະຫວ່າງການລົງໄປຢ້ຽມຢາມແຂວງຈຳປາສັກລັດຖະບານເລີ່ມກວດກາຄວາມຖືກຕ້ອງແຫຼ່ງທີ່ມາຂອງການສະໜອງວັດຖຸດິບໃຫແກ່ບັນດາໂຮງງານປຸງແຕ່ງໄມ້ທົ່ວປະເທດ[91]. ອີງຕາມຄຳຖະແຫຼງການຂອງທ່ານການກວດການີ້ມີຈຸດປະສົງຫຼາຍຢ່າງ ຄື:

- ເພື່ອບັນທຶກຂໍ້ມູນກ່ຽວກັບຈຳນວນໄມ້ທີ່ບັນດາໂຮງງານເກັບມ້ຽນໄວ້;
- ເພື່ອຊອກຫາແລະຍຶດ "ໄມ້ທີ່ເກີນຈຳນວນອະນຸຍາດທີ່ຄອບຄອງໄວ້";
- ເພື່ອເຮັດໃຫ້ໂຮງງານປຸງແຕ່ງໄມ້ມີຄວາມທັນສະໄໝ,ຮັບປະກັນວ່າບັນດາໂຮງງານເຮັດຕາມມາດຕະຖານທີ່ກຳນົດໄວ້ທັງໝົດກ່ອນປຸງແຕ່ງໄມ້ສຳລັບສົ່ງອອກ.

ຈຸດປະສົງຕົ້ນຕໍແມ່ນ "ເພື່ອກວາດລ້າງໄມ້ທ່ອນທີ່ສະສົມໄວ້" ເພື່ອສ້າງເງື່ອນໄຂທີ່ເອື້ອອຳນວຍສຳລັບການຄວບຄຸມຂັ້ນຕໍ່ໄປຂອງການສະໜອງໄມ້ຈາກແຫຼ່ງທີ່ບໍ່ມີອະນຸຍາດ.

ຮອງນາຍົກລັດຖະມົນຕີຍັງໄດ້ກ່າວຕື່ມອີກວ່າ ກະຊວງອຸດສາຫະກຳ ແລະການຄ້າ(MOIC)ແລະກະຊວງກະຊິກຳ ແລະປ່າໄມ້(MAF) "ໄດ້ທົດລອງໂຄງການດັ່ງກ່າວຢູ່ແຂວງສະຫວັນນະເຂດກ່ອນທີ່ຈະມີການຂະຫຍາຍອອກໄປຫາແຂວງອື່ນໆ" ແລະການດຳເນີນການກວດກາໂຮງງານປຸງແຕ່ງໄມ້15ໃນຫຼາຍກວ່າ100ແຫ່ງທີ່ດຳເນີນກິດຈະການຢູ່ໃນແຂວງສະຫວັນນະເຂດ. ດັ່ງຜົນຂອງການກວດກາເຫຼົ່ານີ້ພົບໄມ້ປະມານ 80,000 ແມັດກ້ອນ.

ບົດຄວາມໃນໜັງສືພິມວຽງຈັນທາມບໍ່ລະບຸສະຖານະພາບຂອງໄມ້ທີ່ພົບແລະບໍ່ໄດ້ກ່າວເຖິງມີການຍຶດໄມ້ເກີດຂຶ້ນ (ອີງຕາມບາງລາຍງານໃຫ້ຮູ້ວ່າບໍ່ມີເອກະສານທີ່ພິສູດເຖິງແຫຼ່ງທີ່ມາຂອງໄມ້ທ່ອນວ່າຖືກຕ້ອງຕາມກົດໝາຍ). ໃນສື່ສິ່ງຈັດພິມອື່ນຍັງໃຫ້ຮູ້ຕື່ມອີກວ່າຜົນຂອງຄວາມພະຍາຍາມຂອງລັດຖະບານໃນການຕໍ່ສູ້ກັບການຂຸດຄົ້ນໄມ້ທ່ອນແລະການຄ້າທີ່ຜິດກົດໝາຍມີໜ້ອຍໃນປີ2014.

ອີງຕາມຂໍ້ມູນຈາກກະຊວງກະຊິກຳ ແລະປ່າໄມ້(MAF)ທີ່ປ່ອຍອອກມາໃນຕົ້ນເດືອນມີນາ ປີ2014 ວ່າຈາກວັນທີ19-26ເດືອນກຸມພາ ເຈົ້າໜ້າທີ່ໄດ້ຍຶດໄມ້ທ່ອນ 60 ແມັດກ້ອນທີ່ຂຸດຄົ້ນຢ່າງຜິດກົດໝາຍຢູ່ໃນບັນດາແຂວງສະຫວັນນະເຂດ ແລະສາລະວັນ ແລະໄດ້ຕັ້ງຂໍ້ຫາແກ່ຜູ້ເຮັດຜິດແລ້ວ[92]. ໃນສື່ຕີພິມສະບັບຕໍ່ມາໄດ້ກ່າວວ່າໃນແຂວງສາລະວັນໃນໄລຍະເວລາໜຶ່ງເດືອນຈາກເດືອນທັນວາຫາເດືອນມັງກອນ ປີ2014 ມີໄມ້ທ່ອນ 214 ແມັດກ້ອນຖືກຍຶດ[93].

ໃນການໃຫ້ສຳພາດກັບສື່ມວນຊົນທ້ອງຖິ່ນໃນເດືອນກໍລະກົດປີ2014 ຮອງລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ, ທ່ານບຸນມີ ມະນີວົງ, ອະທິບາຍວ່າການສືບສວນຂອງລັດຖະບານກ່ຽວກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍດຳເນີນຕໍ່ໄປໃນແຂວງ“ທົດລອງ” ສອງແຂວງຄື:ແຂວງສະຫວັນນະເຂດແລະສາລະວັນ[94].

ທ່ານຢືນຢັນວ່າຈຸດປະສົງຕົ້ນຕໍໃນເບື້ອງຕົ້ນແມ່ນການກວດກາບັນດາໂຮງເລື່ອຍ ແລະໂຮງງານປຸງແຕ່ງໄມ້ເພື່ອສົ່ງອອກໄມ້ທ່ອນທັງໝົດ. ຫຼັງຈາກກວາດລ້າງໄມ້ທ່ອນແລ້ວ, ເຈົ້າໜ້າທີ່ຈະສ້າງລະບົບເອກະສານກັບຜູ້ປະກອບການທຸລະກິດເພື່ອຈັດຕັ້ງການຕິດຕາມກວດກາ. ໃນລະຫວ່າງການຕິດຕາມກວດກາ ເຈົ້າຂອງບັນດາວິສາຫະກິດປຸງແຕ່ງໄມ້ຈະຕ້ອງບັນທຶກແລະລະບຸເຄົ້າຂອງໄມ້ທ່ອນທີ່ພົບ.

ທ່ານບຸນມີເວົ້າຕື່ມອີກວ່າຖ້າໂຄງການທົດລອງດັ່ງກ່າວປະສົບຄວາມສຳເລັດ, ໂຄງການທີ່ຄ້າຍຄືກັນນີ້ຈະດຳເນີນຕໍ່ໄປໃນແຂວງອື່ນ. ຄຳເວົ້າເຫຼົ່ານີ້ອາດຖືວ່າເປັນການສາລະພາບ ຈົນເຖິງປັດຈຸບັນນີ້ໜ່ວຍງານທີ່ຮັບຜິດຊອບດັ່ງກ່າວຍັງບໍ່ສາມາດປະຕິບັດໜ້າທີ່ຂອງຕົນໃນການຕິດຕາມກວດກາ
ການສະໜອງວັດຖຸດິບໃຫ້ແກ່ໂຮງເລື່ອຍ.

ການສືບສວນຂອງລັດຖະບານອາດບໍ່ໄດ້ຮັບຜົນຕາມວັດຖຸປະສົງທີ່ໃຫ້ໄວ້ ເນື່ອງຈາກວ່າຊ່ວງທ້າຍປີ2014 ເຈົ້າໜ້າທີ່ແຂວງສະຫວັນນະເຂດໄດ້ມອບໝາຍໜ້າທີ່ຮັບຜິດຊອບໃຫ້ແກ່ເຈົ້າໜ້າທີ່100
ທ່ານເພື່ອສືບສວນການຂຸດຄົ້ນໄມ້ທີ່ຖືກຕ້ອງແລະບໍ່ຖືກຕ້ອງຕາມກົດໝາຍ ລວມທັງຈົດທະບຽນໄມ້ທ່ອນທັງໝົດທີ່ພົບຢູ່ຕາມໂຮງງານປຸງແຕ່ງໄມ້ແລະເຟີນິເຈີຫຼາຍກວ່າ 300 ແຫ່ງທົ່ວແຂວງ, ເພື່ອລະບຸປະລິມານ, ຊະນິດ, ປະເພດ, ບໍລະມາດແລະແຫຼ່ງທີ່ມາຂອງໄມ້[95]. ຍັງໄດ້ກ່າວວ່າ ຂໍ້ມູນຂ່າວສານນີ້ຈະຖືກນຳໃຊ້ເຂົ້າໃນວຽກງານຕໍ່ໄປເພື່ອກຳຈັດການຂຸດຄົ້ນໄມ້ທີ່ຜິດກົດໝາຍ.

ໃນເດືອນກໍລະກົດ ປີ2014ໃນກອງປະຊຸມສະໄໝສາມັນຄັ້ງທີ VII ຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດຮຽກຮ້ອງລັດຖະບານວາງກົດລະບຽບຕໍ່ບັນດາໂຮງເລື່ອຍຢ່າງເຂັ້ມງວດ ແລະສະແດງຄວາມເປັນຫ່ວງຕໍ່ການເພີ່ມຂຶ້ນຢ່າງຕໍ່ເນື່ອງໃນຈຳນວນຂອງໂຮງເລື່ອຍ[96]. ປະທານສະພາແຫ່ງຊາດທ່ານນາງປານີຢາທໍຕູ້ໄດ້ກ່າວວ່າກະຊວງອຸດສາຫະກຳ ແລະການຄ້າ(MOIC)ແລະກະຊວງກະຊິກຳ ແລະປ່າໄມ້(MAF) ຄວນກວດກາໂຮງເລື່ອຍໂດຍທັນທີ ເນື່ອງຈາກວ່າໂຮງເລື່ອຍເຫຼົ່ານີ້ຕັ້ງຢູ່ໃກ້ກັບເຂດປ່າສະຫງວນແລະການກະທຳດັ່ງກ່າວຜິດຕໍ່ກົດໝາຍ[97].

ໃນຄຳຕອບຂອງນາຍົກລັດຖະມົນຕີ ທ່ານທອງສິງທຳມະວົງຮ່ວມສະແດງຄວາມເປັນຫ່ວງເໝືອນກັບບັນດາສະມາຊິກສະພາແຫ່ງຊາດຄົນອື່ນໆແລະຢືນຢັນວ່າທ່ານບໍ່ເຄີຍອະນຸມັດການສ້າງຕັ້ງໂຮງເລື່ອຍເລີຍນັບ
ແຕ່ມື້ຕົນເອງໄດ້ເຂົ້າຮັບຕຳແໜ່ງນາຍົກລັດຖະມົນຕີ. ທ່ານສັນນິຖານວ່າ ການເພີ່ມຂຶ້ນຂອງຈຳນວນໂຮງເລື່ອຍທີ່ນຳໃຊ້ໄມ້ທ່ອນຂຸດຄົ້ນທີ່ຜິດກົດໝາຍນັ້ນ ເກີດຂຶ້ນຍ້ອນການອະນຸມັດຂອງບັນດາຂະແໜງທີ່ກ່ຽວຂ້ອງ ຫຼືອຳນາດການປົກຄອງທ້ອງຖິ່ນແລະການສືບສວນນັ້ນຈຳເປັນຕ້ອງລະບຸໃຜເປັນຜູ້ຮັບຜິດຊອບ[98].

ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ, ທ່ານນາງ ເຂັມມະນີພົນເສນາ, ເຊິ່ງເປັນຜູ້ຕອບຄຳຖາມຈາກບັນດາສະມາຊິກສະພາແຫ່ງຊາດເຊັ່ນກັນ, ໄດ້ສັນຍາວ່າກະຊວງຂອງຕົນຈະລົງມືດຳເນີນການແລະແກ້ໄຂບັນຫາຕ່າງໆ ແລະລາຍງານຄວາມຄືບໜ້າທີ່ໄດ້ຮັບຄືນສູ່ສະພາແຫ່ງຊາດໃນທ້າຍປີນີ້. ແຕ່ "ຕ້ອງໃຊ້ເວລາພໍສົມຄວນໃນການປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດ. ການປະຕິບັດວຽກກຳລັງດຳເນີນຢູ່", ທ່ານກ່າວຕໍ່ສື່. ທ່ານເຕືອນວ່າ ຖ້າຫາກພົບເຫັນໂຮງເລື່ອຍແລະໂຮງງານໃດມີຄວາມຜິດຍ້ອນຝ່າຝືນກົດໝາຍແລະຂໍ້ກຳນົດທີ່ກ່ຽວຂ້ອງຈະຖືກສັ່ງໃຫ້ປິດກິດຈະການ[99].

## ປະສິດທິພາບຂອງການບັງຄັບໃຊ້ກົດໝາຍ

ການເຂົ້າໃຈມາດຕາສ່ວນຂອງບັນຫາດັ່ງກ່າວເຮັດໃຫ້ສາມາດປະເມີນປະສິດທິພາບຂອງມາດຕະການ ໃນປັດຈຸບັນທີ່ດຳເນີນການຕໍ່ສູ້ກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍ. ແຕ່ໜ້າເສຍດາຍ, ຂໍ້ມູນກ່ຽວກັບຈຳນວນ ເຂດຂຸດຄົ້ນໄມ້ຢ່າງຜິດກົດໝາຍທີ່ກວດພົບໂດຍໜ່ວຍງານຄວບຄຸມທີ່ຮັບຜິດຊອບບໍ່ມີ. ເທົ່າທີ່ພວກເຮົາຮູ້ມີ ພຽງແຕ່ກໍລະນີທີ່ມີໄມ້ທ່ອນທີ່ຍຶດມາໄດ້ຖືກຈົດທະບຽນ (ສ່ວນໃຫຍ່ໄດ້ຈັບກຸມໃນຂະນະຂົນສົ່ງ).

ສະຖິຕິແຫ່ງຊາດທີ່ມີກ່ຽວກັບບໍລະມາດຂອງໄມ້ທ່ອນທີ່ຜິດກົດໝາຍທີ່ຍຶດມາໄດ້ ແມ່ນຫຍຸ້ງຍາກໃນການຕີ ຄວາມໝາຍຫຼືບໍ່ໜ້າເຊື່ອຖື. ຕົວຢ່າງ, ອີງຕາມຂໍ້ມູນຂອງພະແນກກວດກາປ່າໄມ້ເມືອງ(DOFI)ທີ່ສະເໜີໃນ ການຮ່າງບົດລາຍງານກ່ຽວກັບການຕອບສະໜອງຄວາມຍຸຕິທຳທາງຄະດີອາຍາຕໍ່ ອາຊະຍາກຳດ້ານສິ່ງ ແວດລ້ອມໃນສ. ປ. ປ. ລາວ (2014),ບໍລິມາດຂອງໄມ້ທ່ອນທີ່ຍຶດມາໄດ້ປະມານ 40 ພັນແມັດກ້ອນໃນປີ 2008 ຫາ 2009, ຕໍ່ມາຫຼຸດລົງເຖິງ 20 ພັນແມັດກ້ອນໃນປີ 2010 ແລະເພີ່ມຂຶ້ນອີກ9ເທົ່າປະມານ 180 ພັນແມັດກ້ອນໃນປີ 2011[100].

ໃນເວລາດຽວກັນອີງຕາມການຄົ້ນຄວ້າຂອງທ່ານ ໄກສອນ (2015), ໂດຍອີງ ໃສ່ຂໍ້ມູນຂອງພະແນກກວດກາປ່າໄມ້ເມືອງ(DOFI) ເຊັ່ນດຽວກັນ, ບໍລິມາດຂອງໄມ້ທ່ອນທີ່ຍຶດມາໄດ້ເພີ່ມ ຂຶ້ນຈາກ 26 ພັນແມັດກ້ອນໃນປີ 2009 ເຖິງ 44 ພັນແມັດກ້ອນໃນປີ 2010 ແລະຈາກນັ້ນໄດ້ຫຼຸດລົງ ເຖິງ 9 ພັນແມັດກ້ອນໃນປີ 2011 (ຊຶ່ງມີ20ເທົ່າໜ້ອຍກວ່າຂໍ້ມູນຈາກແຫຼ່ງທີ່ຜ່ານມາ )[101].ດັ່ງຕົວເລກອັນຫຼັງນີ້ ພວກເຮົາຄວນສັງເກດວ່າ ອີງຕາມ ຂໍ້ມູນຈາກຫ້ອງການກວດກາປ່າໄມ້ແຂວງ(POFI) ສາລະວັນແລະເຊກອງ,ໄມ້ທ່ອນ 3767 ແມັດກ້ອນຖືກ ຍຶດໄດ້ໃນບັນດາແຂວງເຫຼົ່ານີ້ໃນປີ 2011 (ຕາຕະລາງ 12). ເຫັນຢ່າງຊັດເຈນວ່າ ອັດຕາສ່ວນຂອງສອງ ແຂວງເທົ່ານັ້ນບໍ່ສາມາດຫຼາຍເຖິງ 41% ຂອງບໍລິມາດໄມ້ທ່ອນທີ່ຍຶດໄດ້ໂດຍລວມໃນປະເທດລາວ.

ປະກົດວ່າ, ດັ່ງໃນກໍລະນີຂອງສະຖິຕິແຫ່ງຊາດກ່ຽວກັບການຂຸດຄົ້ນໄມ້ທີ່ອະນຸຍາດແລະຈົດທະບຽນ, ຂໍ້ມູນກ່ຽວກັບການຍຶດໄມ້ທ່ອນໃນບັນດາແຂວງຕ່າງໆດັ່ງກ່າວບໍ່ຖືກເກັບກຳແລະສັງລວມເປັນປົກກະຕິ, ຊຶ່ງ ເປັນສາເຫດໃຫ້ມີການຂັດແຍ້ງກັນທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ.

ໃນວັນທີ19 ເດືອນກຸມພາ ປີ2014 ໜັງສືພິມວຽງຈັນທາມ (ອ້າງອີງຈາກໜັງສືພິມປ້ອງກັນຄວາມສະຫງົບ ຂອງກະຊວງປ້ອງກັນຄວາມສະຫງົບ)ຈັດພິມຜົນຂອງການບັງຄັບໃຊ້ກົດໝາຍຂອງພະແນກຕຳຫຼວດເສດ ຖະກິດທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ທີ່ຖືກນຳສະເໜີຢູ່ໃນກອງປະຊຸມປະຈຳປີໃນເດືອນກຸມພາ. ອີງຕາມບົດລາຍງານນີ້ເຈົ້າໜ້າທີ່ຕຳຫຼວດທີ່ຮັບຜິດຊອບວຽກງານດ້ານເສດຖະກິດໃນປີ 2013ໄດ້ຈົດທະບຽນ257 ກໍລະນີກ່ຽວກັບການຄ້າໄມ້ຜິດກົດໝາຍ ແລະ "ໄດ້ຍຶດຍານພາຫະນະຈຳນວນ 20 ຄັນ, **ໄມ້ແປຮູບ671,000 ແມັດກ້ອນ, ໄມ້ທ່ອນ 4.5 ລ້ານແມັດກ້ອນ**, ຈັກສະຕິບ 15 ເຄື່ອງ ແລະລົດຈັກ 3 ຄັນ"(ຄຸມດຳຈຸດເນັ້ນໜັກ)

ຕົວເລກເຫຼົ່ານີ້ຖືກອ້າງອີງໃນການປະເມີນກ່ຽວກັບການຕອບສະໜອງຄວາມຍຸຕິທຳທາງຄະດີອາຍາຕໍ່ອາຊະຍາກຳດ້ານສັດປ່າແລະປ່າໄມ້ໃນສປປລາວ. ການປະເມີນດັ່ງກ່າວຖືກນຳສະເໜີທີ່ກອງປະຊຸມປຶກສາຫາລືແຫ່ງຊາດກ່ຽວກັບການຕອບສະໜອງຄວາມຍຸຕິທຳທາງຄະດີອາຍາຕໍ່ອາຊະຍາກຳດ້ານສັດປ່າ ແລະປ່າໄມ້ທີ່ຈັດຂຶ້ນຢູ່ວຽງຈັນສປປລາວ, ໃນວັນທີ23ເດືອນກັນຍາປີ2014,ທີ່ເຂົ້າຮ່ວມໂດຍບັນດາຜູ້ຕາງໜ້າທີ່ສຳຄັນຈາກໜ່ວຍງານການບັງຄັບໃຊ້ກົດໝາຍທັງໝົດທີ່ຮັບຜິດຊອບຕໍ່ສູ້ກັບການຊຸດຄົ້ນໄມ້ແລະການຄ້າທີ່ຜິດກົດໝາຍ (ເຊັ່ນ: ພະແນກກວດກາປ່າໄມ້ເມືອງ(DOFI), ຫ້ອງການໄອຍະການປະຊາຊົນສູງສຸດ, ພະແນກຕຳຫຼວດເສດຖະກິດແລະອື່ນໆ).[102]. ຢ່າງໃດກໍຕາມ, ເຫັນຢ່າງຊັດເຈນວ່າຂໍ້ມູນທີ່ອ້າງອີງກ່ຽວກັບບໍລິມາດຂອງໄມ້ທ່ອນທີ່ຍຶດໄດ້ເປັນຈຳນວນຫຼວງຫຼາຍໃນປີ 2013 (ຫຼາຍກວ່າ5 ລ້ານແມັດກ້ອນ (!) ແມ່ນຂໍ້ມູນທີ່ບໍ່ຖືກຕ້ອງແລະບໍ່ມີຖານຄວາມຈິງ. ຄວາມຈິງນີ້, ໃນຄວາມຄິດເຫັນຂອງພວກເຮົາ, ສະແດງໃຫ້ເຫັນວ່າລັດຖະບານກາງບໍ່ເຂົ້າໃຈຢ່າງຈະແຈ້ງກ່ຽວກັບມາດຕາສ່ວນຂອງບັນຫາດັ່ງກ່າວແລະສະແດງເຖິງການຂາດການສື່ສານລະຫວ່າງໜ່ວຍງານຕ່າງໆທີ່ຮັບຜິດຊອບສຳລັບການຊຸດຄົ້ນໄມ້ທີ່ຜິດກົດໝາຍແລະການຄ້າໄມ້ທ່ອນທີ່ກ່ຽວຂ້ອງ.

ເພື່ອເຂົ້າໃຈຢ່າງຈະແຈ້ງຕື່ມອີກກ່ຽວກັບຜົນຂອງການເຄື່ອນໄຫວຕ່າງໆຂອງລັດຖະບານໃນການຕໍ່ຕ້ານການຊຸດຄົ້ນໄມ້ຢ່າງຜິດກົດໝາຍສາມາດໄດ້ມາຈາກຂໍ້ມູນທີ່ເກັບກຳຢູ່ໃນຂັ້ນແຂວງ (ຕາຕະລາງ 12).

## ຕາຕະລາງ12. ກໍລະນີການຂຸດຄົ້ນໄມ້ຢ່າງຜິດກົດໝາຍທີ່ບັນທຶກໃນແຂວງຕ່າງໆພາກໃຕ້ຂອງປະເທດລາວ

| | | ສາລະວັນ | ເຊກອງ | ອັດຕະປື | ຈຳປາສັກ |
|---|---|---|---|---|---|
| 2009-2010 | ບໍລິມາດ, ແມັດກ້ອນ | 1,074.426 | 599.122 (ໄມ້ທ່ອນ) 10.275 (ໄມ້ແປຮູບ) | | |
| | ທ່ອນ/ປ່ຽງໄມ້ | 1,116 | | | |
| | ກໍລະນີ | 52 | | | 40 |
| | ຜູ້ລະເມີດກົດໝາຍ | 7 | | | |
| | ຫົວໜ່ວຍການຂົນສົ່ງ | 6 | | | |
| 2010-2011 | ບໍລິມາດ, ແມັດກ້ອນ | 2,174.110 (ໄມ້ແປຮູບ?) | 126.685 (ໄມ້ແປຮູບ) 1,466.233 (ໄມ້ທ່ອນ) | | |
| | ທ່ອນ/ປ່ຽງໄມ້ | 27,881 | | | |
| | ກໍລະນີ | 46 (50?) | | | 70 |
| | ຜູ້ລະເມີດກົດໝາຍ | 73 | | | |
| | ຫົວໜ່ວຍການຂົນສົ່ງ | 20 ລົດໃຫຍ່<br>3 ລົດຈັກ<br>1 ລົດໄຖນາ | | | |

| | | | | | |
|---|---|---|---|---|---|
| 2011-2012 | ບໍລິມາດ, ແມັດກ້ອນ | 540.008 (ໄມ້ແປຮູບ?)<br>12.8 (ໄມ້ທ່ອນ)<br>875.2 (ໄມ້ແປຮູບ)<br>500 (ໄມ້ແປຮູບ) - ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ(PONRE) | 30.144 (ໄມ້ແປຮູບ)<br>109.1 (ໄມ້ທ່ອນ) | 648.863 (ໄມ້ແປຮູບ) | 1,718.118 (ໄມ້ແປຮູບ)<br>173.770 (ໄມ້ທ່ອນ)[a]<br>329.888 (ໄມ້ທ່ອນແລະເຫງົ້າໄມ້)[b] |
| | ທ່ອນ/ປ່ຽງໄມ້ | 20,764<br>3,900 - ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ(PONRE) | | | |
| | ກໍລະນີ | 40 (46?) | | 47 | 38 |
| | ຜູ້ລະເມີດກົດໝາຍ | 60 | | | |
| | ຫົວໜ່ວຍການຂົນສົ່ງ | 20 ລົດໃຫຍ່<br>4 ລົດຈັກ | | 41 ລົດໃຫຍ່<br>1 ລົດລາກຂະໜາດນ້ອຍ<br>5 ລົດໄຖນາ | 23 ລົດໃຫຍ່ |
| 2012-2013 | ບໍລິມາດ, ແມັດກ້ອນ | 148.320<br>185.813[d]<br>519.471 (ໄມ້ທ່ອນ, ຫ້ອງການຊັບພະຍາກອນທຳ | 4.041[c] | | |

[a] ໄມ້ຂະຍຸງທັງໝົດ (Dalbergia cochinchinensis).

[b] ໄມ້ຂະຍຸງທັງໝົດ (Dalbergia cochinchinensis).

[c] ໄມ້ຄຳພີ້(Dalbergia oliveri.)

[d] ສ່ວນໃຫຍ່ ແມ່ນໄມ້ຂະຍຸງ, ໄມ້ຄຳພີ້, ໄມ້ດູ່

| | | | | | |
|---|---|---|---|---|---|
| | | ມະຊາດ ແລະ ສິ່ງແວດລ້ອມແຂວງ(PONRE)[a] | | | |
| | ທ່ອນ/ປ່ຽງໄມ້ | 7,083 | | | |
| | | 12,248 | | | |
| | | 99 (ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ(PONRE)[b] | | | |
| | ກໍລະນີ | 22 | | | |
| | ຜູ້ລະເມີດກົດໝາຍ | 43 | | | |
| | ຫົວໜ່ວຍການຂົນສົ່ງ | 17 ລົດໃຫຍ່<br>1 ລົດໄຖນາ | | | |

ໝາຍເຫດ: ຜົນຂອງການເຄື່ອນໄຫວຂອງຫ້ອງການກວດກາປ່າໄມ້ແຂວງ (POFI)ຖືກມອບໃຫ້ ອີງຕາມຂໍ້ມູນຂອງເຂົາເຈົ້າເອງ (ສຳລັບແຂວງສາລະວັນພວກເຮົາສະໜອງໃຫ້ຫຼາຍແບບໃນເວລາທີ່ແຕກຕ່າງກັນ). ສຳລັບແຂວງສາລະວັນ ຂໍ້ມູນທີ່ມີກ່ຽວກັບການຍຶດໄມ້ໂດຍຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ(PONRE) ກໍຖືກສະໜອງໃຫ້ເຊັ່ນດຽວກັນ.

ອີງຕາມຫ້ອງການກວດກາປ່າໄມ້ແຂວງ (POFI) ສາລະວັນ, ເຊກອງ, ອັດຕະປືແລະຈຳປາສັກ, ໃນໄລຍະລະດູການ 2011-2012 ຈຳນວນໄມ້ທ່ອນທີ່ຍຶດໄດ້ໂດຍລວມໃນສີ່ແຂວງທັງໝົດມີ 4ພັນແມັດກ້ອນ ລວມທັງໄມ້ແປຮູບ 3 ພັນແມັດກ້ອນ ແລະເຫງົ້າໄມ້ທີ່ມີຫຼາຍກວ່າ300 ແມັດກ້ອນ. ບໍລິມາດນີ້ຈະສູງເຖິງ 7 ພັນແມັດກ້ອນໃນມູນຄ່າໂດຍລວມຂອງໄມ້(RWE). ດັ່ງນັ້ນບໍລິມາດໄມ້ທ່ອນທີ່ຍຶດໄດ້ໂດຍຫ້ອງການກວດກາປ່າໄມ້ແຂວງ (POFI)ມີພຽງແຕ່ 3-5% ຂອງບໍລິມາດໄມ້ທ່ອນທີ່ຄາດຄະເນເຊິ່ງໄດ້ຂຸດຄົ້ນໄມ້ໃນຈຳນວນທີ່ເກີນຈາກແຫຼ່ງທີ່ມີເອກະສານໃນບັນດາແຂວງເຫຼົ່ານີ້ໃນລະດູການທີ່ໃຫ້ດັ່ງກ່າວ.

ນອກຈາກຫ້ອງການກວດກາປ່າໄມ້ແຂວງ (POFI)ບັນດາໜ່ວຍງານຂອງລັດຖະບານອື່ນໆລວມທັງຕຳຫຼວດ, ຫ້ອງການອຸດສາຫະກຳ ແລະການຄ້າແຂວງ (POIC)ແລະຫ້ອງການຊັບພະຍາກອນທຳມະຊາດ

[a] ໄມ້ຂະຍຸງ, ໄມ້ຄຳພີ້, ໄມ້ດູ່ - 134.471 ແມັດກ້ອນ; ໄມ້ຍາງ. - 372 ແມັດກ້ອນ; ໄມ້ບາກ - 13 ແມັດກ້ອນ.
[b] ໄມ້ຍາງ. – 94 ທ່ອນ; ໄມ້ບາກ - 5 ທ່ອນ.

ແລະສິ່ງແວດລ້ອມແຂວງ(PONRE)ຄົ້ນຫາແລະກັກໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍ (ຫ້ອງການຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມແຂວງ(PONRE)ຮັບຜິດຊອບຄວບຄຸມການນໍາໃຊ້ປ່າໃນເຂດປ່າອະນຸລັກແລະປ່າສະຫງວນ). ໂດຍອີງໃສ່ການສັງເກດການຂອງພວກເຮົາພວກເຮົາເຊື່ອວ່າ ເຖິງແມ່ນວ່າລວມເອົາທັງໄມ້ທີ່ຍຶດໄດ້ໂດຍບັນດາໜ່ວຍງານເຫຼົ່ານີ້ ອັດຕາການຍຶດໂດຍລວມຈະບໍ່ເກີນ 10% ຂອງບໍລິມາດການຂຸດຄົ້ນເກີນຈໍານວນທີ່ຄາດຄະເນ.

ອັດຕາການຍຶດນີ້ແມ່ນໜ້ອຍກວ່າການປະເມີນຜົນທີ່ສະໜອງໃຫ້ໂດຍຫ້ອງການກວດກາປ່າໄມ້ແຂວງ (POFI).ຕົວຢ່າງ, ອີງຕາມໜ່ວຍງານກວດກາປ່າໄມ້ແຂວງໄຊຍະບູລີພວກເຂົາເຈົ້າສາມາດກວດພົບເກືອບທຸກກໍລະນີຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍ. ສ່ວນໜ່ວຍງານກວດກາປ່າໄມ້ແຂວງຫຼວງພະບາງສັນນິຖານວ່າ ພວກເຂົາເຈົ້າໄດ້ກວດພົບປະມານ50-60% ຂອງກໍລະນີທັງໝົດ. ອັດຕາການຍຶດໃນແຂວງສາລະວັນແລະແຂວງເຊກອງຖືກຄາດຄະເນໂດຍບັນດາຜູ້ກວດກາແມ່ນຕໍ່າກວ່າ 30%[103]. ຮອງຫົວໜ້າຫ້ອງການກວດກາປ່າໄມ້ແຂວງ (POFI) ອັດຕະປືສັນນິຖານວ່າ60%ຂອງໄມ້ທ່ອນທີ່ຂຸດຄົ້ນຢ່າງຜິດກົດໝາຍຖືກກວດພົບ[104]. ຕົວເລກທີ່ໃກ້ຄຽງທີ່ສຸດກັບການຄາດຄະເນຂອງພວກເຮົາແມ່ນການຄາດຄະເນໂດຍຫົວໜ້າຫ້ອງການກວດກາປ່າໄມ້ແຂວງ (POFI) ສາລະວັນ. ທ່ານຄາດຄະເນວ່າອັດຕາການຍຶດຂອງທາງຫ້ອງການກວດກາປ່າໄມ້ແຂວງດັ່ງກ່າວແມ່ນ10%[105].

ຢ່າງໃດກໍຕາມ, ຜົນການດໍາເນີນການຂອງໜ່ວຍງານເຫຼົ່ານີ້ກ່ຽວຂ້ອງພຽງເຫຼັກໜ້ອຍກັບ (ຫຼືອາດຈະຫຼາຍກວ່າ, ບໍ່ມີເລີຍ)ການຂຸດຄົ້ນໄມ້ຢ່າງຜິດກົດໝາຍຂະໜາດໃຫຍ່ທີ່ກ່າວມາຂ້າງເທິງນັ້ນ ເຊິ່ງດໍາເນີນການພາຍໃຕ້ການຄຸ້ມຄອງຂອງການບຸກເບີກທີ່ດິນທີ່ມີອະນຸຍາດ. ຜົນການຄົ້ນຄວ້າຂອງພວກເຮົາຢັ້ງຢືນການຢືນຢັນທີ່ສະແດງອອກມາໂດຍໜຶ່ງໃນພະນັກງານພາຍໃນທີ່ເຮັດວຽກໃນຂະແໜງປ່າໄມ້ແຂວງສາລະວັນໃນຄວາມເປັນຈິງ ການກວດກາປ່າໄມ້ບໍ່ໄດ້ຄວບຄຸມການຂຸດຄົ້ນໄມ້ ແລະການປ່ຽນແປງຂອງໄມ້ທ່ອນທີ່ຂຸດຄົ້ນໃນຮ່າງຂອງອະນຸຍາດການຂຸດຄົ້ນໄມ້(ໂຄຕ້າ) ເຖິງແມ່ນວ່າ ການເຄື່ອນໄຫວນີ້ຖືກລວມຢູ່ໃນໜ້າວຽກຂອງໜ່ວຍງານດັ່ງກ່າວ[106].

ສາເຫດພື້ນຖານສໍາລັບສະຖານະການນີ້ແມ່ນການຂຸດຄົ້ນໄມ້ທ່ອນພາຍໃຕ້ບັນດາໂຄຕ້າຂຸດຄົ້ນໄມ້ແລະຜົນປະໂຫຍດຈາກການຂາຍໄມ້ທ່ອນນີ້ແມ່ນວົງຈອນຂອງຜົນປະໂຫຍດສໍາລັບບັນດາຜູ້ຕາງໜ້າຂອງເຈົ້າໜ້າທີ່ຂັ້ນແຂວງແລະສູນກາງທີ່ມີອໍານາດຢ່າງເປັນທາງການແລະມີອິດທິພົນນອກລະບົບເກີນອໍານາດຂອງຫ້ອງການກວດກາປ່າໄມ້ແຂວງ (POFI)ແລະ ພະແນກກວດກາປ່າໄມ້ເມືອງ (DOFI). ເຊິ່ງເປັນສາເຫດໃຫ້ບັນດາອະນຸຍາດການຂຸດຄົ້ນໄມ້ທັງຫຼາຍຢູ່ນອກເໜືອຂອງການຄວບຄຸມກວດກາປ່າໄມ້. ໃນສາເຫດດຽວກັນນີ້ ການກວດກາປ່າໄມ້ບໍ່ສາມາດຄວບຄຸມການສະໜອງວັດຖຸດິບເຂົ້າບັນດາໂຮງງານປຸງແຕ່ງ. ອີງຕາມຫົວໜ້າຫ້ອງການກະສິກໍາ ແລະປ່າໄມ້ເມືອງ (DAFO) ສາມັກຄີໄຊ (ແຂວງອັດຕະປື), ພະນັກງານກວດກາປ່າໄມ້ບໍ່ສາມາດກວດກາໂຮງງານແມ້ແຕ່ວ່າມີຫຼັກຖານເປັນກອງໄມ້ທ່ອນທີ່ຜິດກົດໝາຍ[107]. ຫ້ອງການອຸດສາຫະກໍາ ແລະການຄ້າແຂວງ (POIC), ເຊິ່ງມີອໍານາດໜ້າທີ່ກວ້າງຂວາງແລະ

ສະເພາະຢູ່ໃນວົງຈອນນີ້,ບໍ່ມີຄວາມສົນໃຈໃນການສຳຫຼວດບັນດາໂຮງງານຮ່ວມກັບພະນັກງານກວດກາປ່າໄມ້.

ນາຍົກລັດຖະມົນຕີ ທ່ານທອງສິງທຳມະວົງໃນລະຫວ່າງການລົງຢ້ຽມຢາມແຂວງອັດຕະປືຂອງທ່ານ ໃນເດືອນທັນວາ ປີ2013ກ່ຽວກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍຂະໜາດໃຫຍ່ໃນແຂວງດັ່ງກ່າວ ຊີ້ໃຫ້ເຫັນວ່າອີງຕາມເຈົ້າແຂວງດັ່ງກ່າວ "ບາງຄັ້ງ ກຳລັງປ້ອງກັນຄວາມສະຫງົບຂອງພວກເຮົາກຳລັງເລໃຈທີ່ຈະກວດກາພໍ່ຄ້າ ແລະຄົນທີ່ລັກລອບຂຸດຄົ້ນໄມ້ຂອງຊາດ".[108].

ຄວນເພີ່ມຕື່ມອີກວ່າ ໃນທາງວິຊາການການຂຸດຄົ້ນໄມ້ທັງໝົດໃນຮ່າງຂອງການອະນຸຍາດ (ໂຄຕ້າ) ຈະຕ້ອງດຳເນີນຢູ່ພາຍໃຕ້ການຄວບຄຸມຂອງຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO) ແລະເຂົ້າຮ່ວມຢ່າງສະໝ່ຳສະເໝີຂອງພະນັກງານຫ້ອງການກະສິກຳ ແລະປ່າໄມ້ເມືອງ(DAFO) ທີ່ສະໜາມພັກໄມ້ II ແລະສະຖານທີ່ຕັ້ງຂອງການຂຸດຄົ້ນໄມ້. ໂດຍວິທີນີ້ຈະເຮັດໃຫ້ເຈົ້າໜ້າທີ່ຖືວ່າການຂຸດຄົ້ນໄມ້ແບບດັ່ງກ່າວເປັນບຸລິມະສິດທາງດ້ານກົດໝາຍແລະບໍ່ຕ້ອງການການຄວບຄຸມຕື່ມອີກຈາກຫ້ອງການກວດກາປ່າໄມ້ແຂວງ(POFI). ດັ່ງນັ້ນ, ຖືວ່າຫ້ອງການກວດກາປ່າໄມ້ແຂວງ(POFI) ແມ່ນຂະແໜງໜຶ່ງຂອງຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO),ພວກເຮົາສັງເກດເບິ່ງຕົວຢ່າງທີ່ສົມບູນແບບຂອງຂໍ້ຂັດແຍ້ງທາງດ້ານຜົນປະໂຫຍດເມື່ອອຳນາດໃນການນຳໃຊ້ຊັບພະຍາກອນທຳມະຊາດແລະໜ້າທີ່ຄວບຄຸມການນຳໃຊ້ນັ້ນຢູ່ໃນຂະແໜງດຽວກັນ.

ດັ່ງຜົນທີ່ໄດ້ຮັບ, ພະນັກງານກວດກາປ່າໄມ້ພະຍາຍາມສຸມໃສ່ກັກການຂົນສົ່ງໄມ້ທີ່ມີມູນຄ່າສູງຂະໜາດນ້ອຍທີ່ຂຸດຄົ້ນໂດຍປະຊາຊົນທ້ອງຖິ່ນເພື່ອຂາຍໃຫ້ແກ່ໂຮງເລື່ອຍ ຫຼືພໍ່ຄ້າຄົນກາງ, ດັ່ງນັ້ນຈຶ່ງຫຼີກເວັ້ນພື້ນທີ່ທີ່ອາດບໍ່ລົງຮອຍກັນກັບບັນດາສະຖາບັນທີ່ມີອຳນາດ (ຮູບ55).






**ຮູບ55. ໄມ້ດູ່ຊະນິດຕ່າງໆຫຼາຍກວ່າໝູ່ໃນການຈັບກຸມທີ່ເປັນສັນຍາລັກຂອງບັນດາໜ່ວຍງານຄວບຄຸມ. ໄມ້ດູ່ທີ່ຍຶດໄດ້ (ລຽງຕາມເຂັມໂມງຈາກຊ້າຍຂ້າງເທິງ) ທີ່ເກັບມ້ຽນໄວ້: ກ) ຢູ່ດ້ານຫຼັງຂອງຫ້ອງການກວດກາປ່າໄມ້ແຂວງສາລະວັນ (ວັນທີ27ເດືອນກຸມພາ ປີ2013); ຂ) ຢູ່ທີ່ສະຖານີຕຳຫຼວດລາຄອນເພັງ(ວັນທີ6ເດືອນມີນາ ປີ2013); ຄ) ຢູ່ທີ່ທາງເຂົ້າຫ້ອງການເຂດການຄ້າຊາຍແດນສາກົນແດນສະຫວັນແລະຈຸດກວດກາຂອງຕຳຫຼວດບ້ານລະອານ (ວັນທີ18ເດືອນຕຸລາ ປີ2013); ງ) ໃກ້ກັບຫ້ອງການອຸດສາຫະກຳ ແລະການຄ້າແຂວງສາລະວັນ (ວັນທີ06ເດືອນມີນາ ປີ2013).**

ຍິ່ງໄປກວ່ານັ້ນ, ເປັນໂອກາດແກ່ບັນດາພະນັກງານກວດກາທີ່ຈະໄດ້ຮັບຄ່າຕອບແທນທີ່ສູງຂຶ້ນຈາກການຂາຍໄມ້ມູນຄ່າສູງທີ່ຍຶດມາໄດ້ ສົມທຽບກັບການຍຶດເອົາໄມ້ຊະນິດທົ່ວໄປ.

ຕົວຢ່າງ, ອີງຕາມນະໂຍບາຍຂອງກະຊວງອຸດສາຫະກຳ ແລະການຄ້າ (MOIC) ໃນປີ 2011-2012, ລາຄາຂາຍໄມ້ທ່ອນຕ່ຳທີ່ສຸດ ທີ່ສະໜາມພັກໄມ້II ສຳລັບໄມ້ໄມ້ຂະຍຸງ (Dalbergia cochinchinensis) ມີລາຄາແຕກຕ່າງກັນໃນລະຫວ່າງ 3,942- 4,596 ໂດລາ ຕໍ່ແມັດກ້ອນ (ຂຶ້ນຢູ່ກັບຄຸນະພາບ), ສຳລັບໄມ້ຄຳພີ້ ຫຼືໄມ້ປະດູ່ (D. Oliveri)ລະຫວ່າງ1,021–2,188 ໂດລາ,ໄມ້ດູ່ (macrocarpus Pterocar-pus) ລະຫວ່າງ680-793 ໂດລາ.ໃນເວລາດຽວກັນລາຄາຂາຍຕ່ຳທີ່ສຸດຂອງຊະນິດໄມ້ໃຊ້ທົ່ວໄປທີ່ຂຸດຄົ້ນໂດຍບັນດາບໍລິສັດຂຸດຄົ້ນມີລາຄາຕ່ຳທີ່ທຽບບໍ່ໄດ້ເລີຍ: ໄມ້ບາກ (Anisoptera costata) - 54-95 ໂດລາ, ໄມ້ຈິກ (Shorea obtusa) - 45-66 ໂດລາ, ໄມ້ຍາງ (Dipterocarpus spp) - 39-52 ໂດລາ (ໄມ້ແປກ PinusKesiyaຫຼື Pinus merkusii) - 37-58 ໂດລາ.

ພວກເຮົາຄວນສັງເກດວ່າການເຄື່ອນໄຫວຂອງພະນັກງານກວດກາປ່າໄມ້ໃນວົງຈອນຂອງການຍຶດໄມ້ທີ່ມີມູນຄ່າສູງນັ້ນມີຈຳນວນຈຳກັດໂດຍແຜນວຽກ(ສະຖາບັນ) ເປັນທາງການ ແລະບໍ່ເປັນທາງການ. ອີງຕາມການສັງເກດຂອງພວກເຮົາຫ້ອງການກວດກາປ່າໄມ້ແຂວງ (POFI) ຕ້ອງຮັບອະນຸມັດໃນການດຳເນີນຈູ່ໂຈມເຂົ້າຈັບກຸມພາກສະໜາມຈາກຫ້ອງການກະສິກຳ ແລະປ່າໄມ້ເມືອງ(DAFO)ທີ່ຮັບຜິດຊອບເມືອງທີ່ກ່ຽວຂ້ອງນັ້ນ ແລະຕ້ອງໄດ້ຮັບການອະນຸມັດ

ຈາກຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC)ໃນການກວດກາໂຮງງານປຸງແຕ່ງລ່ວງໜ້າ. ເຫັນໄດ້ແຈ່ມແຈ້ງວ່າ, ວິທີຂັ້ນຕອນດັ່ງກ່າວເຮັດໃຫ້ໂອກາດຫຼຸດລົງ (ຫຼືອາດເປັນໄປບໍ່ໄດ້ເລີຍ) ທີ່ຈະດຳເນີນການກວດກາແບບບໍ່ປະກາດລ່ວງໜ້າທີ່ມີປະສິດຕິຜົນເມື່ອຮັບຂໍ້ມູນກ່ຽວກັບການສະໜອງໄມ້ທີ່ຜິດກົດໝາຍໃຫ້ແກ່ບັນດາໂຮງເລື່ອຍ ຍ້ອນວ່າບັນດາໂຮງງານຖືກແຈ້ງລ່ວງໜ້າກ່ຽວກັບການກວດກາທຸກຄັ້ງໂດຍພະນັກງານພາຍໃນໜ່ວຍງານລັດທີ່ກ່ຽວຂ້ອງ. ອີງຕາມພະແນກຕໍ່ຕ້ານການສໍ້ລາດບັງຫຼວງຂອງອຳນາດກວດກາແຫ່ງລັດການກວດກາທຸລະກິດໄມ້ທ່ອນ ແລະການຂຸດຄົ້ນໄມ້ໃນແຂວງສະຫວັນນະເຂດໃນປີ2007ໄດ້ເປີດເຜີຍວ່າ "ພະນັກງານລັດບາງຄົນໄດ້ສົມຮູ້ຮ່ວມຄິດກັບຜູ້ປະກອບການທຸລະກິດຂຸດຄົ້ນໄມ້ດູ່ທີ່ຜິດກົດໝາຍ 1,400 ແມັດກ້ອນ".[109] (ຮູບ56).






**ຮູບ56. ຂະບວນລົດຈັກ 6 ຄັນຂອງຊາວຫວຽດນາມທີ່ແກ່ໄມ້ດູ່ໄປຕາມທາງໄປຫາໂຮງງານປຸງແຕ່ງໄມ້ (ປະມານ 2.3 ກິໂລແມັດ) ໃກ້ບ້ານຕຳຫຼວງ (ເມືອງນອງ, ແຂວງສະຫວັນນະເຂດ), ໃນວັນທີ18ເດືອນຕຸລາ ປີ2014. ອີງຕາມກຳມະກອນໂຮງງານດັ່ງກ່າວຜະລິດເຄື່ອງເຟີນີເຈີເພື່ອສົ່ງອອກໄປຫວຽດນາມ (ຕັ້ງຢູ່ພຽງແຕ່32.4 ກິໂລແມັດໂດຍເສັ້ນທາງຈາກຊາຍແດນແດນສະຫວັນ-ລາວບາວ). ການຂົນສົ່ງໄມ້ດູ່ມີຂຶ້ນເປັນປົກກະຕິໃນເຂດພື້ນທີ່ນີ້ແລະຂົນສົ່ງໂດຍບໍ່ມີການປົກປິດເລີຍໃນຊ່ວງເວລາກາງເວັນ.**

ການຄວບຄຸມການຂົນສົ່ງໄມ້ທ່ອນຢູ່ຕາມເສັ້ນທາງ ຈຸດກວດກາແມ່ນໜຶ່ງໃນບັນດາເຄື່ອງມືສຳຄັນທີ່ນຳໃຊ້ໂດຍຫ້ອງການກວດກາປ່າໄມ້ແຂວງ (POFI) ເພື່ອກັກໄມ້ທີ່ຜິດກົດໝາຍ. ໃນຂອບຂອງການຄົ້ນຄວ້ານີ້ພວກເຮົາໄດ້ໄປຢ້ຽມຢາມຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງ (POFI) 7 ແຫ່ງໃນແຂວງສາລະວັນ (2), ເຊກອງ (2) ອັດຕະປື (2) ແລະຈຳປາສັກ (1). ລວມກັນທັງໝົດພວກເຮົາຮູ້ວ່າມີຈຸດກວດກາ14 ແຫ່ງທີ່ປະຕິບັດວຽກເປັນປົກກະຕິ ຫຼືຕາມລະດູການໃນແຂວງເຫຼົ່ານີ້ ລວມທັງຈຸດກວດກາ 5 ແຫ່ງຢູ່ທາງເຂົ້າດ່ານຊາຍແດນສາກົນ, ເຖິງແມ່ນວ່າຈຳນວນຂອງຈຸດກວດກາມີຈຳນວນຫຼາຍ. ແຕ່ໃນບັນດາເສັ້ນທາງທີ່ມີການຂົນສົ່ງໄມ້ທ່ອນບໍ່ມີການຕັ້ງຈຸດກວດກາ. ຕົວຢ່າງ, ບໍ່ມີຈຸດກວດກາຕັ້ງຢູ່ໃກ້ກັບດ່ານຊາຍແດນສາກົນ ກະລຶມ - ໄຕຢາງ ທີ່ເປີດໃຫ້ບໍລິການໃນເດືອນເມສາປີ2013.ການສົ່ງອອກໄມ້ທ່ອນໂດຍຜ່ານດ່ານຊາຍແດນສາກົນນີ້ຖືກສຶກສາຢູ່ໃນພາກ "ກໍລະນີສຶກສາທີ2: ການບຸກເບີກສຳລັບການກໍ່ສ້າງເສັ້ນທາງບ້ານຜານອນ ຫາ ບ້ານທົ່ງສາ (ແຂວງເຊກອງ)".

ຈຸດກວດກາເກືອບທຸກຈຸດບໍ່ໄດ້ເປີດດໍາເນີນວຽກຢ່າງເປັນປົກກະຕິ. ບາງຈຸດໄດ້ປິດໃນລະຫວ່າງລະດູຝົນ ຈາກວັນທີ1ເດືອນມິຖຸນາເຖິງ ວັນທີ31ເດືອນຕຸລາໃນເມື່ອການຂຸດຄົ້ນໄມ້ໃນປ່າຕ້ອງງົດແລະ ໄມ້ທ່ອນທີ່ຂຸດຄົ້ນທັງໝົດຕ້ອງເກັບມ້ຽນໄວ້ທີ່ສະໜາມ II ຕາມກົດໝາຍລາວໄດ້ວາງໄວ້. ຄວນສັງເກດວ່າ ການຈໍາກັດນີ້ບໍ່ເປັນທີ່ເດັດຂາດ ແລະມີຊ່ອງໂວ່ຫຼາຍ: ເນື່ອງຈາກວ່າບັນດາໂຄງການພັດທະນາພື້ນຖານ ໂຄງລ່າງມີເວລາຈໍາກັດລັດຖະບານສາມາດອອກອະນຸຍາດເພື່ອສືບຕໍ່ການຂຸດຄົ້ນ ແລະຂົນສົ່ງໄມ້ໃນໄລຍະ ລະດູຝົນນີ້. ດັ່ງທີ່ສະແດງຢູ່ຂ້າງເທິງ(ຮູບ10),ການຂົນສົ່ງໄມ້ທ່ອນແລະໄມ້ແປຮູບກໍຍັງດໍາເນີນຕໍ່ໃນລະດູ ຝົນເຊັ່ນກັນ (ມີຈໍານວນຫຼຸດລົງແທ້ໆພຽງໃນຕອນທ້າຍຂອງລະດູຝົນເດືອນກັນຍາຫາເດືອນຕຸລາເທົ່ານັ້ນ). ຕົວຢ່າງ, ຈຸດກວດກາດາກຕາອອກຂອງຫ້ອງການກວດກາປ່າໄມ້ແຂວງ (POFI) ໃນເມືອງດາກຈຶງ (ແຂວງເຊກອງ) ມີເຈດຕະນາເບື້ອງຕົ້ນເພື່ອຄວບຄຸມການສົ່ງອອກໄມ້ໄປຫວຽດນາມ, ໄດ້ປິດໃນລະຫວ່າງ ລະດູຝົນ ປີ2012. ຢ່າງໃດກໍຕາມ, ພວກເຮົາໄດ້ຮັບຫຼັກຖານວ່າໃນລະດູແລ້ງ ປີ2012 ໄມ້ທ່ອນທີ່ຂຸດຄົ້ນ ໃນຮ່າງຂອງໂຄຕ້າສໍາລັບການບຸກເບີກເພື່ອສ້າງເສັ້ນທາງຖືກສົ່ງອອກໂດຍຜ່ານດ່ານຊາຍແດນສາກົນ ດາກຕາອອກ (ໃຫ້ເບິ່ງພາກ«ການປະເມີນການຂຸດຄົ້ນໄມ້ຢ່າງຜິດກົດໝາຍໃນລະດັບຊາດ»). ຄວນສັງເກດວ່າອີງຕາມພະນັກງານພາສີຫວຽດນາມຈາກດ່ານຊາຍແດນສາກົນນໍ້າຢາງທີ່ຕັ້ງຢູ່ເບື້ອງຫວຽດ ນາມ,ລະດູແລ້ງແທ້(ເຊັ່ນ: ກ່ຽວຂ້ອງກັບສະພາບອາກາດໃນທ້ອງຖິ່ນ) ໃນຂົງເຂດນີ້ເລີ່ມຈາກກາງເດືອນມິຖຸ ນາຫາເດືອນສິງຫາ.[110].

ອີງຕາມການສັງເກດຂອງພວກເຮົາ ຊ່ວງລະດູແລ້ງບັນດາຈຸດກວດກາຍັງບໍ່ທັນປະຕິບັດໜ້າທີ່ສະໝໍ່າສະ ເໝີເຊັ່ນກັນ.

- ຕົວຢ່າງ, ໃນລະຫວ່າງການລົງໄປຢ້ຽມຢາມຂອງພວກເຮົາທີ່ຈຸດກວດກາ ດາກຕາອອກ ໃນວັນທີ05 ເດືອນທັນວາ ປີ2012 ພະນັກງານກວດກາຍັງບໍ່ປະຈໍາການ.
- ພະນັກງານກວດກາບໍ່ໄດ້ປະຈໍາການໃນວັນທີ01ເດືອນທັນວາ ປີ2012ຢູ່ທີ່ຈຸດກວດກາພອນສະ ຫວັນ (ສາລະວັນ). ຈຸດກວດການີ້ມີໜ້າທີ່ຄວບຄຸມການໄຫຼວຽນຂອງໄມ້ທ່ອນຈາກບັນດາແຂວງ ພາກໃຕ້ຕາມເສັ້ນທາງເລກທີ13, ທີ່ເປັນລະບົບເສັ້ນທາງຫຼວງແຫ່ງຊາດ.
- ຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງ (POFI) ເຊກອງທີ່ບ້ານພອນບໍ່ໄດ້ປະຕິບັດງານ ໃນເດືອນມີນາ ປີ2014. ຈຸດກວດການີ້ຕັ້ງຢູ່ເສັ້ນທາງລະມາມ-ກະລຶມທີ່ໃຊ້ສໍາລັບການຂົນສົ່ງໄມ້ ທ່ອນຈາກເມືອງກະລຶມ. ເຫດຜົນເປັນທາງການທີ່ພະນັກງານກວດກາບໍ່ປະຈໍາການແມ່ນ ອີງຕາມ ຂໍ້ມູນເປັນທາງການ ບໍ່ມີການຂົນສົ່ງໄມ້ທ່ອນຢູ່ໃນເຂດພື້ນທີ່ດັ່ງກ່າວ.

ຈຸດກວດກາມີໜ້າທີ່ຄວບຄຸມການຂົນສົ່ງໄມ້ທ່ອນຂອງທ້ອງຖິ່ນ ລົດບັນທຸກໄມ້ທ່ອນຖືກສະກັດ ແລະກວດຄົ້ນຢ່າງເລືອກເຟັ້ນ. ທີ່ຈຸດກວດກາບ້ານພອນສະຫວັນ (ສາລະວັນ) ພະນັກງານກວດກາກວດ ພຽງລົດບັນທຸກທີ່ສົງໄສມີການຂົນສົ່ງໄມ້ທ່ອນທີ່ຜິດກົດໝາຍເທົ່ານັ້ນ ໂດຍອີງ ໃສ່ໜ່ວຍລາຊະການລັບທີ່ເກັບກໍາຂໍ້ມູນຈາກຜູ້ແຈ້ງຂ່າວຈາກແຂວງສາລະວັນ. ອີງຕາມພະນັກງານກວດກາ

ລົດບັນທຸກສ່ວນໃຫຍ່ທີ່ຜ່ານຈຸດກວດການີ້ແມ່ນລົດບັນທຸກໄມ້ທ່ອນຂອງບໍລິສັດພອນສັກ, ເຊິ່ງດຳເນີນການຂຸດຄົ້ນໄມ້ຢູ່ພາຍໃຕ້ສັນຍາສຳລັບບຸກເບີກອ່າງເກັບນ້ຳເຂື່ອນເຊກອງ 4, ແລະສຳປະທານໃນສຳຫຼວດແຮ່ຖ່ານຫີນແລະຂຸດຄົ້ນບໍ່ແຮ່. ລົດບັນທຸກເຫຼົ່ານີ້ຕ້ອງສະແດງພຽງແຕ່ເອກະສານເທົ່ານັ້ນ ໂດຍບໍ່ໃຫ້ກວດກາຄວາມແຕກຕ່າງກັນຢູ່ໃນລົດ.[111].

ແຕ່ລະກໍລະນີຂອງການຈັບກຸມພົວພັນເຖິງການຂົນສົ່ງໄມ້ທີ່ມີມູນຄ່າສູງ. ໃນປີ 2011ລົດສີ່ຄັນບັນທຸກໄມ້ດູ່44 ແມັດກ້ອນຖືກຈັບກຸມ. ລົດບັນທຸກຂອງໂຮງງານຊີມັງລາວ-ສະຫວັນນະເຂດທີ່ຂົນສົ່ງທ່ອນໄມ້ດູ່ຖືກຈັບກຸມໃນຕົ້ນປີ2013 (ຮູບ57).

ໃນເວລາດຽວກັນ, ພະນັກງານກວດກາປ່າໄມ້ໄດ້ລາຍງານວ່າສ່ວນໃຫຍ່ໄມ້ດູ່ຖືກຂົນສົ່ງໂດຍລົດຕູ້ທີ່ມີຄວາມໄວສູງ ເຊິ່ງຄົນຂັບສາມາດແລ່ນຜ່າຈຸດກວດກາໂດຍບໍ່ມີການຢຸດແລະຫຼົບໜີການນຳຈັບກຸມຖ້າຫາກວ່າຈຳເປັນ.




**ຮູບ57. ລົດບັນທຸກຂອງໂຮງງານຊີມັງລາວ-ສະຫວັນນະເຂດທີ່ຈັດສົ່ງໄມ້ດູ່ຖືກຈັບກຸມໃນຕົ້ນປີ2013ທີ່ສະຖານີຕຳຫຼວດລະຄອນເພັງ.**

ອີງຕາມພະນັກງານກວດກາ ບັນດາຈຸດກວດຕັ້ງຢູ່ທາງເຂົ້າດ່ານຊາຍແດນສາກົນ (ຍາລາຍ, ຫຼັກສາມສິບ ແລະດ່ານຫຼັກລ້ອຍ), ລົດບັນທຸກໄມ້ທັງໝົດເຊັ່ນດຽວກັນກັບລົດບັນທຸກຈັດສົ່ງສິນຄ້າອື່ນໆທີ່ສົງໄສວ່າມີການຂົນສົ່ງໄມ້ທ່ອນທີ່ຜິດກົດໝາຍແມ່ນຖືກກວດສອບ. ຄຽງຄູ່ກັບກວດກາເອກະສານຈຳເປັນທັງໝົດທີ່ມີສຳລັບການສົ່ງອອກໄມ້ທ່ອນ (ລວມທັງ ສັນຍາການຂາຍແລະຈັດຊື້ກັບຫ້ອງການອຸດສາຫະກຳແລະການຄ້າແຂວງ(POIC),ລາຍການໄມ້ ແລະອື່ນໆ), ຍັງໄດ້ກວດກາຄວບຄຸມຂະໜາດຕື່ມອີກ.ຢ່າງໃດກໍຕາມ, ກໍລະນີບໍ່ມີເອກະສານແລະການແຈ້ງບໍ່ຖືກຕ້ອງ (ປະເມີນບໍລິມາດຕ່ຳ, ແຈ້ງສ່ວນປະກອບຂອງຊະນິດໄມ້ບໍ່ຖືກຕ້ອງແລະອື່ນໆ) ແມ່ນບໍ່ຄ່ອຍມີ (ຫຼັກສາມສິບ), ຫຼືບໍ່ບັນທຶກໄວ້ຈົນຮອດດຽວນີ້ (ດ່ານຫຼັກລ້ອຍ). ໃນບັນດາກໍລະນີການແຈ້ງບໍ່ຖືກຕ້ອງຢູ່ທີ່ຈຸດກວດກາຫຼັກສາມສິບມີໜ້ອຍສຳລັບກໍລະນີການແຈ້ງຊື່ຊະນິດໄມ້ແລະການຂົນສົ່ງໄມ້ແປຮູບທີ່ບໍ່ຖືກຕ້ອງ ແທນທີ່ຈະແຈ້ງຜະລິດຕະພັນສຳເລັດຮູບເລີຍຖືກກ່າວເຖິງ. ຈຸດກວດກາດ່ານຫຼັກລ້ອຍໄດ້ກວດພົບພຽງແຕ່ກໍລະນີໜຶ່ງເທົ່ານັ້ນ

ໃນຂະນະມີການຂົນສົ່ງໄມ້ທ່ອນທີ່ຖືກຕ້ອງຕາມກົດໝາຍຈາກໂຄງການກໍ່ສ້າງເຂື່ອນໄຟ ຟ້າມີໄມ້ມູນຄ່າສູງທີ່ຜິດກົດໝາຍເຊື່ອງຢູ່ນຳ.[112].

ທາງດ້ານທິດສະດີ, ລະບົບການຄວບຄຸມແບບດັ່ງກ່າວຄວນກີດກັນການຂົນສົ່ງໄມ້ທ່ອນຂະໜາດໃຫຍ່ທີ່ບໍ່ມີເອກະສານອະນຸຍາດຜ່ານດ່ານຊາຍແດນທາງການ. ເນື່ອງຈາກວ່າບໍລິມາດຂອງໄມ້ທ່ອນທີ່ນຳເຂົ້າຈາກປະເທດລາວອີງຕາມບັນດາປະເທດນຳເຂົ້າ ມີຈຳນວນເກີນການຂຸດຄົ້ນໄມ້ທີ່ມີເອກະສານໃນລາວຫຼາຍເທົ່າ ພວກເຮົາສາມາດແນະນຳວ່າການສົ່ງອອກໄມ້ທ່ອນລາວເກືອບທັງໝົດບໍ່ໄດ້ຈົດທະບຽນຢູ່ທີ່ດ່ານຊາຍແດນ.

ຕົວຢ່າງ, ອີງຕາມຂໍ້ມູນຈາກພະແນກພາສີຫວຽດນາມ ເອດອດ (ແຂວງເວ້) ໃນຊ່ວງເວລາຈາກປີ2004 ຫາເດືອນສິງຫາ ປີ2012ມີໄມ້ທ່ອນປະມານ 28 ພັນແມັດກ້ອນຖືກນຳເຂົ້າຂ້າມດ່ານຊາຍແດນສາກົນ ເອດອດ-ຕາວາງ (ໃນເຂດປ່າສະຫງວນເຊຊັບ ເມືອງກະລຶມ, ແຂວງເຊກອງ). ຢ່າງໃດກໍຕາມ, ອີງຕາມຫ້ອງການກວດກາປ່າໄມ້ແຂວງເຊກອງ, ການສົ່ງອອກໄມ້ທ່ອນຜ່ານດ່ານຊາຍແດນດຽວກັນນີ້ໃນຊ່ວງເວລາທີ່ຄ້າຍຄືກັນນີ້ ມີພຽງແຕ່ 3,169 ແມັດກ້ອນ, ເຊັ່ນ: ມີໜ້ອຍກວ່າ 9ເທົ່າ.

ສຳພາດພະນັກງານຫ້ອງການກວດກາປ່າໄມ້ແຂວງທີ່ຈຸດກວດກາສະແດງໃຫ້ເຫັນການຄາດຄະເນຂອງເຂົາເຈົ້າກ່ຽວກັບຈຳນວນສະເລ່ຍຂອງລົດບັນທຸກທີ່ຜ່ານຈຸດກວດກາ ໃນລະຫວ່າງລະດູເປີດການຂຸດຄົ້ນໄມ້ທີ່ຜ່ານມາໄດ້ຄາດຄະເນຕ່ຳກວ່າຄວາມເປັນຈິງຫຼາຍເມື່ອສົມທຽບກັບການຄາດຄະ ເນທີ່ເຮັດຂຶ້ນບົນພື້ນຖານຂໍ້ມູນໃນການສົ່ງອອກທີ່ມີເອກະສານ(ຕາຕະລາງ 13).

ທີ່ຈຸດກວດກາພອນສະຫວັນ ພະນັກງານກວດກາຍັງເວົ້າວ່າໄມ້ທ່ອນເກືອບທັງໝົດທີ່ຜ່ານໄປນີ້ແມ່ນຜະລິດຕະພັນໄມ້ແປຮູບ ຫຼືໄມ້ສຳເລັດຮູບ. ກົງກັນຂ້າມກັບຂໍ້ມູນທາງການ ເຊິ່ງສະແດງໃຫ້ເຫັນວ່າ81 %ຂອງໄມ້ທ່ອນຖືກຂົນສົ່ງຜ່ານຈຸດກວດກາພອນສະຫວັນໃນປີ2012 ແມ່ນໄມ້ຈາກການສຳປະທານຂອງບໍລິສັດພອນສັກທີ່ສົ່ງໄປເພື່ອປຸງແຕ່ງຢູ່ໂຮງງານແຂວງຄຳມ່ວນຂອງບໍລິສັດ.

ເຊັ່ນດຽວກັນນີ້, ທີ່ຈຸດກວດກາດ່ານຫຼັກລ້ອຍພະນັກງານໄດ້ກ່າວວ່າ ໄມ້ທ່ອນທີ່ສົ່ງອອກແມ່ນໄມ້ແປຮູບ ແລະ"ບໍ່ເຫັນວ່າແມ່ນໄມ້ທ່ອນ". ຢ່າງໃດກໍຕາມ, ອີງຕາມການສັງເກດຂອງພວກເຮົາແລະຜູ້ຊ່ຽວຊານຫວຽດນາມບາງຄົນ.[113], ການສົ່ງອອກໄມ້ທ່ອນໂດຍຜ່ານດ່ານຊາຍແດນສາກົນ ພູເກືອ-ໂບວາຍ ທີ່ໃກ້ທີ່ສຸດ ສ່ວນໃຫຍ່ແມ່ນໄມ້ທີ່ຍັງບໍ່ໄດ້ປຸງແຕ່ງ (ຮູບ55).

**ຕາຕະລາງ 13. ການຄາດຄະເນຈຳນວນຂອງລົດບັນທຸກໄມ້ທ່ອນຜ່ານຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງໃນບັນດາແຂວງພາກໃຕ້ຂອງລາວ ແລະ ຈຳນວນການຈັບກຸມຍານພາຫະນະທີ່ຂົນສົ່ງໄມ້ທ່ອນທີ່ຜິດກົດໝາຍ.**

| ຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງ | ບໍລິມາດຂອງໄມ້ທ່ອນທີ່ສົ່ງອອກໃນປີ2012, ແມັດກ້ອນ | ຈຳນວນລົດບັນທຸກໄມ້ທ່ອນ | | ກໍລະນີ |
|---|---|---|---|---|
| | | ການຄາດຄະເນຂອງຫ້ອງການກວດກາປ່າໄມ້ແຂ | ການຄາດຄະເນອີງໃສ່ບໍລິມາດທີ່ລາຍງ | |

| | | | | |
|---|---|---|---|---|
| | | ວງ (POFI) | ານ | |
| ຍາລາຍ (ສາລະວັນ) ເສັ້ນທາງເລກທີ15B ໃກ້ດ່ານຊາຍແດນສາກົນ ໄປຫວຽດນາມ | 10,312 – ໄມ້ກົມ 2,425 - ໄມ້ແປຮູບ | 6 / ເດືອນ | 577-637 / ປີ 48-53 / ເດືອນ 1.6-1.7 / ມື້ | ບໍ່ມີ |
| ພອນສະຫວັນ (ສາລະວັນ) ເສັ້ນທາງເລກທີ13 ເຂດແດນຕິດກັບສະຫວັນນະເຂດ | 40,774 - ໄມ້ກົມ 3,030 - ໄມ້ແປຮູບ | 0.5 / ມື້ | 1,095-2,190 / ປີ 176-183 / ເດືອນ 5.8-6 / ມື້ | 2012 – 0 2011 – 4 ລົດບັນທຸກ 44 ແມັດກ້ອນ |
| ດ່ານຫຼັກລ້ອຍ(ອັດຕະປື) ເສັ້ນທາງເລກທີ11 ໃກ້ກັບດ່ານຊາຍແດນສາກົນ ພູເກືອ-ໂບວາຍ ໄປຫວຽດນາມ | 194,224 | 10-100 / ເດືອນ | 4,856-9,711 / ປີ 405-809 / ເດືອນ 13.3-26.6 / ມື້ | 2012 – 1 |
| ຫຼັກສາມສິບ (ຈຳປາສັກ) ເສັ້ນທາງເລກທີ16 ໃກ້ກັບດ່ານຊາຍແດນສາກົນ ວັງເຕົ່າ-ຊອງເມັກ ໄປໄທ | 17,668 – ໄມ້ແປຮູບ 5,303 - ໄມ້ສຳເລັດຮູບ | 40 / ເດືອນ | 574-1,149 / ປີ 48-96 / ເດືອນ 1.6-3.1 / ມື້ | 2012 - 0 2011 - ມີຈຳນວນໜຶ່ງ |

ໝາຍເຫດ: ສັນນິຖານວ່າລົດບັນທຸກໄມ້ທ່ອນໜຶ່ງຄັນ ບັນທຸກ:

- 20 ແມັດກ້ອນຂອງໄມ້ທ່ອນໂດຍສະເລ່ຍ;
- 20 ແມັດກ້ອນຂອງໄມ້ແປຮູບ ຫຼື ຜະລິດຕະພັນສຳເລັດຮູບເປັນການບັນທຸກໂດຍສະເລ່ຍທີ່ຕ່ຳ;

- 40 ແມັດກ້ອນຂອງໄມ້ແປຮູບ ຫຼື ຜະລິດຕະພັນສຳເລັດຮູບເປັນການບັນທຸກໂດຍສະເລ່ຍທີ່ສູງ.

ອີງຕາມພະນັກງານຫ້ອງການກວດກາປ່າໄມ້ແຂວງ (POFI) ຢູ່ທີ່ຈຸດດກວດກາຫຼັກສາມສິບບໍລິມາດໂດຍສະເລ່ຍສຳລັບລົດບັນທຸກໜຶ່ງຄັນແມ່ນ 23 ແມັດກ້ອນ,ອີງຕາມພະນັກງານຫ້ອງການກວດກາປ່າໄມ້ແຂວງ (POFI)ຢູ່ທີ່ຈຸດກວດກາຍາລາ ບໍລິມາດໂດຍສະເລ່ຍສຳລັບລົດບັນທຸກໜຶ່ງຄັນແມ່ນ 20 ແມັດກ້ອນ.



**ຮູບ58. ລົດບັນທຸກຫວຽດນາມບັນທຸກໄມ້ທ່ອນທີ່ທາງເຂົ້າດ່ານຊາຍແດນສາກົນ ພູເກືອ-ໂບວາຍ,ວັນທີ06ເດືອນທັນວາ ປີ2013 (ຊ້າຍມື). ພາບຖ່າຍທາງດາວທຽມ (ວັນທີ15ເດືອນມັງກອນ ປີ2014) ເດີ່ນຂົນສົ່ງທີ່ເຕັມໄປດ້ວຍໄມ້ທ່ອນຈາກສປປລາວໃນບ້ານໄປຣແຄນ (ແຂວງກົນຕົມ) ປະມານ 16 ກິໂລແມັດຫ່າງຈາກດ່ານຊາຍແດນສາກົນ ພູເກືອ-ໂບວາຍ (ຂວາມື).**

ອີງຕາມວິທີຂັ້ນຕອນປັດຈຸບັນ, ຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງຄວນມີການສະໜອງບົດລາຍງານປະຈຳອາທິດ, ປະຈຳເດືອນແລະປະຈຳໄຕມາດໃຫ້ແກ່ຫ້ອງການໃຫຍ່ ແລະເກັບຮັກສາສຳເນົາຂອງເອກະສານດັ່ງກ່າວໄວ້ຢ່າງໜ້ອຍໜຶ່ງປີ. ໝາຍຄວາມວ່າຂໍ້ມູນສຳຄັນຖືກຮວມຮວມເປັນປົກກະຕິ ແລະເອົາມາໃຊ້ໄດ້ຢ່າງສະໝໍ່າສະເໝີລວມທັງໃນກໍລະນີມີການໝູນວຽນພະນັກງານ.

ຄວາມແຕກຕ່າງທີ່ສຳຄັນຂອງການປະເມີນຂອງພະນັກງານທີ່ມີການສົ່ງອອກທີ່ໄດ້ບັນທຶກເຫຼົ່ານີ້ຖືກເຝົ້າສັງເກດຢູ່ເກືອບທຸກຈຸດກວດກາຂອງຫ້ອງການກວດກາປ່າໄມ້ແຂວງ.ປະກົດວ່າຄວາມແຕກຕ່າງເຫຼົ່ານີ້ເປັນລະບົບແລະມີຄວາມຕັ້ງໃຈ, ແລະບໍ່ພຽງແຕ່ແມ່ນເຫດການໂດດດ່ຽວທີ່ບັງເອີນສັງເກດເຫັນໂດຍພວກເຮົາເທົ່ານັ້ນ. ກ່ຽວກັບເລື່ອງນີ້ຄວນກ່າວຕື່ມວ່າຫົວໜ້າດ່ານຊັ່ງນໍ້າໜັກທ່າແຕງ, ຊຶ່ງເປັນສ່ວນໜຶ່ງຂອງຂະແໜງການຂົນສົ່ງຂອງພະແນກໂຍທາທິການ ແລະການຂົນສົ່ງ(DPWT)ເຊກອງ, ໄດ້ໃຫ້ການປະເມີນທີ່ເກືອບຈະຊັດເຈນ ກ່ຽວກັບຈຳນວນຂອງລົດທີ່ບັນທຸກໄມ້ທ່ອນຜ່ານຈຸດກວດກາດັ່ງກ່າວນັ້ນໃນປີ 2012. ການປະເມີນຂອງທ່ານ (ມີລົດບັນທຸກໜ້ອຍກວ່າ 300ຄັນ) ແມ່ນພຽງແຕ່ 14%ໜ້ອຍກວ່າຈຳນວນ (342ຄັນ),ຄຳນວນບົນພື້ນຖານປຶ້ມບັນທຶກຖ້ຽວລົດ ແລະສຳເນົາໃບອະນຸຍາດຂອງການຂົນສົ່ງເທົ່ານັ້ນ.[114].

ການຄາດຄະເນບໍລິມາດຂອງການຈາລະຈອນໄມ້ທ່ອນທີ່ຕ່ຳ ໂດຍເຈົ້າໜ້າທີ່ຫ້ອງການກວດກາປ່າໄມ້ແຂວງສາມາດຕິດຕາມຈາກການຂາດຜົນຂອງການຄວບຄຸມການໄຫຼວຽນຂອງໄມ້ທ່ອນຈາກບັນດາໂຄຕ້າ"ທີ່ຖືກຕາມກົດໝາຍ" ເຊັ່ນດຽວກັນກັບຄວາມບໍ່ເຕັມໃຈໃນການແລກປ່ຽນຂໍ້ມູນຂ່າວສານທີ່ຖືວ່າເປັນເລື່ອງ "ລະອຽດອ່ອນ". ການສົ່ງອອກຢ່າງຕໍ່ເນື່ອງຂອງໄມ້ທີ່ຍັງບໍ່ປຸງແຕ່ງສະແດງອອກມາເຖິງຄວາມບໍ່ມີປະສິດຕິພາບຂອງນະໂຍບາຍຂອງລັດຖະບານທີ່ດຳເນີນການມາຫຼາຍກວ່າທົດສະວັດກ່ຽວກັບການພັດທະນາປຸງແຕ່ງໄມ້ຮອບດ້ານໃນລາວ,ແລະບັນດາເຈົ້າໜ້າທີ່ອາດຖືວ່າເລື່ອງນີ້ເປັນສິ່ງທີ່ລະອຽດອ່ອນເກີນໄປທີ່ຈະແຈ້ງໃຫ້ຮູ້. ຂໍ້ມູນກ່ຽວກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍພາຍໃຕ້ການຄຸ້ມຄອງຂອງການອະນຸຍາດສຳລັບການບຸກເບີກທີ່ດິນສາມາດເກີນບໍລິມາດຂອງການຂຸດຄົ້ນໄມ້ທ່ອນຈາກແຫຼ່ງທີ່ອະນຸຍາດ ເລື່ອງນີ້ສາມາດຖືວ່າເປັນສິ່ງ "ທີ່ລະອຽດອ່ອນ" ເຊັ່ນດຽວກັນ.

ໃນລະຫວ່າງການປຶກສາຫາລືກ່ຽວກັບການຂຸດຄົ້ນໄມ້ທ່ອນທີ່ຜິດກົດໝາຍທີ່ດຳເນີນພາຍໃຕ້ການຄຸ້ມຄອງຂອງການອະນຸຍາດສຳລັບການບຸກເບີກທີ່ດິນພາຍໃນເຂດນ້ຳຖ້ວມຂອງອ່າງເກັບນ້ຳຫຼືໂຄງການກໍ່ສ້າງເສັ້ນທາງພະນັກງານອາວຸໂສຈາກຫ້ອງການກະສິກຳ ແລະປ່າໄມ້ແຂວງ(PAFO), ຫ້ອງການກວດກາປ່າໄມ້ແຂວງ (POFI) ແລະຫ້ອງການອຸດສາຫະກຳ ແລະການຄ້າແຂວງ(POIC)ອັດຕະປືໄດ້ລະບຸວ່າໃນປັດຈຸບັນນີ້ບໍ່ມີການລະເມີດແບບດັ່ງກ່າວໃນແຂວງຂອງຕົນ.[115].

ເຈົ້າໜ້າທີ່ຮັບຜິດຊອບບໍ່ແມ່ນທັງໝົດ (ໂດຍສະເພາະຢູ່ຂັ້ນແຂວງ) ພ້ອມທີ່ຈະຮັບຮູ້ຄວາມຈິງເຖິງການມີຢູ່ຂອງໄມ້ທ່ອນທີ່ຜິດກົດໝາຍຂະໜາດໃຫຍ່ໃນການສົ່ງອອກໄມ້ລາວ. ຕົວຢ່າງ, ຮອງຫົວໜ້າຫ້ອງການກວດກາປ່າໄມ້ແຂວງ (POFI) ອັດຕະປືຖືວ່າໄມ້ທີ່ຂຸດຄົ້ນຢ່າງຜິດກົດໝາຍນັ້ນສ່ວນໃຫຍ່ແມ່ນພຽງແຕ່ໄປສະໜອງຕະຫຼາດທ້ອງຖິ່ນ ແລະມີພຽງສ່ວນໜ້ອຍທີ່ສຸດຂອງໄມ້ທີ່ສົ່ງອອກໄປຕ່າງປະເທດເທົ່ານັ້ນ.[116].

ວິເຄາະການລົງໂທດສຳລັບການລະເມີດທີ່ກວດພົບໂດຍພະແນກກວດກາປ່າໄມ້ເມືອງ (DOFI)ແລະແຂວງ (POFI) ການລະເມີດສະແດງໃຫ້ເຫັນວ່າສ່ວນໃຫຍ່ກໍລະນີຕ່າງໆທີ່ກ່ຽວຂ້ອງກັບໄມ້ທ່ອນທີ່ຜິດກົດໝາຍຖືວ່າເປັນອາຊະຍາກຳທີ່ມີຜົນຕາມມາພຽງເຫຼັກນ້ອຍ. ອີງຕາມການຕອບສະໜອງຄວາມຍຸຕິທຳທາງຄະດີອາຍາ(2014),ພຽງແຕ່ 15 (14%) ຂອງຈຳນວນ 1,072 ກໍລະນີໂດຍລວມທີ່ສືບສວນໂດຍພະແນກກວດກາປ່າໄມ້ເມືອງ (DOFI)ແລະແຂວງ (POFI) ໃນປີ2011-2014ຖືກສົ່ງຕໍ່ໄປໃຫ້ໄອຍະການຕັດສິນ, ໃນຂະນະທີ່ກໍລະນີເຫຼົ່ານີ້ບໍ່ຖືກດຳເນີນຄະດີໃນຂັ້ນສານແລະຕັດສິນລົງໂທດເລີຍ. ການລົງໂທດຕົ້ນຕໍສຳລັບການລະເມີດດັ່ງກ່າວແມ່ນການລົງໂທດທາງຝ່າຍບໍລິຫານແລະອົບຮົມຄືນ (58 ແລະ 11% ຕາມຄວາມເໝາະສົມ). ບັນດາຜູ້ຂຽນຂອງການວິເຄາະນີ້ສັງເກດຢ່າງສະຫຼາດວ່າ "ອັດຕາການສົ່ງຕໍ່ໜ້ອຍກວ່າ 1.4%ໃນການດຳເນີນຄະດີແມ່ນໜ້ອຍຫຼາຍສຳລັບອົງການຈັດຕັ້ງໜຶ່ງທີ່ເບິ່ງວ່າເປັນການຕອບໂຕ້ຂອງລັດຖະບານໃນເບື້ອງຕົ້ນເພື່ອແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບການຂຸດຄົ້ນ

ໄມ້ທີ່ຜິດກົດໝາຍ, ການບຸກລຸກທີ່ດິນ, ການລັກລອບຄ້າໄມ້ແລະສັດປ່າແລະການສໍ້ລາດບັງຫຼວງກ່ຽວຂ້ອງປ່າໄມ້".[117]. ອີງຕາມຂໍ້ມູນທີ່ສະໜອງໃຫ້ໂດຍຫ້ອງການກວດກາປ່າໄມ້ແຂວງອັດຕະປື, ສາລະວັນ ແລະຈຳປາສັກ,125 ກໍລະນີທີ່ກ່ຽວຂ້ອງໄມ້ທ່ອນໃນລະດູການ 2011-2012ພຽງແຕ່ 19 (15%) ຖືກສົ່ງໄປພະແນກຍຸຕິທຳ ຫຼື ສານ, ໃນຂະນະທີ່ຢູ່ແຂວງອັດຕະປືພຽງແຕ່ໜຶ່ງໃນ47ກໍລະນີ[a]. ສຳລັບກໍລະນີທີ່ຫຼາຍກວ່າ70%ຖືກດຳເນີນຄະດີຢູ່ໃນແຂວງອັດຕະປືເອງການລົງໂທດທີ່ກຳນົດຂຶ້ນແມ່ນການເຕືອນ ຫຼືການອົບຮົມຄືນ.

ອີງຕາມຂໍ້ມູນຂ່າວສານທີ່ປາກົດຢູ່ໃນສື່ຂອງລາວ ເຈົ້າໜ້າທີ່ກ່ຽວກັບສໍ້ລາດບັງຫຼວງຖືກຕັດສິນວ່າຜິດສຳລັບການສົມຮູ້ຮ່ວມຄິດກັບນັກຂຸດຄົ້ນໄມ້ແລະພໍ່ຄ້າໄມ້ທີ່ຜິດກົດໝາຍ ໂດຍປົກກະຕິແລ້ວຮັບໂທດທີ່ເບົາຫຼາຍຢ່າງໜ້ອຍກໍໄດ້ເວົ້າ.

ດັ່ງຕົວຢ່າງອີງຕາມໜັງສືພິມເສດຖະກິດສັງຄົມໃນເດືອນພຶດສະພາປີ2015 ຄະນະກຳມະການກວດສອບແຂວງຫົວພັນປີ2012. ການສືບສວນບັນດາກໍລະນີສໍ້ລາດບັງຫຼວງທາງລາຊະການ.[118]. ອີງຕາມຮອງຫົວໜ້າພະແນກກວດກາແຫ່ງລັດຂັ້ນແຂວງ, ທ່ານວົງຈັນ ເຮືອງຄຳແພງ, "ແຂວງຫົວພັນຕໍ່ສູ້ຕ້ານການສໍ້ລາດບັງຫຼວງຢ່າງເຂັ້ມຂົ້ນແລະການປະຕິບັດວຽກອັນໜັກໜ່ວງນີ້ໄດ້ຮັບຜົນດີ".ເຈົ້າໜ້າທີ່ສໍ້ລາດບັງຫຼວງ90 ຄົນທີ່ມີສ່ວນຮ່ວມໃນການສໍ້ໂກງໃນລະຫວ່າງປີ 2005 ແລະ 2010 ໄດ້ຮັບການລົງໂທດລວມທັງເຈົ້າໜ້າທີ່ຈາກຫ້ອງການກະສິກຳ ແລະ ປ່າໄມ້ແຂວງ (PAFO)ແລະຫ້ອງການອຸດສາຫະກຳແລະການຄ້າແຂວງ(POIC)ເຊິ່ງ "ຮ່ວມກັນກັບຜູ້ປະກອບການທຸລະກິດດ້ານໄມ້ທ່ອນແລະປະຊາຊົນໃນທ້ອງຖິ່ນຂຸດຄົ້ນໄມ້ [ໄມ້ທີ່ມີມູນຄ່າສູງ]ຢ່າງຜິດກົດໝາຍເພື່ອລັກລອບຂາຍໃຫ້ກັບຜູ້ຊື້ໃນປະເທດເພື່ອນບ້ານ". ຢ່າງໃດກໍຕາມການລົງໂທດເບິ່ງຄືວ່າບໍ່ສົມສ່ວນກັບຄວາມຮຸນແຮງຂອງຂໍ້ຫາຕໍ່ເຈົ້າໜ້າທີ່ສໍ້ລາດບັງຫຼວງ: *"ຜູ້ລະເມີດຈາກພະແນກກະສິກຳແລະປ່າໄມ້ຖືກມອບໝາຍຮັບຜິດຊອບໜ້າວຽກອື່ນທີ່ບໍ່ກ່ຽວຂ້ອງກັບວຽກງານຄຸ້ມຄອງປ່າໄມ້, ໃນຂະນະທີ່ ເຈົ້າໜ້າທີ່ອີກຄົນໜຶ່ງທີ່ຢູ່ພະແນກອຸດສາຫະກຳແລະການຄ້າມີຄຳສັ່ງຖອນຄືນທຶນການສຶກສາລະດັບສູງຂອງລາວ "(?!)*

ດັ່ງນັ້ນພວກເຮົາສາມາດສະຫຼຸບໄດ້ວ່າ ວຽກງານກວດກາປ່າໄມ້ແຫ່ງລັດ (ແລະຄືງເໝືອນກັບໜ່ວຍງານບັງຄັບໃຊ້ກົດໝາຍແຫ່ງລັດລາວອື່ນໆທີ່ມີໜ້າທີ່ຮັບຜິດຊອບຕໍ່ສູ້ກັບການຂຸດຄົ້ນໄມ້ທີ່ຜິດກົດໝາຍ) ບໍ່ສ້າງຜົນກະທົບທີ່ສຳຄັນໃດໆກ່ຽວກັບການປ່ຽນແປງແລະຂອບເຂດຂອງອາຊະຍາກຳນີ້.

ແລະປັດໃຈຕົ້ນຕໍທີ່ກຳນົດມາດຕາສ່ວນຂອງການຂຸດຄົ້ນໄມ້ຢ່າງຜິດກົດໝາຍໃນລາວຍັງເຫຼືອຢູ່ຄື: ຄວາມຕ້ອງການໃນຕະຫຼາດສາກົນແລະຕົ້ນທຶນຂອງການຂຸດຄົ້ນໄມ້ (ປັບຕົວຕາມລາຄາຂອງການສໍ້ລາດບັງຫຼວງ) .

[a]ບໍ່ມີຂໍ້ມູນສຳລັບແຂວງເຊກອງ.

## ສະຫຼຸບ

ບັນດາຜູ້ນຳຂອງລັດຖະບານແຫ່ງສປປລາວ ເຊື່ອຢ່າງມີເຫດຜົນວ່າລາຄາທີ່ສູງຂອງໄມ້ທ່ອນໃນຕະຫຼາດສາກົນແລະຄວາມຕ້ອງໄມ້ທ່ອນເພີ່ມຂຶ້ນຂອງບັນດາປະເທດເພື່ອນບ້ານແມ່ນສາເຫດຕົ້ນຕໍໃນການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນປະເທດລາວ.[119]. ຜູ້ທີ່ມີສ່ວນກ່ຽວຂ້ອງຕົ້ນຕໍຕໍ່ການຂະຫຍາຍຕົວຂອງຄວາມຕ້ອງການໄມ້ທ່ອນລາວແມ່ນບັນດາໂຮງງານປຸງແຕ່ງໄມ້ຢູ່ຫວຽດນາມ, ຈີນແລະປະເທດທີ່ມີຄວາມຕ້ອງການລະດັບໜ້ອຍກວ່າຄື ປະເທດໄທ, ເຊິ່ງໄດ້ຮັບຊື້ຫຼາຍກວ່າ90% ຂອງໄມ້ທ່ອນລາວໂດຍຄິດເປັນມູນຄ່ານັບຕັ້ງແຕ່ໃນຕົ້ນປີ 2000 (ແລະບັນລຸເຖິງ99% ໃນປີ2014). ອຸດສາຫະກຳດ້ານການປຸງແຕ່ງໄມ້ຂອງບັນດາປະເທດເຫຼົ່ານີ້ແມ່ນຂຶ້ນກັບໄມ້ທີ່ນຳເຂົ້າສູງ. ໃນປັດຈຸບັນນີ້80% ຂອງວັດຖຸດິບທີ່ສະໜອງເຂົ້າໂຮງງານປຸງແຕ່ງໄມ້ໃນຫວຽດນາມແມ່ນຖືກນຳເຂົ້າ.

ໜຶ່ງໃນສາມຂອງໄມ້ທ່ອນລາວ (ໃນດ້ານມູນຄ່າ) ຖືກສົ່ງອອກໄປຫວຽດນາມແລະໃນປັດຈຸບັນລາວໄດ້ກາຍເປັນຜູ້ສະໜອງໄມ້ກົມ ແລະໄມ້ແປຮູບໃຫ້ແກ່ຫວຽດນາມ - ໃນປີ2014 ອັດຕາສ່ວນຂອງໄມ້ທ່ອນບັນລຸເຖິງ 33% ຂອງມູນຄ່າການນຳເຂົ້າໂດຍລວມຂອງຜະລິດຕະພັນເຫຼົ່ານີ້ (30% ແລະ 34%, ຕາມຄວາມເໝາະສົມ) (ຮູບ59). ໃນດ້ານບໍລິມາດ ໄມ້ທ່ອນແລະໄມ້ແປຮູບຈາກປະເທດລາວກວມເອົາ22% ແລະ 25% ຂອງການນຳເຂົ້າຜະລິດຕະພັນເຫຼົ່ານີ້ຂອງຫວຽດນາມໂດຍລວມ.




**ຮູບ59.ການປ່ຽນແປງປະຈຳປີຂອງການນຳເຂົ້າໄມ້ທ່ອນແລະໄມ້ແປຮູບຂອງຫວຽດນາມ (ລະຫັດປະເພດໄມ້4403 ແລະ4407).**

ແຫຼ່ງຂໍ້ມູນ: ການຮວບຮວມໂດຍນຳໃຊ້ຂໍ້ມູນຈາກຖານຂໍ້ມູນສິນຄ້າສະຫະປະຊາຊາດແລະຫ້ອງການພາສີຫວຽດນາມ.[120].

ໄມ້ທ່ອນລາວໄດ້ລ້ຽງອຸດສາຫະກຳການປຸງແຕ່ງໄມ້ຂອງຫວຽດນາມ (ລວມທັງການສົ່ງອອກສ່ວນໃຫຍ່ແມ່ນເນັ້ນຜົນຜະລິດເຄື່ອງເຟີນີເຈີໄມ້) ຊຶ່ງສະແດງໃຫ້ເຫັນການເພີ່ມຂຶ້ນຢ່າງສະໝ່ຳສະເໝີນັບຕັ້ງແຕ່ກາງປີ 2000[121]. ຈາກປີ 2005 ຫາ 2011 ຈຳນວນໄມ້ທີ່ປຸງແຕ່ງຢູ່ໃນຫວຽດນາມໄດ້ເພີ່ມຂຶ້ນ 56.6% ຈາກ 2.996 ລ້ານ ເຖິງ4.692 ລ້ານແມັດກ້ອນທີ່ມີການຂະຫຍາຍຕົວຫຼາຍທີ່ສຸດຈາກປີ2010ຫາ2011 (ໃນລະຫວ່າງຊຸມປີເຫຼົ່ານີ້ ມູນຄ່າການນຳເຂົ້າໄມ້ທ່ອນລາວໂດຍຫວຽດນາມເພີ່ມຂຶ້ນເກືອບເທົ່າຕົວ).

ໃນປັດຈຸບັນ, ການສົ່ງອອກຜະລິດຕະພັນໄມ້ຖືກຈັດເປັນອັນດັບທີ່ຫ້າໃນບັນດາອຸດສາຫະກຳການສົ່ງອອກ 10 ອັນດັບສູງສຸດຂອງປະເທດຫວຽດນາມ, ເປັນຕົວຊີ້ວັດທີ່ດີຕໍ່ຄວາມສຳຄັນຂອງຂະແໜງນີ້ສຳລັບເສດຖະກິດຂອງຫວຽດນາມ[122].

ຈາກປີ 2005 ຫາ 2014 ມູນຄ່າໂດຍລວມຂອງການສົ່ງອອກຜະລິດຕະພັນໄມ້ຂອງຫວຽດນາມ (ມູນຄ່າຂອງເຟີນີເຈີທີ່ສົ່ງອອກກວມເອົາ 66-80%) ເກືອບມີມູນຄ່າເຖິງ6.2 ພັນລ້ານໂດລາສະຫະລັດ.

